JICA

JICA Project for Promoting Development and Strengthening of the Rule of Law

J-ROL Phase II

# ການສຶກສາ

## ສາດແຫ່ງກົດໝາຍຂັ້ນພື້ນຖານ

## ທັກສະການຕີຄວາມກົດໝາຍ

ທະນາຍຄວາມ ອາກິທາກະ ອາຊຳໂບ

ຊ່ຽວຊານຂອງອົງການໄຈກາ (2021 – 2025)

# ການສຶກສາສາດແຫ່ງກົດໝາຍຂັ້ນພື້ນຖານ

## - ທັກສະການຕີຄວາມກົດໝາຍ -


**<u>ຂຽນໂດຍ:</u>**

ທະນາຍຄວາມ ອາກິທາກະ ອາຊຳໂບ

ຊ່ຽວຊານຂອງອົງການໄຈກາ (2021 – 2025)

**<u>ຮຽບຮຽງໂດຍ ຝ່າຍຍີ່ປຸ່ນ:</u>**

ສາດສະດາຈານ ຮິໂຣຊິ ມັດຊຸໂອະ

ຄະນະນິຕິສາດ, Law School, ມະຫາວິທະຍາໄລ KEIO

**<u>ຮຽບຮຽງໂດຍ ຝ່າຍລາວ:</u>**

ທ່ານ ວິໄຊ ສີຫາປັນຍາ

ຫົວໜ້າພາກວິຊາ ກົດໝາຍແພ່ງ

ຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ

**<u>ອອກແບບ ແລະ ຮູບພາບປະກອບໂດຍ:</u>**

ທ່ານ ດານຸພົນ ຈັນທະກຸມມານ

ພະນັກງານ ໂຄງການກົດໝາຍ J-ROL

**<u>ແປພາສາໂດຍ:</u>**

ທະນາຍຄວາມ ມະໂນເດດ ຈຸນທະວົງ

ນາຍແປພາສາ ຍີ່ປຸ່ນ

# ຄຳເຫັນ

ການຕີຄວາມກົດໝາຍ ຖືເປັນຈິດສຳນຶກພື້ນຖານສຳຄັນຂອງນັກກົດໝາຍ ທີ່ນຳໃຊ້ກົດໝາຍດັດປັບສາຍພົວພັນສັງຄົມ ເນື່ອງຈາກວ່າກົດໝາຍເປັນເອກະສານທີ່ມີຄວາມທ່ຽງຕົງເປັນລາຍລັກອັກສອນໃນຕົວມັນເອງ ທີ່ອ່ານແລ້ວເຂົ້າໃຈຄຳສັບ, ປະໂຫຍກ ຄຳເວົ້າຢ່າງງ່າຍດາຍ. ແຕ່ຈຸດປະສົງ, ເຈດຈຳນົງ ແລະ ຜົນບັງຄັບຕໍ່ສັງຄົມທີ່ຊຸກເຊື່ອງໄວ້ຢູ່ໃນກົດໝາຍແມ່ນເລິກເຊິ່ງ, ກວ້າງຂວາງ ຕ້ອງແມ່ນນັກກົດໝາຍເປັນຜູ້ຕີຄວາມ ຫຼື ຄົ້ນຄວ້າ, ພິນິດ ວິນິດໄສ ໃຫ້ລະອຽດ, ຄົບຖ້ວນ, ຊັດເຈນ ແລະ ຖືກຕ້ອງ ຈຶ່ງຈະເຮັດໃຫ້ການນຳໃຊ້ກົດໝາຍ ຖືກຕ້ອງຕາມຕົວຈິງ, ມີຜົນສັກສິດ, ປົກປ້ອງຜົນປະໂຫຍດຂອງລັດ, ສັງຄົມ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ, ຊີວິດ, ສຸຂະພາບ, ອິດສະລະພາບ ແລະ ກຽດສັກສີຂອງປະຊາຊົນ ຢ່າງແທ້ຈິງ. ການຕີຄວາມກົດໝາຍ ຕ້ອງມີພື້ນຖານຄວາມຮູ້ໃນການຕີຄວາມກົດໝາຍ, ແມ່ນຜູ້ມີຄວາມຮູ້ທາງດ້ານກົດໝາຍເລິກເຊິ່ງ, ກວ້າງຂວາງ, ຮູ້ຫຼາຍກົດໝາຍທີ່ກ່ຽວພັນ ແລະ ມີທັກສະພື້ນຖານການນຳໃຊ້ກົດໝາຍ ເພື່ອຄົ້ນຄວ້າ, ປຽບທຽບມາດຕາ, ເນື້ອໃນກົດໝາຍ ກັບເຫດການຕົວຈິງທີ່ເກີດຂຶ້ນ ໃຫ້ຈະແຈ້ງ ແລະ ຊັດເຈນ. ການຕີຄວາມກົດໝາຍໃນພາກປະຕິບັດຕົວຈິງບາງຄັ້ງຍັງຖືເບົາການຄົ້ນຄວ້າຫຼາຍກົດໝາຍທີ່ກ່ຽວພັນ, ຍັງອ່ານກົດໝາຍສະເພາະມາດຕາທີ່ກ່ຽວຂ້ອງ ຫຼື ເປັນຜົນປະໂຫຍດແກ່ຕົນເອງ, ອ່ານແຕ່ມາດຕານີ້ ແຕ່ບໍ່ອ່ານມາດຕາອື່ນ ຫຼື ອ່ານແຕ່ກົດໝາຍນີ້ ແຕ່ບໍ່ອ່ານກົດໝາຍອື່ນ ຫຼື ນິຕິກຳອື່ນທີ່ກ່ຽວຂ້ອງ ເພື່ອເປັນຂໍ້ມູນທີ່ຄົບຖ້ວນ, ຍັງມີລັກສະນະອ່ານກົດໝາຍເຂົ້າຂ້າງຕົນເອງ, ອ່ານແຕ່ສິດ ແຕ່ບໍ່ອ່ານພັນທະ ເຮັດໃຫ້ການຕີຄວາມກົດໝາຍ ບໍ່ເລິກເຊິ່ງບໍ່ຖືກຕ້ອງຕາມເຈດຈຳນົງຂອງກົດໝາຍ. ສະນັ້ນ, ການມີທັກສະການຕີຄວາມກົດໝາຍຈຶ່ງແມ່ນຄວາມຈຳເປັນ ແລະ ສຳຄັນສຳລັບນັກກົດໝາຍ ທີ່ຕ້ອງໄດ້ຮຽນຮູ້ ແລະ ສະສົມປະສົບການໃນການຕີຄວາມກົດໝາຍນັບແຕ່ເລີ່ມຕົ້ນນຳໃຊ້ກົດໝາຍ.

ຍ້ອນທັກສະການຕີຄວາມກົດໝາຍ ມີຄວາມສຳຄັນຕໍ່ນັກກົດໝາຍ, ທ່ານ ທະນາຍຄວາມ ອາກິທາກະ ອາຊຳໂບ, ຜູ້ຊ່ຽວຊານປະຈຳໂຄງການສົ່ງເສີມ ການພັດທະນາ ແລະ ສ້າງຄວາມເຂັ້ມແຂງລັດທີ່ປົກຄອງດ້ວຍກົດໝາຍໃນຂົງເຂດຍຸຕິທຳ (J-ROL) ໄດ້ຂຽນປື້ມທັກສະການຕີຄວາມກົດໝາຍນີ້ຂຶ້ນມີຈຸດປະສົງ ສັງລວມພື້ນຖານທິດສະດີ, ຫຼັກການ ແລະ ປະສົບການຕົວຈິງ ທີ່ໄດ້ປະກອບສ່ວນໃນໂຄງການຕະຫຼອດໄລຍະ 04 ປີ ມາສ້າງເປັນປື້ມ ເພື່ອເປັນຂໍ້ມູນໃນການຄົ້ນຄວ້າ, ນຳໃຊ້ເຂົ້າໃນການຕີຄວາມກົດໝາຍ. ປື້ມຫົວນີ້ ໄດ້ຍົກໃຫ້ເຫັນຄວາມສຳຄັນ, ບາດກ້າວ ແລະ ວິທີການຕີຄວາມກົດໝາຍລວມທັງຍົກກໍລະນີຕົວຢ່າງ ການຕີຄວາມບາງມາດຕາຂອງປະມວນກົດໝາຍແພ່ງ ຂອງ ສປປ ລາວ ເພື່ອໃຫ້ເຂົ້າໃຈງ່າຍ ແລະ ສາມາດນຳໃຊ້ເປັນບົດຮຽນຕົວຢ່າງການຕີຄວາມກົດໝາຍໃນມາດຕາອື່ນ.

ຂ້າພະເຈົ້າເຫັນວ່າ ປື້ມຫົວນີ້ ຈະເປັນປະໂຫຍດ ແລະ ເຄື່ອງມືສຳຄັນ ໃຫ້ນັກກົດໝາຍ ຫຼື ຜູ້ນຳໃຊ້ກົດໝາຍ ນຳໄປສຶກສາ, ຄົ້ນຄວ້າ ແລະ ໝູນໃຊ້ເຂົ້າໃນການຕີຄວາມກົດໝາຍ ຫຼື ນຳໃຊ້ກົດໝາຍໃຫ້ຖືກຕ້ອງຕາມເຈດຈຳນົງ ແລະ ຈຸດປະສົງຂອງກົດໝາຍ. ປື້ມຫົວນີ້ ໄດ້ສັງລວມເອົາຫຼັກການພື້ນຖານ ແລະ ກໍລະນີຕົວຢ່າງທີ່ງ່າຍດາຍເທົ່ານັ້ນ, ແຕ່ການຕີຄວາມກົດໝາຍ ມີຫຼາຍຫຼັກການ, ວິທີການ, ເນື້ອໃນທີ່ເລິກເຊິ່ງ, ກວ້າງຂວາງ ແລະ ສະຫຼັບ ສັບຊ້ອນ. ຈຶ່ງຮຽກຮ້ອງ ໃຫ້ສືບຕໍ່ຄົ້ນຄວ້າ ແລະ ຂຽນປື້ມກ່ຽວກັບທັກສະການຕີຄວາມກົດໝາຍຕື່ມອີກ ໃຫ້ຫຼາກຫຼາຍ ແລະ ເປັນບົດຮຽນ, ຄູ່ມືໃນການປະຕິບັດໃຫ້

ຖືກຕ້ອງຕາມເຈດຈຳນົງຂອງກົດໝາຍທີ່ກຳນົດໄວ້ ເພື່ອປົກປ້ອງສິດຜົນປະໂຫຍດ ອັນຊອບທຳຂອງ ປະຊາຊົນ.

ຂໍສະແດງຄວາມຂອບໃຈຕໍ່ ທ່ານ ທະນາຍຄວາມ ອາກິທາກະ ອາຊຳໂບ ທີ່ໄດ້ປະກອບສ່ວນວຽກ ງານຂອງໂຄງການໃນໄລຍະຜ່ານມາ ແລະ ໄດ້ສັງລວມເນື້ອໃນສຳຄັນກ່ຽວກັບທັກສະການຕີຄວາມ ກົດໝາຍ ມາສ້າງເປັນປຶ້ມຝາກໄວ້ນຳໂຄງການ ກໍຄືນັກກົດໝາຍ ແລະ ຜູ້ນຳໃຊ້ກົດໝາຍ. ຫວັງຢ່າງຍິ່ງ ວ່າປຶ້ມຫົວນີ້ ຈະເປັນເຄື່ອງມືພື້ນຖານສຳຄັນໃນການຕີຄວາມກົດໝາຍ ແລະ ການຄົ້ນຄວ້າກົດໝາຍ ໃນຕໍ່ໜ້າ.

**ຮອງປະທານສານປະຊາຊົນສູງສຸດ**

**(ຄະນະຊີ້ນຳໂຄງການ)**

ບຸນຂວາງ ທະວີສັກ

## ຄຳເຫັນ

ປຶ້ມ "ການສຶກສາ ສາດແຫ່ງກົດໝາຍຂັ້ນພື້ນຖານ - ທັກສະການຕີຄວາມກົດໝາຍ" ໄດ້ຮັບການຂຽນຂຶ້ນໂດຍທະນາຍຄວາມ Akitaka ASAMBO, ຊ່ຽວຊານ ໂຄງການສົ່ງເສີມການພັດທະນາ ແລະ ສ້າງຄວາມເຂັ້ມແຂງລັດທີ່ປົກຄອງດ້ວຍກົດໝາຍໃນຂົງເຂດຍຸຕິທຳ (JICA Rule of Law Project) ປຶ້ມເຫຼັ້ມນີ້ຕົ້ນຕໍແມ່ນເນັ້ນໃສ່ປະມວນກົດໝາຍແພ່ງ ແລະ ເປັນສື່ການຮຽນການສອນທີ່ສຳຄັນການພິຈາລະນາເຖິງເຫດຜົນທາງດ້ານກົດໝາຍຢູ່ໃນສັງຄົມ ແລະ ວິທີທີ່ສາມາດນຳມາໃຊ້ເພື່ອຊ່ວຍແກ້ໄຂ ແລະ ສະກັດກັ້ນຄວາມຂັດແຍ່ງທີ່ເກີດຂຶ້ນໃນສັງຄົມ.

ໃນປະເທດລາວ, ປະມວນກົດໝາຍແພ່ງໄດ້ຖືກຮັບຮອງໃນປີ 2018 ແລະ ມີຜົນສັກສິດໃນປີ 2020. ເຖິງຢ່າງໃດກໍຕາມ, ກໍຍັງບໍ່ໄດ້ບັນລຸຈຸດປະສົງຂອງປະມວນກົດໝາຍແພ່ງ. ເພື່ອໃຫ້ປະມວນກົດໝາຍແພ່ງມີຄວາມໝາຍ ຈຳເປັນທີ່ປະຊາຊົນທຸກຄົນສາມາດເຂົ້າໃຈໄດ້ ລວມທັງພົນລະເມືອງລາວ ແລະ ຄົນຕ່າງປະເທດທີ່ອາໄສຢູ່ໃນລາວ ແລະ ກໍສາມາດສະກັດກັ້ນຄວາມຂັດແຍ່ງ ຫຼື ແກ້ໄຂປະກົດການຫຍໍ້ທໍ້ທີ່ເກີດຂຶ້ນຢ່າງຍຸຕິທຳ ແລະ ເປັນສິ່ງທີ່ພໍໃຈໃຫ້ກັບພາກສ່ວນທີ່ກ່ຽວຂ້ອງ. ເພື່ອປະຕິບັດສິ່ງເຫຼົ່ານີ້, ມີຄວາມຈຳເປັນຕ້ອງໄດ້ອະທິບາຍຂໍ້ກຳນົດຂອງປະມວນກົດຫມາຍແພ່ງ ເຊິ່ງຂຽນໃນຮູບແບບນາມມະທຳໃຫ້ເປັນຮູບປະທຳຢ່າງຊັດເຈນ ໂດຍສະເພາະໃນກໍລະນີຄວາມຂັດແຍ່ງສ່ວນບຸກຄົນ. ນີ້ແມ່ນຫົວຂໍ້ຫຼັກຂອງປຶ້ມເຫຼັ້ມນີ້ຄື "ການຕີຄວາມກົດໝາຍ." ເພື່ອເຮັດໃຫ້ກົດໝາຍທັງໝົດລວມທັງປະມວນກົດໝາຍແພ່ງຈະເປັນປະໂຫຍດໃນໂລກແຫ່ງຄວາມເປັນຈິງ ແລະ ເຮັດໃຫ້ປະຊາຊົນມີຄວາມລຶ້ງເຄີຍກັບກົດໝາຍ. ໃນຄວາມໝາຍນີ້, "ການຕີຄວາມກົດໝາຍແມ່ນການເຮັດໃຫ້ກົດໝາຍມີຊີວິດ."

ປຶ້ມເຫຼັ້ມນີ້ອະທິບາຍກ່ຽວກັບວິທີການຕີຄວາມກົດໝາຍໃນລັກສະນະທີ່ເຂົ້າໃຈງ່າຍ ໂດຍການນຳໃຊ້ບົດບັນຍັດຈາກປະມວນກົດໝາຍແພ່ງ ແລະ ກົດໝາຍອື່ນໆ, ພ້ອມທັງກົດລະບຽບຂອງສັງຄົມທີ່ເຮົາລຶ້ງເຄີຍ. ຜ່ານການຕີລາຄາດັ່ງກ່າວ, ບັນດາທ່ານຜູ້ອ່ານຈະສາມາດຮູ້ໄດ້ວ່າແຕ່ລະຂໍ້ກຳນົດຂອງກົດໝາຍລ້ວນແຕ່ມີຈຸດປະສົງ, ມີການພົວພັນກັບຂໍ້ກຳນົດອື່ນທີ່ເຊື່ອມເຂົ້າກັນ ແລະ ມີປະໂຫຍດຕໍ່ສັງຄົມ. ສິ່ງນີ້ຈະເຮັດໃຫ້ປະຊາຊົນມີຄວາມລຶ້ງເຄີຍກັບປະມວນກົດໝາຍແພ່ງຂອງຕົນຫຼາຍຂຶ້ນ ໂດຍຜ່ານການປັບປຸງ ແລະ ການສະເໜີບົດບັນຍັດໃໝ່ໃນອະນາຄົດ, ທັງຈະຊ່ວຍພັດທະນາປະມວນກົດໝາຍແພ່ງໃຫ້ມີຄວາມເໝາະສົມກັບປະເທດລາວ.

ຂ້າພະເຈົ້າຫວັງຢ່າງຈິງໃຈວ່າປຶ້ມເຫຼັ້ມນີ້ຈະໄດ້ຮັບການອ່ານ ແລະ ນຳໃຊ້ໂດຍປະຊາຊົນ ແລະ ຈາກຫຼາຍພາກສ່ວນທີ່ກ່ຽວຂ້ອງໃຫ້ຫຼາຍທີ່ສຸດ.


**ສາສະດາຈານ Hiroshi MATSUO**

**ມະຫາວິທະຍາໄລເຄໂອ (KEIO University)**

松尾 弘

# ສາລະບານ


1. ວັດຖຸປະສົງຂອງປຶ້ມ........................................................................................ 1

- ສັງລວມວັດຖຸປະສົງຂອງປຶ້ມ ................................................................................ 3

2. ບາດກ້າວການປະຕິບັດປະມວນກົດໝາຍແພ່ງ ແລະ ການຕີຄວາມກົດໝາຍ ........................ 4

(1) ປະມວນກົດໝາຍແພ່ງໝາຍເຖິງ ........................................................................ 4

(2) ວິທີນຳໃຊ້ປະມວນກົດໝາຍແພ່ງ ........................................................................ 4

3. ຄວາມຈຳເປັນ ແລະ ຄວາມສຳຄັນຂອງການຕີຄວາມກົດໝາຍ........................................ 9

(1) ເປັນຫຍັງຈຶ່ງຈຳເປັນຕ້ອງຕີຄວາມກົດໝາຍ ............................................................ 9

(2) ຄວາມສຳຄັນໃນທາງທັກສະຂອງການຕີຄວາມກົດໝາຍ ............................................ 10

(3) ຖ້າບໍ່ມີການຕີຄວາມກົດໝາຍ ຈະເປັນຄືແນວໃດ...................................................... 14

(4) ສະຫຼຸບ ........................................................................................................ 15

- ສັງລວມຄວາມສຳຄັນຂອງການຕີຄວາມກົດໝາຍ .................................................. 16

4. ບາດກ້າວການຕີຄວາມກົດໝາຍ (ຂັ້ນພື້ນຖານ)........................................................ 17

(1) ກ່ອນຈະຕີຄວາມກົດໝາຍ ................................................................................ 17

(2) ລຳດັບການຕີຄວາມກົດໝາຍເປັນອັນລະອຽດ ........................................................ 18

(3) STEP ①: ກວດເບິ່ງມາດຕາທີ່ເປັນເປົ້າໝາຍ (ອ່ານຕາມຕົກກະ ບໍ່ແມ່ນອ່ານແບບກວມລວມ) 19

(4) STEP ②: (ຊອກຫາ) ມາດຕາທີ່ກ່ຽວຂ້ອງ ........................................................... 21

(5) STEP ③: ວັດຖຸປະສົງ (ຂອງມາດຕາ)-ຄົ້ນຄ້ວາ (ເຈດຈຳນົງຂອງຜູ້ສ້າງກົດໝາຍ) ........... 22

- ສັງລວມບາດກ້າວຂອງການຕີຄວາມກົດໝາຍ (ແຕ່ STEP ① ～ ③)..................... 24

5. ຕົວຢ່າງຂອງການຕີຄວາມກົດໝາຍ (ຕົວຢ່າງ ງ່າຍດາຍທີ່ນອກເໜືອຈາກປະມວນກົດໝາຍແພ່ງ).........................................................................................................25

(1) ກະຕິກາຂອງກິລາບານເຕະ (ການຕີຄວາມກົດໝາຍ: STEP ① ແລະ ②, ຄົ້ນຄ້ວາມາດຕາເຄົ້າ ແລະ ມາດຕາທີ່ກ່ຽວຂ້ອງ) ......................................................................... 25

- ສັງລວມບາດກ້າວຂອງການຕີຄວາມກົດໝາຍ........................................................ 32

(2) ກໍລະນີສຶກສາ: ປ້າຍຫ້າມ (ການຕີຄວາມກົດໝາຍ: STEP ③) .................................... 32

- ສັງລວມຄຳຕອບຕົວຢ່າງກ່ຽວກັບການຕີຄວາມກົດໝາຍ ........................................... 37

(3) ອະທິບາຍຕາມວັດຖຸປະສົງຂອງກົດໝາຍ ..................................................................... 37

- ສັງລວມເນື້ອໃນກ່ຽວກັບວັດຖຸປະສົງຂອງກົດໝາຍ ................................................. 38

6. ຕົວຢ່າງຂອງການຕີຄວາມກົດໝາຍ (ກໍລະນີຕົວຢ່າງປະມວນກົດໝາຍແພ່ງ) ..................... 39

7. ມ້ວນທ້າຍ ............................................................................................................. 42

- ສັງລວມເນື້ອໃນຂອງປຶ້ມ ....................................................................................... 43

ເອກະສານ ການຂຶ້ນບັນຍາຍຢູ່ ສຍຊ ຂອງ ຊ່ຽວຊານ ອາກິທາກະ ອາຊຳໂບ. ............................. 44

ຖານຂໍ້ມູນກົດໝາຍຂອງ JICA. ......................................................................................... 61

# 1. ວັດຖຸປະສົງຂອງປຶ້ມ

## (1) ທີ່ມາ

ວັດຖຸປະສົງຂອງປຶ້ມຫົວນີ້ ແມ່ນເພື່ອຍົກໃຫ້ເຫັນຄວາມສຳຄັນຂອງການຕີຄວາມກົດໝາຍ ຊຶ່ງເປັນທັກສະທີ່ສຳຄັນໃນທາງກົດໝາຍ. ແນໃສ່ເຮັດໃຫ້ຜູ້ອ່ານໄດ້ຮຽນຮູ້ວິທີການອ່ານ ແລະ ວິທີຄົ້ນຄິດກ່ຽວກັບກົດໝາຍ (ຄົ້ນຄິດກ່ຽວກັບວັດຖຸປະສົງຂອງກົດໝາຍ) ໂດຍສະເພາະປະມວນກົດໝາຍແພ່ງໃຫ້ໄດ້ຢ່າງຖືກຕ້ອງ.

ຂ້າພະເຈົ້າເປັນທະນາຍຄວາມຍີ່ປຸ່ນຊຶ່ງໄດ້ມາປະຈຳການຢູ່ສປປ ລາວ ໃນນາມເປັນຊ່ຽວຊານເພື່ອສົ່ງເສີມການພັດທະນາຂົງເຂດກົດໝາຍ ນັບແຕ່ເດືອນ ກໍລະກົດ ປີ 2021 ເປັນຕົ້ນມາ. ຊຶ່ງໃນຂະນະທີ່ຂ້າພະເຈົ້າຂຽນປຶ້ມຫົວນີ້ (ລະຫ່ວາງເດືອນ ກັນຍາ ປີ 2024 ຫາ ເດືອນ ມີນາ ປີ 2025) ແມ່ນໄດ້ປະຈຳຢູ່ນີ້ເປັນປີທີ 4 ແລ້ວ. ຕະຫຼອດໄລຍະເວລາທີ່ປະຈຳການນັ້ນ, ເມື່ອມີການແລກປ່ຽນກັບນັກຮຽນ, ນັກສຶກສາທີ່ເປັນນັກກົດໝາຍຜູ້ໜຸ່ມນ້ອຍ. ຂ້າພະເຈົ້າກໍຮູ້ສຶກໄດ້ວ່າ ຖ້າມີທັກສະການຕີຄວາມກົດໝາຍຄືດັ່ງທີ່ຈະອະທິບາຍໃນປຶ້ມຫົວນີ້ຕິດຕົວໄວ້ ກໍຄົງຈະເປັນການຍົກລະດັບການແລກປ່ຽນໃຫ້ສູງຂຶ້ນຕື່ມອີກບໍ່ຫຼາຍກໍໜ້ອຍ. ນອກນັ້ນ, ເມື່ອຍາມທີ່ພົບເຫັນວິທີການອະທິບາຍກົດໝາຍທີ່ດີ ຈາກນັກກົດໝາຍລາວ ກໍຮູ້ສຶກໄດ້ວ່ານັກກົດໝາຍຜູ້ດັ່ງກ່າວ ອາດມີທັກສະການຕີຄວາມກົດໝາຍຕິດຕົວເພິ່ນຢູ່ແລ້ວ ຫຼື ບາງເທື່ອເພິ່ນອາດຮູ້ນຳໃຊ້ວິທີການຄົ້ນຄິດຄືດັ່ງກ່າວໂດຍບໍ່ຮູ້ຕົວກໍໄດ້.

## (2) ຄວາມສຳຄັນຂອງທັກສະທາງກົດໝາຍ

ແນ່ນອນວ່າຖ້າມີທັກສະທາງກົດໝາຍຕິດຕົວ ຈາກການຜ່ານປະສົບການທີ່ຍາວນານ ໃນການເປັນນັກກົດໝາຍ ກໍຈະເປັນການດີ. ແຕ່ບໍ່ມີຫຍັງດີໄປກ່ວາ ການມີທັກສະດັ່ງກ່າວຕິດຕົວໄວ້ຕັ້ງແຕ່ຕົ້ນ. ເພາະຖ້າມີທັກສະທາງກົດໝາຍດັ່ງກ່າວໄວ້ແຕ່ຫົວທີ ໂດຍສະເພາະຕັ້ງແຕ່ຕອນເປັນນັກຮຽນ-ນັກສຶກສາ ຫຼື ຕັ້ງແຕ່ຕອນເປັນນັກກົດໝາຍໜຸ່ມນ້ອຍຢູ່ ກໍຈະເຮັດໃຫ້ສາມາດເຂົ້າໃຈກົດໝາຍໄດ້ຢ່າງເລິກຊຶ່ງຂຶ້ນຕື່ມອີກ. ທັງເຮັດໃຫ້ການໂຕ້ຖຽງທາງທິດສະດີເກັ່ງຂຶ້ນກ່ວາເກົ່າແລະ ເປັນການຍົກສູງຄວາມສາມາດໃນການອະທິບາຍບັນຫາໄດ້ດີຂຶ້ນຕື່ມ. ນອກນັ້ນ, ມັນຍັງສົ່ງຜົນດີຕໍ່ກັບວຽກງານຂົງເຂດລະດັບສູງກ່ວາ ເປັນຕົ້ນການຕໍ່ລອງທາງກົດໝາຍ, ການຂຽນຄຳຕັດສິນ ກໍຄືການຂຽນຄຳຖະແຫຼງ ຊຶ່ງເປັນທັກສະການຮ່າງເອກະສານທາງກົດໝາຍອີກດ້ວຍ.

ໃນປຶ້ມຫົວນີ້ ຈະຍົກເອົາ「ການຕີຄວາມກົດໝາຍ」ຊຶ່ງເປັນອັນພື້ນຖານ ແລະ ສຳຄັນທີ່ສຸດໃນບັນດາທັກສະທາງກົດໝາຍ ມາຂຽນອະທິບາຍແບບກະທັດຮັດ ແນໃສ່ເປົ້າໝາຍຜູ້ອ່ານທີ່ຫາກໍຮຽນຂັ້ນ

ເລີ່ມຕົ້ນ. ຊຶ່ງຜ່ານມາຢູ່ໃນລາວເຫັນວ່າ ຍັງບໍ່ມີຕຳລາທີ່ອະທິບາຍໂດຍລົງລາຍລະອຽດເນື້ອຫາຄືແນວນີ້ມາກ່ອນ. ເມື່ອບໍ່ມີປື້ມຕຳລາ ກໍຖືວ່າບໍ່ຄ່ອຍມີໂອກາດທີ່ຈະໄດ້ຮຽນຮູ້ທັກສະທີ່ຈຳເປັນຄືດັ່ງທີ່ກ່າວມາຂ້າງເທິງ. ຊຶ່ງຖືວ່າໜ້າເສຍດາຍສຳລັບນັກສຶກສາ ຫຼື ນັກກົດໝາຍທີ່ຢາກຄົ້ນຄ້ວາລົງເລິກໃນບັນຫານີ້.

ຍ້ອນແນວນັ້ນ, ຈຶ່ງຢາກໃຫ້ບັນດານັກຮຽນ-ນັກສຶກສາ ທີ່ຫາກໍເລີ່ມຮຽນກົດໝາຍ, ນັກກົດໝາຍຜູ້ໜຸ່ມນ້ອຍ ກໍຄືພະນັກງານໃໝ່ຂອງອົງການຈັດຕັ້ງຂົງເຂດກົດໝາຍ ໄດ້ອ່ານປື້ມຫົວນີ້ໄດ້ໄວເທົ່າໃດຍິ່ງດີ ເພື່ອໃຫ້ເຂົາເຈົ້າສາມາດນຳເອົາໄປໝູນໃຊ້ໄດ້ໂດຍໄວ. ນອກນັ້ນ, ຂ້າພະເຈົ້າຄິດວ່າຈະເປັນປະໂຫຍດໃຫ້ແກ່ນັກກົດໝາຍໄວກາງຄົນເຊັ່ນກັນ ເພື່ອໃຫ້ເຂົາເຈົ້າໄດ້ທົບທວນຄືນທັກສະທາງກົດໝາຍທີ່ເປັນພື້ນຖານ ພ້ອມທັງຈະເປັນປະໂຫຍດສຳລັບການນຳໃຊ້ເຂົ້າໃນວຽກງານຂອງຜູ້ທີ່ບໍ່ທັນໄດ້ນຳໃຊ້ທັກສະທາງກົດໝາຍດັ່ງກ່າວນັ້ນເຊັ່ນກັນ.

### (3) ການສະໜອງຂໍ້ມູນຄວາມຮູ້ຂອງຍີ່ປຸ່ນ

ຈຸດເລີ່ມຕົ້ນໃນການຂຽນປື້ມຫົວນີ້ ແມ່ນມາຈາກການທີ່ໂຄງການສົ່ງເສີມການພັດທະນາ ແລະ ສ້າງຄວາມເຂັ້ມແຂງ ລັດທີ່ປົກຄອງດ້ວຍກົດໝາຍໃນຂົງເຂດຍຸຕິທຳ (ໄລຍະ 2) ຂອງອົງການໄຈກາ ທີ່ຂ້າພະເຈົ້າປະຈຳການຢູ່ ໄດ້ມີໂອກາດເຊື້ອເຊີນເອົາບັນດາອາຈານຊື່ດັງຂອງຍີ່ປຸ່ນ ເຊັ່ນ ຂົງເຂດກົດໝາຍອາຍາແມ່ນ ສາດສະດາຈານ ມາໂກໂຕະ ອິດະ ແລະ ຂົງເຂດກົດໝາຍແພ່ງແມ່ນ ສາດສະດາຈານ ຮິໂຣຊິ ມັດສຶໂອະ ມາບັນຍາຍຢູ່ທີ່ ສປປ ລາວ. ຊຶ່ງໃນຕອນນັ້ນແມ່ນໄດ້ຈັດກອງປະຊຸມສຳມະນາຮ່ວມຂົງເຂດແພ່ງ-ອາຍາ ວ່າດ້ວຍ “ການຮຽນຮູ້ທັກສະທາງກົດໝາຍແບບມືອາຊີບ” ໂດຍມີບັນດາທ່ານຈາກພາກສ່ວນສານ, ອົງການໄອຍະການ, ກະຊວງຍຸຕິທຳ, ມະຫາວິທະຍາໄລແຫ່ງຊາດ ພ້ອມທັງຈາກສະພາທະນາຍ ຄວາມເຂົ້າຮ່ວມ. ຊຶ່ງກໍໄດ້ຮ່ວມກັນຄົ້ນຄ້ວາທັກສະທາງກົດໝາຍທີ່ສຳຄັນໜຶ່ງ ໃນນັ້ນກໍຄືການຕີຄວາມກົດໝາຍ.

ໃນກອງປະຊຸມດັ່ງກ່າວນັກສຳມະນາກອນກໍໄດ້ຮັບຂໍ້ມູນຄວາມຮູ້ທີ່ສຳຄັນຫຼາຍຢ່າງຈາກອາຈານຍີ່ປຸ່ນ. ສະນັ້ນ, ຂ້າພະເຈົ້າ ຈຶ່ງຢາກທ້ອນໂຮມເອົາບັນຫາທີ່ເພິ່ນເນັ້ນໜັກ ໂດຍສະເພາະແມ່ນບັນຫາໃນຂົງເຂດກົດໝາຍແພ່ງ ມາຂຽນເພື່ອເປັນການສົ່ງຕໍ່ຄວາມຮູ້ດັ່ງກ່າວອອກໄປໃນວົງກ້ວາງ ບໍ່ວ່າຈະເປັນຄົນໜຸ່ມນ້ອຍ, ຜູ້ທີ່ບໍ່ໄດ້ມີໂອກາດເຂົ້າຮ່ວມງານ ລວມທັງຜູ້ທີ່ຢູ່ຕ່າງແຂວງ ໃຫ້ຮັບຮູ້ໂດຍທົ່ວເຖິງກັນ. ໂດຍຈະນຳເອົາພາກສ່ວນສຳຄັນຂອງເນື້ອໃນທີ່ອາຈານທັງສອງທ່ານໄດ້ບັນຍາຍ ໃນກອງປະຊຸມສຳມະນາດັ່ງກ່າວມາອະທິບາຍແບບກະທັດຮັດລົງໃນປື້ມຫົວນີ້, ແນໃສ່ນັກອ່ານທີ່ຫາກໍເລີ່ມເຂົ້າສູ່ການຮຽນຮູ້ທັກສະທາງກົດໝາຍ. ສະນັ້ນ, ຈຶ່ງຢາກຖືໂອກາດນີ້ ສະແດງຄວາມຮູ້ບຸນຄຸນຕໍ່ອາຈານທັງສອງທ່ານ ທີ່ສ້າງແຮງບັນດານໃຈໃຫ້ຂ້າພະເຈົ້າຂຽນປື້ມຫົວນີ້.

**(4) ຈະນຳໃຊ້ການຕີຄວາມກົດໝາຍຄືແນວໃດ**

ສິ່ງສຳຄັນສຳລັບປຶ້ມຫົວນີ້ ບໍ່ແມ່ນການທ່ອງຈຳເອົາເນື້ອໃນທີ່ຂຽນໃນປຶ້ມ. ແຕ່ຫາກແມ່ນການທຳຄວາມເຂົ້າໃຈວິທີຄິດທີ່ເປັນທັກສະທາງກົດໝາຍ ວ່າຈະມີການຕີຄວາມກົດໝາຍໄດ້ຄືແນວໃດ ແລະ ຫວັງເປັນຢ່າງຍິ່ງວ່າຜູ້ອ່ານຈະສາມາດນຳໃຊ້ການຕີຄວາມກົດໝາຍຊຶ່ງເປັນທັກສະທາງກົດໝາຍນີ້ບໍ່ສະເພາະແຕ່ໃນກໍລະນີສຶກສາ ທີ່ຂຽນໃນປຶ້ມຫົວນີ້ເທົ່ານັ້ນ ແຕ່ໃຫ້ນຳໃຊ້ໄດ້ກັບກໍລະນີສຶກສາອື່ນ ຫຼື ມາດຕາອື່ນຂອງກົດໝາຍໄດ້ເຊັ່ນກັນ.




- **ສັງລວມວັດຖຸປະສົງຂອງປຶ້ມ**

ໃຫ້ຄວາມຮູ້ທີ່ເປັນເຕັກນິກ ເພື່ອໃຫ້ສາມາດມີທັກສະການຕີຄວາມກົດໝາຍຊຶ່ງສຳຄັນ ສຳລັບການເຕີບໂຕໃນຖານະນັກກົດໝາຍຕິດຕົວໄດ້ໂດຍໄວ.

ອະທິບາຍບາດກ້າວການຄົ້ນຄິດໃນການຕີຄວາມກົດໝາຍ ໃຫ້ເຂົ້າໃຈງ່າຍສຳລັບນັກຮຽນຮູ້ຂັ້ນເລີ່ມຕົ້ນ.

## 2. ບາດກ້າວການປະຕິບັດປະມວນກົດໝາຍແພ່ງ ແລະ ການຕີຄວາມກົດໝາຍ

ເພື່ອຮຽນຮູ້ກ່ຽວກັບການຕີຄວາມກົດໝາຍ ເຮົາລອງມາເບິ່ງວ່າ ຢູ່ໃນການແກ້ໄຂຂໍ້ຂັດແຍ່ງ ແມ່ນໄດ້ມີການນຳໃຊ້ທັກສະການຕີຄວາມກົດໝາຍຄືແນວໃດ ໂດຍຈະຍົກເອົາປະມວນກົດໝາຍແພ່ງຊຶ່ງເປັນ ກົດໝາຍພື້ນຖານຂອງລັດມາປະກອບການອະທິບາຍ.

### (1) ປະມວນກົດໝາຍແພ່ງໝາຍເຖິງ

ປະມວນກົດໝາຍແພ່ງ ແມ່ນກົດໝາຍພື້ນຖານທີ່ສຳຄັນຂອງລັດ ຊຶ່ງເປັນບັນທັດຖານເພື່ອແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບບັນຫາຕ່າງໆ ທີ່ເກີດຂຶ້ນຢູ່ໃນສັງຄົມ ທີ່ປະຊາຊົນດຳລົງຊີວິດຢູ່. ເມື່ອປະມວນກົດໝາຍແພ່ງຖືກຈັດຕັ້ງປະຕິບັດຢ່າງຖືກຕ້ອງ, ມີການແກ້ໄຂຂໍ້ຂັດແຍ່ງທີ່ສະເໝີພາບ ແລະ ເປັນທຳ ໂດຍປະຕິບັດຕາມຂໍ້ກຳນົດຂອງກົດໝາຍດັ່ງກ່າວແລ້ວ, ພວກເຮົາກໍຈະມີຄວາມໝັ້ນໃຈໃນການໃຊ້ຊີວິດຢູ່ໃນສັງຄົມ ທັງສາມາດດຳເນີນຊີວິດຄອບຄົວ ແລະ ດຳເນີນທຸລະກຳຕ່າງໆໄດ້ຢ່າງສະດວກ. ນອກນັ້ນ, ບັນດາຜູ້ປະກອບການທັງພາຍໃນ ແລະ ຕ່າງປະເທດ ຕ່າງກໍມີຄວາມເຊື່ອໝັ້ນໃນການລົງທຶນ ຫຼື ການເປີດດຳເນີນກິດຈະການຂອງເຂົາເຈົ້າ. ຊຶ່ງຈະເປັນການຊຸກຍູ້ການພັດທະນາເສດຖະກິດສັງຄົມໄປພ້ອມ.

ຍ້ອນປະມວນກົດໝາຍແພ່ງ ມີຄວາມສຳຄັນຄືແນວນີ້, ສະນັ້ນ, ເຮົາລອງມາທົບທວນເບິ່ງວິທີນຳໃຊ້ທີ່ເປັນພື້ນຖານນຳກັນ. ໃຫ້ບັນດາທ່ານລອງຄົ້ນຄິດໄປຕາມກໍລະນີສຶກສາຕໍ່ໄປນີ້.

### (2) ວິທີນຳໃຊ້ປະມວນກົດໝາຍແພ່ງ

**(ກໍລະນີຕົວຢ່າງ)**

ໃນວັນທີ 1 ພະຈິກ, X (ຜູ້ຊື້) ໄດ້ຊື້ເຂົ້າໜຽວຈຳນວນ 100 kg ຈາກ Y (ຜູ້ຂາຍ) ແລະ ໄດ້ຊຳລະໂດຍໄດ້ສັນຍາກັນວ່າໃຫ້ສົ່ງມາເຮືອນ X ໃນວັນທີ 2 ພະຈິກ. ແຕ່ຈົນຮອດວັນທີ 3 ພະຈິກ ແລ້ວ, ເຂົ້າໜຽວກໍຍັງບໍ່ທັນສົ່ງມາຮອດເທື່ອ. ສະນັ້ນ, X ຈຶ່ງຄິດຢາກຂໍຍົກເລີກສັນຍາກັບ Y ແລ້ວໃຫ້ສົ່ງຄືນເງິນທີ່ໄດ້ຈ່າຍໄປ.




ເພື່ອໃຫ້ສົ່ງຄືນເງິນທີ່ໄດ້ຈ່າຍໄປຕາມການຕົກລົງນັ້ນ, X ຈໍາເປັນຕ້ອງໄດ້ຍົກເລີກສັນຍາສາກ່ອນ. ໃນກໍລະນີດັ່ງກ່າວ X ສາມາດຍົກເລີກສັນຍາຊື້-ຂາຍເຂົ້າໜຽວກັບ Y ໄດ້ ຫຼື ບໍ່? ໃນຕອນນີ້, ແມ່ນຕ້ອງໄດ້ຄິດເບິ່ງວ່າຕ້ອງມີເງື່ອນໄຂຄືແນວໃດແດ່ ຈຶ່ງຈະຍົກເລີກສັນຍາດັ່ງກ່າວໄດ້.

ໃນກໍລະນີນີ້, ໂດຍທົ່ວໄປແລ້ວສໍາລັບນັກກົດໝາຍ ແມ່ນຈະມີແລວທາງໃນການຄົ້ນຄ້ວາຄື ① ~ ③ ດັ່ງລຸ່ມນີ້:

### ① ກວດເບິ່ງໜັງສືສັນຍາ (ຫຼື ເນື້ອໃນຂອງການຕົກລົງ)

ກໍລະນີມີການເຮັດໜັງສືສັນຍາ ເພື່ອເປັນການກຽມການໃນກໍລະນີມີບັນຫາເກີດຂຶ້ນນັ້ນ, ສ່ວນຫຼາຍແມ່ນມັກມີການກໍານົດເນື້ອໃນໄວ້ກ່ອນວ່າ ຈະສາມາດຍົກເລີກໄດ້ໃນກໍລະນີໃດແດ່ ແລະ ໂດຍທົ່ວໄປ, ເມື່ອມີຂໍ້ຂັດແຍ່ງເກີດຂຶ້ນ X ແລະ Y ກໍຈະກວດຄືນໜັງສືສັນຍາທີ່ເຮັດຂຶ້ນນໍາກັນ (ກໍລະນີບໍ່ມີໜັງສືສັນຍາ ກໍຈະກວດເນື້ອໃນການຕົກລົງລະຫ່ວາງຄູ່ກໍລະນີດ້ວຍກັນ). ໃນນັ້ນ ຖ້າມີເນື້ອໃນທີ່ກໍານົດໄວ້ວ່າ X ສາມາດຍົກເລີກສັນຍາໄດ້ນັ້ນ, ກໍຈະອ້າງອີງຕາມເນື້ອໃນດັ່ງກ່າວໃນການຍົກເລີກສັນຍາ.

ຖ້າກໍລະນີບໍ່ມີໜັງສືສັນຍາ ຫຼື ບໍ່ມີການຕົກລົງກ່ຽວກັບການຍົກເລີກສັນຍາທີ່ກຳນົດຢູ່ໃນໜັງສືສັນຍາເດ ຈະເຮັດຄືແນວໃດ?

## ② ກວດເບິ່ງປະມວນກົດໝາຍແພ່ງ

ປະມວນກົດໝາຍແພ່ງ ໄດ້ກຳນົດກົດທີ່ເປັນພື້ນຖານ ເພື່ອກຽມຮັບມືກັບກໍລະນີຂໍ້ຂັດແຍ່ງແນວນີ້.

ໂດຍປົກກະຕິແລ້ວ ມະນຸດເຮົາມີຄວາມທະນົງຕົວຂອງໃຜມັນຢູ່ແລ້ວ. ສະນັ້ນ, ຖ້າຫາກປ່ອຍໄປຕາມທຳມະຊາດກໍມັກມີບັນຫາປາໃຫຍ່ກິນປານ້ອຍເກີດຂຶ້ນໃນສັງຄົມໄດ້ງ່າຍ. ກົດໝາຍ ມີໄວ້ເພື່ອໃຫ້ບັນລຸວັດຖຸປະສົງໃນການຮັກສາຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ[1] (ທີ່ສຳນຶກພາບໄດ່ງ່າຍກໍຄື ສຳລັບປະມວນກົດໝາຍອາຍາ ແມ່ນການພະຍາຍາມສະກັດກັ້ນຕໍ່ໄພອັນຕະລາຍໃນສັງຄົມ)[2].

ຍົກຕົວຢ່າງໃນກໍລະນີຂອງສັນຍາ, ສາຍພົວພັນການຄ້າ-ຂາຍ ທີ່ດຳເນີນຢູ່ໃນການເຄື່ອນໄຫວຂົງເຂດເສດຖະກິດຢູ່ໃນສັງຄົມ ແມ່ນມີຄວາມຊັບຊ້ອນຫຼາຍ ແລະ ບົດບາດຂອງກົດໝາຍແພ່ງ ຈຶ່ງແມ່ນການສ້າງລະບຽບການທາງກົດໝາຍ ໂດຍການປັບເອົາອັນທີ່ຊັບຊ້ອນນັ້ນໃຫ້ລຽບງ່າຍຂຶ້ນ ເພື່ອໃຫ້ສາມາດເຮັດທຸລະກຳໄດ້. ລະບຽບການດັ່ງກ່າວແມ່ນໄດ້ຖືກກຳນົດຂຶ້ນມາໂດຍຄຳນຶງເຖິງການເຮັດທຸລະກຳໃນສັງຄົມໃຫ້ມີສະຖຽນລະພາບ[3] ຍ້ອນມີກົນໄກດັ່ງກ່າວ ເຖິງວ່າບໍ່ມີຂໍ້ກຳນົດຢູ່ໃນໜັງສືສັນຍາກໍຕາມ, ທຸກຄົນກໍສາມາດເຊື່ອໝັ້ນທີ່ຈະເຮັດທຸລະກຳຕ່າງໆນຳກັນຢ່າງມີສະຖຽນລະພາບ.

ສະນັ້ນ, ໃນກໍລະນີບໍ່ມີໜັງສືສັນຍາ ຫຼື ໃນໜັງສືສັນຍາບໍ່ມີເນື້ອໃນກ່ຽວກັບການຍົກເລີກກຳນົດໄວ້ນັ້ນ, ຕ້ອງໄດ້ຄົ້ນຄ້ວາເບິ່ງວ່າ ຈະສາມາດຍົກເລີກໂດຍອີງຕາມກົດໝາຍ ກໍຄືປະມວນກົດໝາຍແພ່ງໄດ້ບໍ?

ສຳລັບນັກຮຽນ-ນັກສຶກສາ ແມ່ນຢາກໃຫ້ຝຶກໃຫ້ມີນິໄສໃນການກວດເບິ່ງມາດຕາຂອງປະມວນກົດໝາຍແພ່ງດ້ວຍຕົນເອງ. ເພາະສຳລັບນັກກົດໝາຍມືອາຊີບແລ້ວ ບໍ່ວ່າຈະເປັນການແລກປ່ຽນໃນ

---

[1] ສາດສະດາຈານ ອາກິຣະ ມິກາຊຸກິ 『ສາດແຫ່ງກົດໝາຍພາກເລີ່ມຕົ້ນ』 ໜ້າ 5 (KOUBUNDOU Publishers Inc, ປີ 1982).

[2] ອ້າງອີງຈາກປຶ້ມຂອງ ສາດສະດາຈານ ມາໂກໂຕະ ອິດະ 『ບັນຍາຍສາດແຫ່ງກົດໝາຍອາຍາ-ພາກທົ່ວໄປ (ພິມຄັ້ງທີ 2)』 ໜ້າ 17 (Yuhikaku Publishing Co., Ltd, ປີ 2018). ອີງຕາມບົດຂຽນຂອງອາຈານ ເຫັນວ່າ: ເຫດຜົນຂອງການມີຢູ່ຂອງກົດໝາຍອາຍາ ແລະ ໜ້າທີ່ຂອງກົດໝາຍອາຍາ ແມ່ນຂຶ້ນກັບການລົງໂທດທາງອາຍາ ພາຍໃຕ້ກອບຂອງການລົງໂທດຕໍ່ຄວາມຜິດທີ່ໄດ້ກໍຂຶ້ນ. ທັງນີ້ແມ່ນເພື່ອເປັນການສະກັດກັ້ນການລະເມີດຜົນປະໂຫຍດທາງກົດໝາຍ ຫຼື ສະກັດກັ້ນໄພອັນຕະລາຍທີ່ຈະເກີດຂຶ້ນໃນພາຍໜ້າ.

[3] ສາດສະດາຈານ ທາກາຊິ ອຸຈິດະ 『ສາດແຫ່ງກົດໝາຍພາກເລີ່ມຕົ້ນ ສຳລັບນັກຮຽນຊັ້ນ ມ.ປາຍ』 ໜ້າ 146-148 (Shinzansha Publisher Co.,Ltd, ປີ 2022).

ບັນຫາໃດກໍຕາມ, ແມ່ນຕ້ອງເລີ່ມຕົ້ນດ້ວຍມາດຕາກົດໝາຍສະເໝີ[4]. ຖ້າມີແຕ່ລໍຖ້າຄູອາຈານບອກມາດຕາມາແລ້ວຈຶ່ງເບິ່ງ ກໍບໍ່ມີວັນທີ່ຈະສາມາດພັດທະນາທັກສະໃນການຊອກມາດຕາທີ່ຈຳເປັນ ແລະ ທັກສະໃນການອ່ານເນື້ອໃນມາດຕາດັ່ງກ່າວໄດ້.

ສະນັ້ນ, ເວລາເບິ່ງປະມວນກົດໝາຍແພ່ງ ກ່ຽວກັບສັນຍາຊື້-ຂາຍ (ປະມວນກົດໝາຍແພ່ງ ມ.406) ກໍຈະພົບວ່າມີມາດຕາທີ່ກຳນົດການຍົກເລີກໃນກໍລະນີທີ່ມີການບໍ່ປະຕິບັດສັນຍາ (ປະມວນກົດໝາຍແພ່ງ ມ.395 ວັກ 1). ຊຶ່ງເນື້ອໃນຂອງມາດຕາດັ່ງກ່າວມີຄືດັ່ງລຸ່ມນີ້.

(ປະມວນກົດໝາຍແພ່ງ ມ.395 ວັກ 1)

ໃນກໍລະນີມີການລະເມີດເນື້ອໃນສຳຄັນຂອງສັນຍາ, ຄູ່ສັນຍາຝ່າຍທີ່ໄດ້ຮັບຄວາມອັບປະໂຫຍດຈະຍົກເລີກສັນຍາແຕ່ຝ່າຍດຽວກໍໄດ້ (ຂໍຕັດເນື້ອໃນສ່ວນທີ່ເຫຼືອ).

ສຳລັບນັກສຶກສາທີ່ຫາກໍເລີ່ມຮຽນໃໝ່, ເນື້ອຫາຕໍ່ໄປນີ້ອາດຈະຍາກພໍສົມຄວນ, ສະນັ້ນຕອນອ່ານຄັ້ງທຳອິດ ຂໍໃຫ້ກຳພາບລວມໃຫ້ໄດ້ກໍພໍແລ້ວ. ເພາະສຳລັບວິທີການອ່ານມາດຕາ ແມ່ນຕ້ອງເອົາໃຈໃສ່ກວດກາຄຳສັບທີ່ຂຽນແຕ່ລະອັນຢ່າງລະອຽດ.

ເມື່ອເຮົາເບິ່ງຂໍ້ກຳນົດມາດຕາຢ່າງລະອຽດກໍຈະເຫັນເພິ່ນກຳນົດໄວ້ວ່າ ໃນກໍລະນີມີການລະເມີດກ່ຽວກັບ ❶「ເນື້ອໃນສຳຄັນຂອງສັນຍາ」, ແມ່ນ ❷「ຈະຍົກເລີກສັນຍາແຕ່ພຽງຝ່າຍດຽວກໍໄດ້」(ກົດໝາຍທີ່ຂຽນແນວນີ້ ໝາຍຄວາມວ່າ ກົດໝາຍກຳນົດໄວ້ວ່າ: ຖ້າມີ ❶ ແມ່ນຈະເຮັດ ❷ ໄດ້. ໝາຍວ່າເອົາ ❶ **ເປັນເງື່ອນໄຂທາງກົດໝາຍ** ສ່ວນ ❷ **ເປັນຜົນສະທ້ອນທາງກົດໝາຍ** ).

ຢູ່ໃນມາດຕາກົດໝາຍ, ເມື່ອຄົບເງື່ອນໄຂໃນ ❶ ເທົ່ານັ້ນ, ຈຶ່ງພາໃຫ້ເກີດ ❷ ທີ່ເປັນຜົນທາງກົດໝາຍ. ກົງກັນຂ້າມຖ້າບໍ່ມີເງື່ອນໄຂໃນ ❶ , ກໍຈະບໍ່ພາໃຫ້ເກີດມີ ❷ ທີ່ເປັນຜົນທາງກົດໝາຍ.

ສະນັ້ນ, ສຳລັບກໍລະນີສຶກສາກ່ອນໜ້ານີ້, ການທີ່ X ຈະຍົກເລີກ (ສັນຍາ) ໄດ້ນັ້ນ, ອີງຕາມປະມວນກົດໝາຍແພ່ງມາດຕາ 395 ວັກ 1 ແລ້ວ, ໃນການບໍ່ປະຕິບັດສັນຍາຂອງ Y ຖ້າມີການລະເມີດກ່ຽວກັບ ❶「ເນື້ອໃນສຳຄັນຂອງສັນຍາ」, ກໍຈະເກີດ ❷ ຄືຍົກເລີກສັນຍາໄດ້.

[4] ສາດສະດາຈານ ທາກາຊິ ອຸຈິດະ『ກົດໝາຍແພ່ງ 1 ພາກບົດບັນຍັດທົ່ວໄປ-ສິດຕໍ່ຊັບພາກທົ່ວໄປ (ພິມຄັ້ງທີ 4)』ໜ້າ 4 (The University of Tokyo Press (UTP), ປີ 2008).

### ③ ການຕີຄວາມກົດໝາຍ

ຈະເຫັນໄດ້ວ່າສາມາດແກ້ໄຂບັນຫາໄດ້ຄືຂ້າງເທິງ ແລະ ສັງເກດໄດ້ວ່າແຕ່ລະປະໂຫຍກຂອງມາດຕາກົດໝາຍ ແມ່ນມີຄວາມສຳຄັນຫຼາຍ. ບາດນີ້, ລອງເບິ່ງວ່າຖ້າ Y ສົ່ງເຂົ້າໜຽວຊ້າພຽງແຕ່ 1 ວັນ ແມ່ນຈະສາມາດເວົ້າໄດ້ບໍ່ວ່າ ເປັນການລະເມີດ「ເນື້ອໃນສຳຄັນຂອງສັນຍາ」(ປະມວນແພ່ງ ມ.395 ວັກ 1). ເຮົາມາເບິ່ງນຳກັນວ່າ「ເນື້ອໃນສຳຄັນ」ແມ່ນມີຄວາມໝາຍຄືແນວໃດ.

ໃນນີ້, ຄວາມ「ສຳຄັນ」ສຳລັບ X ແລະ ສຳລັບ Y ອາດເປັນສິ່ງທີ່ແຕກຕ່າງກັນກໍໄດ້ ແລະ ເມື່ອເບິ່ງໃນສາມັນສຳນຶກທົ່ວໄປຂອງການຄ້າຂາຍເຂົ້າໜຽວໃນສັງຄົມໂດຍລວມແລ້ວ, ກໍອາດມີຄຳເຫັນທີ່ແຕກຕ່າງກັນໄປອີກ ເຊັ່ນ ເງິນຄ່າເຂົ້າໜຽວ, ກຳນົດການປະຕິບັດ, ບ່ອນສົ່ງ ລວມທັງຄຸນນະພາບ ຕ່າງກໍສາມາດເປັນສິ່ງສຳຄັນໄດ້ເຊັ່ນກັນ. ນອກນັ້ນ ບາງຄົນກໍອາດໃສ່ໃຈນຳຄຸນຄ່າຂອງຍີ່ຫໍ້ ເຊັ່ນ ການຫຸ້ມຫໍ່ ກໍຄືພາບລັກທີ່ສວຍງາມ, ການມີໃບຮັບປະກັນຄຸນນະພາບ ແລະ ອື່ນໆ. ນອກນັ້ນ, ຄວາມສຳຄັນສຳລັບສັນຍາຊື້-ຂາຍ ກັບ ສັນຍາເຊົ່າ ກໍອາດມີຄວາມແຕກຕ່າງກັນ ຫຼື ອາດຂຶ້ນກັບວ່າ ເຮັດທຸລະກຳກ່ຽວກັບຊັບໃດ.

ເມື່ອເປັນແນວນັ້ນ, ຖ້າເບິ່ງແຕ່ມາດຕາກົດໝາຍຢ່າງດຽວ ກໍອາດບໍ່ສາມາດເຂົ້າໃຈໄດ້ທັນທີວ່າ「ເນື້ອໃນສຳຄັນຂອງສັນຍາ」ແມ່ນກ່ຽວກັບຫຍັງແທ້. ໃນນີ້, ຖ້າທຸກຄົນເວົ້າຄວາມເຫັນຂອງຕົນອອກມາຢ່າງເສລີ ກໍອາດກາຍເປັນການຕັດສິນບັນຫາຕາມອຳເພີໃຈ ຊຶ່ງສາມາດນຳໄປສູ່ຜົນທີ່ຕ່າງກັນໄດ້. (ອາດເວົ້າໄປໃນທາງໃດກໍໄດ້ເຊັ່ນ ຄິດວ່າ Y ເຮັດບໍ່ຖືກ ຈຶ່ງເຫັນດີໃຫ້ຍົກເລີກສັນຍາ ຫຼື ເຫັນວ່າບໍ່ສາມາດຍົກເລີກໄດ້ເພາະ X ໃຈຮ້ອນເກີນໄປ).

ສະນັ້ນ, ຈຶ່ງຈຳເປັນຕ້ອງມີກົດເກນໃດໜຶ່ງທີ່ກຳນົດກ່ຽວກັບວິທີອ່ານກົດໝາຍ. ຊຶ່ງສຳລັບວິທີການດັ່ງກ່າວນັ້ນ ຈະຂໍອະທິບາຍຕາມພາຍຫຼັງ.

## 3. ຄວາມຈຳເປັນ ແລະ ຄວາມສຳຄັນຂອງການຕີຄວາມກົດໝາຍ

### (1) ເປັນຫຍັງຈຶ່ງຈຳເປັນຕ້ອງຕີຄວາມກົດໝາຍ

ດັ່ງທີ່ກ່າວມາຂ້າງເທິງ ການຕີຄວາມກົດໝາຍຖືເປັນທັກສະທາງກົດໝາຍທີ່ຈຳເປັນ ໃນເວລາທີ່ຕ້ອງນຳໃຊ້ກົດ ໝາຍເພື່ອແກ້ໄຂຂໍ້ຂັດແຍ່ງໃດໜຶ່ງ ຫຼື ເມື່ອຕ້ອງການອ່ານກົດໝາຍໃຫ້ເລິກເຊິ່ງ. ຊຶ່ງໃນນີ້ແມ່ນບໍ່ສະເພາະແຕ່ປະມວນກົດໝາຍແພ່ງຢ່າງດຽວ ຈະມີປະມວນກົດໝາຍອາຍາ ຫຼື ກົດໝາຍອື່ນໆ ລວມທັງກົດກະຕິກາຕ່າງໆ (ກະຕິກາບານເຕະກໍເຊັ່ນກັນ) ກໍຍັງຖືວ່າເປັນທັກສະທີ່ສຳຄັນເຊັ່ນກັນ. ຖ້າເປັນດັ່ງນັ້ນ, ເປັນຫຍັງມັນຈຶ່ງມີຄວາມສຳຄັນ.

ປະມວນກົດໝາຍແພ່ງ ເປັນກົດກະຕິກາພື້ນຖານຂອງສັງຄົມ, ບໍ່ຕ່າງຫຍັງກັບກະຕິກາໃນການຫຼິ້ນເກມ ຫຼື ການຫຼິ້ນກິລາ ກໍລ້ວນແລ້ວຕ້ອງໄດ້ຮຽນຮູ້ກົດກະຕິກາພື້ນຖານ. ແຕ່ວ່າໃນສັງຄົມທີ່ມີຄວາມຊັບຊ້ອນມັນອາດຈະແຕກຕ່າງຈາກເກມ, ເນື່ອງຈາກການທີ່ຈະໃຫ້ກົດໝາຍກຳນົດທຸກເຫດການໄວ້ລ່ວງໜ້າຢ່າງຖືກຕ້ອງນັ້ນ ໃນຄວາມເປັນຈິງແມ່ນເປັນໄປບໍ່ໄດ້. [5]ການທີ່ເກີດເຫດການບໍ່ຄາດຝັນຂຶ້ນ ກໍເປັນສິ່ງທີ່ພົບພໍ້ໄດ້ເຊັ່ນກັນ. ສະນັ້ນ, ໃນຂໍ້ຂັດແຍ່ງຕົວຈິງ ມັນກໍມີຄວາມເປັນໄປໄດ້ທີ່ກົດໝາຍບໍ່ໄດ້ກຳນົດເຫດການທີ່ສຳຄັນດັ່ງກ່າວໄວ້.

ສົມມຸດຖ້າມີມາດຕາທີ່ກຳນົດວ່າ「ການລ່າຊ້າພຽງ 1 ວັນ ກໍສາມາດຍົກເລີກໄດ້」ຈະເປັນແນວໃດ. ພຽງແຕ່ຈ່າຍຄ່າເຊົ່າເຮືອນ ຫຼື ອາຄານ ຊ້າແຕ່ 1 ມື້ ສັນຍາເຊົ່າເຮືອນ ຫຼື ອາຄານກໍຈະຖືກຍົກເລີກ ແລະ ສະມາຊິກຄອບຄົວທັງໝົດກໍຈະຖືກໄລ່ອອກຈາກເຮືອນ ຫຼື ອາຄານເຊົ່າ, ແບບນີ້ຄົງຈະສ້າງບັນຫາຫຼາຍ (ຖ້າເປັນແນວນັ້ນແລ້ວ ຍັງຈະໃຊ້ກົດ ໝາຍເພື່ອບັງຄັບໃຫ້ຍົກເລີກ ສັງຄົມກໍຄົງຈະບໍ່ມີສະຖຽນລະພາບ ແລະແມ່ນໃຜກໍຄົງຈະບໍ່ເຊື່ອກົດໝາຍອີກຕໍ່ໄປ). ແຕ່ສຳລັບກໍລະນີຊຸດແຕ່ງງານທີ່ຫຼູຫຼາ ຫຼື ເຄັກແຕ່ງງານກ້ອນໃຫຍ່ສົ່ງມາບໍ່ທັນຕາມມື້ກຳນົດການຈັດງານລ້ຽງນັ້ນ, ເຖິງຈະຫຼ້າຊ້າພຽງແຕ່ 1 ວັນກໍຕາມ, ສິ່ງດັ່ງກ່າວຍ່ອມບໍ່ມີປະໂຫຍດອີກຕໍ່ໄປ. ໃນກໍລະນີດັ່ງກ່າວ ການຢາກຍົກເລີກສັນຍາກໍເປັນສິ່ງທີ່ເຂົ້າໃຈໄດ້.

ດ້ວຍເຫດນີ້, ໃນການເຮັດທຸລະກຳຕ່າງໆ ໃນສັງຄົມ, ຍ້ອນມີສະພາບຄວາມຈຳເປັນທີ່ແຕກຕ່າງກັນໄປ ກົດໝາຍຈຶ່ງຈົງໃຈບໍ່ຂຽນໄວ້ລະອຽດ ແຕ່ຈະກຳນົດແບບກວມລວມໄວ້. ທັງນີ້ເພື່ອເຮັດໃຫ້ເປັນກົດກະຕິກາທີ່ມີຄວາມສະຖຽນ ແລະ ໃຊ້ໄດ້ກັບທຸກຮູບແບບຂອງທຸລະກຳ. [6]ນອກຈາກນັ້ນ, ຖ້າວ່າກຳນົດ

---

[5] ສາດສະດາຈານ ທາກາຊິ ອຸຈິດະ『ກົດໝາຍແພ່ງ 1 ພາກບົດບັນຍັດທົ່ວໄປ-ສິດຕໍ່ຊັບພາກທົ່ວໄປ (ພິມຄັ້ງທີ 4)』ໜ້າ 6 (The University of Tokyo Press (UTP), ປີ 2008).

[6] ສາດສະດາຈານ ຮິໂຣໂຕະ ໂດກະອຸຈິ『Prep ກ່ອນຈະສຶກສາສາດແຫ່ງກົດໝາຍ (ພິມຄັ້ງທີ 2)』ໜ້າ 10, ໜ້າ 13 (KOUBUNDOU Publishers Inc, ປີ 2017)

ໄວ້ລະອຽດເກີນໄປ ຖ້າສັງຄົມຫາກມີການປ່ຽນແປງໄວ ມັນຈຶ່ງມີຄວາມເປັນໄປໄດ້ທີ່ກົດໝາຍຈະກາຍເປັນສິ່ງທີ່ໃຊ້ການບໍ່ໄດ້ ພາຍໃນໄລຍະເວລາອັນສັ້ນ[7](ແນ່ນອນວ່າບາງບັນຫາທີ່ກຳນົດໄດ້ລະອຽດເທົ່າໃດຍິ່ງດີນັ້ນ, ກໍມີການກຳນົດໄວ້ຢ່າງລະອຽດໄດ້ເຊັ່ນກັນ).

ສະຫຼຸບແລ້ວ, **ການທີ່ມາດຕາຂອງກົດໝາຍມີລັກສະນະນາມມະທຳ[8]ນັ້ນເປັນເລື່ອງປົກກະຕິ. ຍ້ອນແນວນັ້ນ, ກ່ອນທີ່ຈະນຳໃຊ້ມາດຕາຂອງກົດໝາຍ ນັກກົດໝາຍຈຶ່ງຈຳເປັນຕ້ອງຜັນເນື້ອໃນດັ່ງກ່າວໃຫ້ເປັນອັນທີ່ຈະແຈ້ງ ແລະ ເປັນອັນລະອຽດ (ເຮັດໃຫ້ສາມາດເຂົ້າໃຈຄວາມໝາຍ ທີ່ຂໍ້ກຳນົດນັ້ນໄດ້ງ່າຍກ່ວາເກົ່າ). [9]ອັນນີ້ແມ່ນທັກສະທາງກົດໝາຍທີ່ສຳຄັນທີ່ນັກກົດໝາຍຄວນມີ ຊຶ່ງເອີ້ນວ່າ "ທັກສະການຕີຄວາມກົດໝາຍ".**[10] ການຮຽນຮູ້ເອົາທັກສະການຕີຄວາມກົດໝາຍນີ້, ເປັນອັນກຳນົດຄວາມແຕກຕ່າງລະຫ່ວາງນັກກົດໝາຍ ກັບບຸກຄົນທີ່ບໍ່ເຄີຍຮຽນກົດໝາຍ.

### (2) ຄວາມສຳຄັນໃນທາງທັກສະຂອງການຕີຄວາມກົດໝາຍ

ການຕີຄວາມກົດໝາຍ ເປັນທັກສະເພື່ອອ່ານ, ບັງຄັບໃຊ້ ແລະ ອະທິບາຍກົດໝາຍ ໃຫ້ໄດ້ຢ່າງຖືກຕ້ອງ ແລະສອດຄ່ອງ. ດັ່ງນັ້ນ, ມັນຈຶ່ງສາມາດນຳໄປໝູນໃຊ້ໄດ້ກັບທຸກກົດໝາຍ ແລະ ບໍ່ສະເພາະແຕ່ຜູ້ພິພາກສາ ທີ່ທຳໜ້າທີ່ບັງຄັບໃຊ້ກົດໝາຍເທົ່ານັ້ນ ແຕ່ຍັງໝາຍເຖິງ ພະນັກງານໄອຍະການ, ທະນາຍຄວາມ ແລະ ພະນັກງານກະຊວງ ຫຼື ອົງການຂອງລັດ ທີ່ນຳໃຊ້ກົດໝາຍ. ລວມທັງອາຈານທີ່ສອນກົດໝາຍກໍເຊັ່ນກັນ ມັນກໍລ້ວນແລ້ວແຕ່ເປັນອັນພື້ນຖານທີ່ສຸດ. ນອກນັ້ນ, ມັນຍັງເປັນພື້ນຖານສຳລັບການຮ່າງກົດໝາຍໃນເວລາສ້າງ ຫຼື ປັບປຸງກົດໝາຍອີກດ້ວຍ.

---

[7] ສາດສະດາຈານ ໂຢຊິຮິສະ ຣາຍາກາວາ『ສາດແຫ່ງກົດໝາຍພາກເລີ່ມຕົ້ນ』ໜ້າ 58 (Yuhikaku Publishing Co., Ltd, ປີ 2016)

[8] ສາດສະດາຈານ ເຄໂຊ ຢາມາໂມໂຕະ『ບັນຍາຍກົດໝາຍແພ່ງ 1 ພາກບົດບັນຍັດທົ່ວໄປ (ພິມຄັ້ງທີ 2)』ໜ້າ 2-4 (Yuhikaku Publishing Co., Ltd, ປີ 2005)

[9] ສາດສະດາຈານ ມາໂກໂຕະ ອິດະ『ບັນທຶກການບັນຍາຍ (ການຕີຄວາມໝາຍກົດໝາຍອາຍາ ແລະ ການບັງຄັບໃຊ້ໃຫ້ປະກົດເປັນຈິງ)』ໜ້າ 23 (JICA J-ROL Project, ເດືອນ ກັນຍາ ປີ 2024) (https://drive.google.com/file/d/1z_bXj_X78d5uiOjWhKkTMPVcKg2QtUB5/view?fbclid=IwY2xjawHIee1leHRuA2FlbQIxMAABHVt0xG6a9PleI0rem2XbOAVJtYlDML8BiEvcQmh4VrX74o287X3jUHm5Kw_aem_OsfhUaMEbjMLfD71oWAdOQ , ອັບເດດຄັ້ງຫຼ້າສຸດວັນທີ 13 ເດືອນ ທັນວາ ປີ 2024) ບົດບັນທຶກການບັນຍາຍດັ່ງກ່າວ ເປັນເອກະສານບັນທຶກສະບັບພາສາລາວ ຂອງກອງປະຊຸມສຳມະນາທີ່ຈັດຂຶ້ນຢູ່ ສປປ ລາວ ເດືອນ 2 ປີ 2024, ຢາກໃຫ້ບັນດາທ່ານຫາໂອກາດເຂົ້າເບິ່ງເພື່ອເປັນການຮຽນຮູ້.

[10] ອ້າງອີງຈາກ ສາດສະດາຈານ ມາໂກໂຕະ ອິດະ『ບັນຍາຍສາດແຫ່ງກົດໝາຍອາຍາ-ພາກທົ່ວໄປ (ພິມຄັ້ງທີ 2)』ໜ້າ 55 (Yuhikaku Publishing Co., Ltd, ປີ 2018). ກ່ອນຈະບັງຄັບໃຊ້ຂໍ້ກຳນົດກົດໝາຍນັ້ນ, ຈຳເປັນຕ້ອງໄດ້ຕີຄວາມໝາຍຂອງກົດໝາຍ ເພື່ອເຮັດໃຫ້ຄວາມໝາຍຂອງຂໍ້ຄວາມໃນບົດບັນຍັດກົດໝາຍນັ້ນ ມີຄວາມຈະແຈ້ງຂຶ້ນ. ສຳລັບກໍລະນີປະມວນກົດໝາຍອາຍາກໍບໍ່ຕ່າງກັນ.

ຄົນສ່ວນຫຼາຍແລ້ວມັກຈະຄິດວ່າ ພຽງແຕ່ຈື່ຈໍາເນື້ອໃນຂອງທຸກກົດໝາຍໄວ້ ກໍຈະສາມາດແກ້ໄຂຂໍ້ຂັດແຍ່ງໄດ້ທັງໝົດ. ແຕ່ຢູ່ຍີ່ປຸ່ນແມ່ນເພິ່ນຖືກັນວ່າ 「ພຽງແຕ່ຈື່ຈໍາກົດໝາຍໄດ້ທັງໝົດ ກໍຍັງບໍ່ສາມາດເປັນນັກກົດໝາຍໄດ້ເທື່ອ」 ການທີ່ວ່າແນວນີ້ ກໍຍ້ອນຄືດັ່ງທີ່ກ່າວມາກ່ອນໜ້ານີ້, ໝາຍວ່າຖ້າກົດໝາຍຫາກບໍ່ໄດ້ຮັບການຕີຄວາມ, [11] ກໍຈະບໍ່ສາມາດນໍາໃຊ້ໄດ້ຄົບຖ້ວນຕາມຄວາມໝາຍທີ່ແທ້ຈິງໄດ້.

ຕົວຢ່າງ, ບັນດາທ່ານເຄີຍເຂົ້າຝຶກຍິງປືນນ້ອຍໄລເຟີ້ນບໍ່, ສໍາລັບທ່ານທີ່ເຄີຍຝຶກມາ ກໍຄົງຈະເຄີຍຖືກສອນມາວ່າ ພຽງແຕ່ແນປາກປືນອອກຫ່າງເປົ້າແຕ່ 1 mm ກໍຈະເຮັດໃຫ້ຈຸດຕົກມັນຫ່າງຈາກເປົ້າໄປຫຼາຍ. ຍ້ອນແນວນັ້ນ, ຈຶ່ງຕ້ອງໄດ້ຈັດລະບຽບຮ່າງກາຍຂອງຕົວເອງ ພ້ອມທັງຝຶກຝົນທັກສະການແນເປົ້າຢູ່ສະເໝີ. ນອກຈາກນີ້, ຍາມຫັນໃຈເຂົ້າ ຈະເຮັດໃຫ້ປອດຂະຫຍາຍຕົວ ເຮັດໃຫ້ຮ່າງກາຍຂອງເຮົາຢືດຂຶ້ນລົງ, ເພິ່ນຈຶ່ງເວົ້າວ່າເວລາຍິງປືນຕ້ອງໄດ້ກັ້ນໃຈ.

ຍ້ອນມີທັກສະພື້ນຖານຄືແນວນີ້, ຖ້າວ່າເຮົາເຂົ້າໃຈແລ້ວ ບໍ່ວ່າຈະເປັນປືນປະເທດໃດຜະລິດເຮົາກໍຈະຍິງໄດ້ໃນລະດັບໜຶ່ງ ແລະ ຖ້າໄດ້ຮັບການຝຶກຕື່ມ ກໍອາດສາມາດຍິງປືນຊະນິດອື່ນໄດ້ອີກ. ກົງກັນຂ້າມ, ຖ້າມາຍິງປືນນ້ອຍຊະນິດຕ່າງໆ ໂດຍທີ່ບໍ່ມີທັກສະໃດໆ ມາກ່ອນ, ກໍມີແຕ່ຈະເກີດຄວາມອັນຕະລາຍ ແລະ ບໍ່ມີວັນທີ່ຈະຍິງຖືກເປົ້າ.




[11] ສາດສະດາຈານ ເຄໂຊ ຢາມາໂມໂຕະ 『ບັນຍາຍກົດໝາຍແພ່ງ 1 ພາກບົດບັນຍັດທົ່ວໄປ (ພິມຄັ້ງທີ 2)』 ໜ້າ 2 (Yuhikaku Publishing Co., Ltd, ເດືອນ 4 ປີ 2005)

ທັກສະການຕີຄວາມກົດໝາຍກໍຄືກັນກັບການຍິງປືນ. ເພາະເຖິງຈະຈື່ຈຳກົດໝາຍໄດ້ຫຼາຍປານໃດກໍຕາມ, ຖ້າບໍ່ຮູ້ຈັກການຕີຄວາມເຊິ່ງເປັນວິທີອ່ານກົດໝາຍທີ່ຖືກຕ້ອງແລ້ວ, ກໍຈະເປັນການນຳໃຊ້ກົດໝາຍໂດຍການຄາດເດົາຢ່າງດຽວ ແລະ ກໍບໍ່ສາມາດນຳໃຊ້ກົດໝາຍໄດ້ຢ່າງຊຳນານ. ກົງກັນ ຂ້າມຖ້າຫາກເຂົ້າໃຈພື້ນຖານຂອງການຕີຄວາມກົດໝາຍແລ້ວ, ບໍ່ສະເພາະແຕ່ປະມວນກົດໝາຍແພ່ງຢ່າງດຽວ ແຕ່ຍັງລວມເຖິງປະມວນກົດໝາຍອາຍາ, ກົດໝາຍອື່ນທັງໝົດ ລວມເຖິງກົດໝາຍຂອງຕ່າງປະເທດ ກໍຈະສາມາດນຳໃຊ້ໄດ້ເຊັ່ນກັນ ຂໍແຕ່ມີຄວາມພະຍາຍາມ.

ວ່າກັນວ່າ「ທັກສະໃນການເປັນນັກກົດໝາຍ ອົງປະກອບທີ່ສຳຄັນແມ່ນການຈື່ຈຳບັນດາຂໍ້ມູນຄວາມຮູ້ຕ່າງໆໄດ້ຢ່າງເປັນລະບົບ」.[13]ເຊິ່ງການເນັ້ນໜັກຄືແນວນີ້ ແມ່ນໝາຍຄວາມວ່າບໍ່ໄດ້ມີແຕ່ທັກສະການຕີຄວາມກົດໝາຍພຽງຢ່າງດຽວ. ແຕ່ເຖິງເປັນແນວນັ້ນກໍຕາມ ການຕີຄວາມກົດໝາຍກໍຍັງເປັນທັກສະພື້ນຖານ ເພື່ອຈະທຳຄວາມເຂົ້າໃຈກົດໝາຍໃຫ້ໄດ້ຢ່າງເປັນລະບົບ.

ຖ້າຍົກຕົວຢ່າງໃຫ້ເຫັນພາບກໍຄື, ບໍ່ແມ່ນຈະທ່ອງຈຳເອົາແຕ່ເນື້ອໃນກົດໝາຍພຽງຢ່າງດຽວ ແຕ່ຕ້ອງເຂົ້າໃຈນຳວ່າ ມາດຕາດັ່ງກ່າວມີວັດຖຸປະສົງຄືແນວໃດ, ມີຄວາມກ່ຽວພັນກັບມາດຕາອື່ນຄືແນວໃດ ແລະ ໃນທາງທິດສະດີກົດໝາຍແມ່ນມັນເປັນໄປຄືແນວໃດ. ຖ້າເຂົ້າໃຈໄດ້ຄືແນວນີ້ ກໍຈະເຮັດໃຫ້ສາມາດນຳໃຊ້ຄວາມຮູ້ທີ່ມີໄດ້ຢ່າງຄົບຖ້ວນ.

ທີ່ເປັນແນວນີ້ກໍເພາະວ່າ, ແຕ່ລະມາດຕາຂອງກົດໝາຍແມ່ນບໍ່ໄດ້ຖືກສ້າງຂຶ້ນມາຕາມອຳເພີໃຈ, ແຕ່ມາດຕາກົດໝາຍເຫຼົ່ານັ້ນຖືກສ້າງຂຶ້ນມາຢ່າງເປັນລະບົບ ເພື່ອໃຫ້ຕົວກົດໝາຍດັ່ງກ່າວສາມາດບັນລຸວັດຖຸປະສົງທີ່ແນ່ນອນໃດໜຶ່ງ. ສະນັ້ນ, ການອ່ານເພື່ອຖອດເອົາໃຈຄວາມຂອງມາດຕາເຫຼົ່ານີ້ ຈຶ່ງເອີ້ນວ່າການຕີຄວາມກົດໝາຍ.

**ຕົວຢ່າງ ເພື່ອວັດຖຸປະສົງລວມຂອງປະມວນກົດໝາຍແພ່ງ (ປະມວນກົດໝາຍແພ່ງ ມ.1) ກໍຄືການຮັບປະກັນຄວາມສະເໝີພາບ, ຄວາມຍຸຕິທຳ ກໍຄືການພັດທະນາເສດຖະກິດ-ສັງຄົມນັ້ນ, ເຫັນວ່າຈະເປັນສິ່ງທີ່ດີ ຖ້າຜູ້ຖືກເສຍຫາຍຈາກການຕົວະຍົວະຫຼອກລວງໄດ້ຮັບການປົກປ້ອງ. ສະນັ້ນ, ມາດຕາຕ່າງໆທີ່ກ່ຽວຂ້ອງກັບບັນຫານີ້ ຈຶ່ງຖືກສ້າງຂຶ້ນມາເພື່ອວັດຖຸປະສົງດັ່ງກ່າວ (ປະມວນກົດໝາຍແພ່ງ ມ.19 ,**

[13] ສາດສະດາຈານ ທາກາຊິ ອຸຈິດະ『ສາດແຫ່ງກົດໝາຍພາກເລີ່ມຕົ້ນ ສຳລັບນັກຮຽນຊັ້ນມ.ປາຍ』ໜ້າ 150 (Shinzansha Publisher Co.,Ltd, ປີ 2022).

ມ.24 ແລະ ອື່ນໆ) ແລະ ນິຕິກຳ (ເຊັ່ນ: ສັນຍາຊື້-ຂາຍ) ທີ່ເຮັດຂຶ້ນດ້ວຍການຕົວະຍົວະຫຼອກລວງ ຈຶ່ງເປັນໂມຄະ.

ແຕ່ເນື່ອງຈາກມາດຕາດັ່ງກ່າວເປັນຂໍ້ກຳນົດເພື່ອແນໃສ່ປົກປ້ອງຜູ້ຖືກຕົວະຍົວະຫຼອກລວງ. ສະນັ້ນ, ຖ້າບຸກຄົນດັ່ງກ່າວຫາກບໍ່ຮຽກຮ້ອງເອົາການປົກປ້ອງ ນິຕິກຳດັ່ງກ່າວກໍບໍ່ຈຳເປັນຕ້ອງເປັນໂມຄະ. ກໍລະນີຜູ້ຖືກຕົວະຍົວະຫຼອກລວງຫາກຮັບຮອງເອົານິຕິກຳທີ່ມີການຕົວະຍົວະຫຼອກລວງນັ້ນ (ເຊັ່ນ: ບອກວ່າສັນຍາ ຊື້-ຂາຍດັ່ງກ່າວ ບໍ່ມີບັນຫາຫຍັງ), ນິຕິກຳດັ່ງກ່າວກໍຈະຖືວ່າມີຜົນ (ປະມວນກົດໝາຍແພ່ງ ມ.24 ວັກ 2).

ກົງກັນຂ້າມ, ສຳລັບນິຕິກຳໃດທີ່ສິ່ງຜົນກະທົບກັບຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແມ່ນເປັນໂມຄະເດັດຂາດ ເຊິ່ງບຸກຄົນດັ່ງກ່າວ ແມ່ນບໍ່ສາມາດຮັບຮອງເອົາໄດ້ (ປະມວນກົດໝາຍແພ່ງ ມ.23 ວັກ 2). ທີ່ໃຫ້ເປັນແບບນີ້ກໍຍ້ອນວ່າມັນຂັດກັບວັດຖຸປະສົງໂດຍລວມຂອງປະມວນກົດໝາຍແພ່ງ.

ປະເດັນທີ່ກ່າວມາຂ້າງເທິງນີ້, ຈະມີຄວາມສອດຄ່ອງກັນກັບວັດຖຸປະສົງຂອງກົດໝາຍທັງໝົດ, ແລະ ຈະເຫັນໄດ້ວ່າມັນມີຄວາມສອດຄ່ອງກັນທັງໃນບັນດາມາດຕາດ້ວຍກັນ ແລະ ໃນທາງທິດສະດີອີກດ້ວຍ.

ດັ່ງທີ່ເຂົ້າໃຈໄດ້ຈາກຕົວຢ່າງຂ້າງເທິງ, ໂດຍພື້ນຖານແລ້ວມາດຕາໃດໜຶ່ງມັນຈະສອດຄ່ອງກັບມາດຕາອື່ນ ແລະ ມາດຕາແຕ່ລະມາດຕານັ້ນ ຈະມີວັດຖຸປະສົງສະເພາະຂອງມັນ. ການອ່ານທຳຄວາມເຂົ້າໃຈຢ່າງຖືກຕ້ອງໃນເນື້ອໃນດັ່ງກ່າວ ຈຶ່ງແມ່ນການຕີຄວາມກົດໝາຍ.

ຍ້ອນແນວນັ້ນ, ເພື່ອໃຫ້ໄດ້ມາເຊິ່ງຄວາມຮູ້ທາງກົດໝາຍທີ່ຖືກຕ້ອງ (ເພື່ອໃຫ້ສາມາດເຂົ້າໃຈຢ່າງຖືກຕ້ອງຕາມວັດຖຸປະສົງຂອງມາດຕາ, ເພື່ອໃຫ້ສາມາດນຳໃຊ້ມາດຕາໄດ້ຢ່າງຖືກຕ້ອງ ແລະ ແທດເໝາະ, ເພື່ອໃຫ້ສາມາດນຳໃຊ້ມາດຕາໂດຍສອດຄ່ອງກັບມາດຕາອື່ນ ແລະ ເພື່ອໃຫ້ສາມາດສອນ ຫຼື ອະທິບາຍໃຫ້ບຸກຄົນອື່ນໄດ້ຢ່າງຊັດເຈນ) ນັ້ນ, ສິ່ງທີ່ຂາດບໍ່ໄດ້ແມ່ນການອ່ານທຳຄວາມເຂົ້າໃຈມາດຕາກົດໝາຍຢ່າງຖືກຕ້ອງດ້ວຍການຕີຄວາມກົດໝາຍ ໂດຍທີ່ບໍ່ແມ່ນການເລົ່າເພື່ອຖ່ອງຈຳ.

ຍ້ອນເວົ້າໄດ້ວ່າການຕີຄວາມກົດໝາຍ ເປັນເງື່ອນໄຂພື້ນຖານເພື່ອການທຳຄວາມເຂົ້າໃຈກົດໝາຍ. ດັ່ງນັ້ນ, ສຳລັບທ່ານທີ່ອ່ານປຶ້ມຫົວນີ້, ຂ້າພະເຈົ້າຄິດວ່າສິ່ງສຳຄັນທີ່ສຸດ ແມ່ນການຮຽນຮູ້ເອົາ

ທັກສະທາງກົດໝາຍດັ່ງກ່າວນີ້ຕິດຕົວໄວ້ໂດຍໄວເທົ່າໃດຍິ່ງດີ ແລະ ໃນການຮຽນ ຫຼື ໃນການເຮັດວຽກກໍໃຫ້ຄໍານຶງເຖິງບັນຫານີ້ຢູ່ສະເໝີ.

**(3) ຖ້າບໍ່ມີການຕີຄວາມກົດໝາຍ ຈະເປັນຄືແນວໃດ**

ຄໍາວ່າກົດໝາຍ ບໍ່ວ່າແມ່ນໃຜເປັນຜູ້ມີສິດຕັດສິນກໍຕາມ ຖ້າບໍ່ມີແລວທາງ ທີ່ນໍາໄປສູ່ຂໍ້ສະຫຼຸບທີ່ໃກ້ຄຽງກັນໃນລະດັບໃດໜຶ່ງແລ້ວ, ມັນຈະພາໃຫ້ເກີດຜົນໄດ້ຮັບ ທີ່ບໍ່ມີຄວາມຍຸຕິທໍາ ເພາະປ່ຽນໄປຕາມກາລະໂອກາດ, ແຕ່ການຮັບປະກັນຄວາມຍຸຕິທໍາ ແມ່ນເປັນໜຶ່ງໃນພາລະບົດບາດທີ່ສໍາຄັນຂອງກົດໝາຍ[14].

ແຕ່ໃນກໍລະນີການພິຈາລະນາຄະດີ ຖ້າຜູ້ພິພາກສາ, ພະນັກງານໄອຍະການ ແລະ ທະນາຍຄວາມ ຫາກຕັດສິນບັນຫາໄປຕາມໃຈຕົນແລ້ວ, ເຖິງຈະເປັນມາດຕາດຽວກັນກໍຕາມ ຜົນຂອງມັນຍ່ອມແຕກຕ່າງກັນໄປ (ຕົວຢ່າງຄໍາວ່າ「ເນື້ອໃນສໍາຄັນຂອງສັນຍາ」ທີ່ອະທິບາຍກ່ອນໜ້ານີ້, ຄັນໄປປຶກສານໍາທະນາຍຄວາມແຕ່ລະຄົນ ກໍອາດໄດ້ຄໍາຕອບທີ່ແຕກຕ່າງກັນໄປເລີຍກໍເປັນໄດ້) ແລະ ມັນຈະກາຍເປັນການນໍາໃຊ້ກົດໝາຍທີ່ບໍ່ຄືງທີ່, ເຮັດໃຫ້ຄວາມໝາຍຄວາມສໍາຄັນຂອງກົດໝາຍຕໍ່ສັງຄົມນັ້ນຂາດຫາຍໄປ.

ກົງກັນຂ້າມ, ຖ້ານັກກົດໝາຍທຸກຄົນຫາກມີທັກສະໃນການຕີຄວາມກົດໝາຍເດ ຈະເປັນແນວໃດ. ເຖິງວ່າການຕີຄວາມກົດໝາຍ ຈະຂຶ້ນກັບມຸມມອງການເບິ່ງບັນຫາຂອງຜູ້ອ່ານກົດໝາຍໃນລະດັບໜຶ່ງກໍຕາມ, ແຕ່ເຂົາເຈົ້າກໍຈະປະຕິບັດຕາມກະຕິກາໃນລະດັບທີ່ແນ່ນອນໃດໜຶ່ງ ຊຶ່ງຈະບໍ່ເປັນການເບິ່ງບັນຫາແບບເອົາແຕ່ໃຈຕົນເອງ ແລະ ຂໍ້ສະຫຼຸບຂອງບັນຫາດັ່ງກ່າວ ກໍຈະບໍ່ອອກນອກແລວ (ບໍ່ຖືກດຶງອອກໄປ) ຈາກທີ່ກົດໝາຍຄາດການໄວ້.

[14] ສາດສະດາຈານ ໂຢຊິຮິສະ ຣາຢາກາວາ『ສາດແຫ່ງກົດໝາຍພາກເລີ່ມຕົ້ນ』ໜ້າ 26 (Yuhikaku Publishing Co., Ltd, ປີ 2016)

## ຂອບເຂດ
## ຂອງການຕີຄວາມກົດໝາຍ




ເມື່ອເປັນແນວນັ້ນ, ເຖິງວ່າຈະເປັນມາດຕາທີ່ຫາກໍເຫັນທໍາອິດກໍຕາມ, ນັກກົດໝາຍທຸກຄົນກໍຈະມີຂໍ້ສະຫຼຸບທີ່ໄປໃນທິດທາດດຽວກັນ (ຫຼື ໃກ້ຄຽງກັນ). ແນ່ນອນວ່າ, ອີງຕາມທັດສະນະການເບິ່ງບັນຫາຄວາມເປັນທໍາ ຂອງຜູ້ຕີຄວາມແຕ່ລະຄົນອາດເຮັດໃຫ້ມີແນວຄວາມຄິດ A , ແນວຄວາມຄິດ B ຫຼື ແນວຄວາມຄິດ C ທີ່ແຕກຕ່າງກັນອອກມາກໍເປັນໄດ້, ຊຶ່ງເມື່ອເປັນແບບນີ້ ກໍຕ້ອງໄດ້ຜ່ານການແລກປ່ຽນທາງທິດສະດີກັນວ່າ ອັນໃດແທດເໝາະ ຫຼື ອັນໃດມີຕັກກະກ່ວາກັນ ພາຍໃຕ້ຂອບຂອງການຕີຄວາມກົດໝາຍ. ສຸດທ້າຍກໍຈະມີແນວຄວາມຄິດໃດໜຶ່ງໃນນັ້ນ ທີ່ສັງຄົມສ່ວນຫຼາຍຍອມຮັບ.

### (4) ສະຫຼຸບ

ໃນການແກ້ໄຂຄະດີ ການທີ່ມີຄໍາເຫັນຫຼາກຫຼາຍຖືເປັນການດີ, ແຕ່ເພື່ອຮັບປະກັນຄວາມຍຸຕິທໍາ ແລະ ສະຖຽນລະພາບຢູ່ໃນສັງຄົມນັ້ນ,  ໃນຖານະນັກກົດໝາຍ ການທີ່ມີຂໍ້ສະຫຼຸບໄປໃນທິດທາງໃດໜຶ່ງທີ່ເປັນເອກະພາບກັນ ກໍເປັນສິ່ງທີ່ສໍາຄັນເຊັ່ນກັນ. ສະນັ້ນ, ການຕີຄວາມກົດໝາຍໂດຍວິທີການດັ່ງກ່າວ

ເປັນທັກສະທີ່ສຳຄັນຫຼາຍສຳລັບນັກກົດໝາຍປະຕິບັດ. ສຳລັບນັກສຶກສາ ທີ່ຮຽນກົດໝາຍ, ການຮຽນຮູ້ໄວ້ທັງໝົດແຕ່ຫົວທີ ແລ້ວທົດລອງຕີຄວາມກົດໝາຍເບິ່ງ ຖືວ່າເປັນການເປີດໂອກາດໃນການຮັບເອົາທັກສະດັ່ງກ່າວ.

ສຳລັບຜູ້ທີ່ຫາກໍເຫັນວິທີການນີ້ເປັນຄັ້ງທຳອິດ ອາດຮູ້ສຶກວ່າຍາກແດ່ ແຕ່ຂັ້ນຕອນໃນການຄິດຕົວຈິງແລ້ວແມ່ນບໍ່ໄດ້ຊັບຊ້ອນເກີນໄປ. ເນື້ອໃນຖັດຈາກນີ້ ຈະເປັນການເຂົ້າສູ່ການອະທິບາຍວິທີການຕີຄວາມກົດໝາຍ. ສະນັ້ນ, ຢາກໃຫ້ທຸກຄົນພະຍາຍາມຕິດຕາມໄປນຳກັນ.

- **ສັງລວມຄວາມສຳຄັນຂອງການຕີຄວາມກົດໝາຍ**

ເນື່ອງຈາກກົດໝາຍເປັນສິ່ງທີ່ມີລັກສະນະນາມມະທຳ ສະນັ້ນ, ຈຶ່ງຈຳເປັນຕ້ອງໄດ້ຮັບການອະທິບາຍໂດຍນັກກົດໝາຍ.

ການອ່ານກົດໝາຍ ບໍ່ແມ່ນອ່ານແບບຕາມແຕ່ໃຈຕົນເອງ ແຕ່ອ່ານໃຫ້ໄດ້ເນື້ອໃນທີ່ຖືກຕ້ອງ ແລະ ສອດຄ່ອງ (ມັນຈະເຮັດໃຫ້ການພິຈາລະນາບັນຫາທາງກົດໝາຍ ມີຄວາມເປັນເອກະພາບກັນ).

ບໍ່ວ່າຈະເປັນກົດໝາຍໃດກໍຕາມ ມັນຈະມີພື້ນຖານເພື່ອເຮັດໃຫ້ສາມາດນຳໃຊ້ໄດ້ຢ່າງຄົບຖ້ວນ.

## 4. ບາດກ້າວການຕີຄວາມກົດໝາຍ (ຂັ້ນພື້ນຖານ)

### (1) ກ່ອນຈະຕີຄວາມກົດໝາຍ

ໃນປື້ມຫົວນີ້ ແມ່ນຈະອະທິບາຍແບບກະທັດຮັດ ເພື່ອໃຫ້ເຂົ້າໃຈວິທີຕີຄວາມກົດໝາຍໄດ້ງ່າຍ ແນໃສ່ຜູ້ທີ່ຫາກໍຮຽນຮູ້ການຕີຄວາມກົດໝາຍ.

ດັ່ງນັ້ນ, ເນື້ອຫາອາດຈະເບິ່ງຄືງ່າຍເກີນໄປສໍາລັບຜູ້ທີ່ມີທັກສະການຕີຄວາມກົດໝາຍຕິດຕົວຢູ່ແລ້ວ ແລະ ອາດຄິດວ່າ ສິ່ງທີ່ຂຽນຢູ່ແມ່ນເຮັດໃຫ້ງ່າຍດາຍເກີນໄປ. ແຕ່ຖ້າຫາກຮຽນເນື້ອໃນທີ່ຊັບຊ້ອນຫຼາຍເກີນໄປແຕ່ຫົວທີ ກໍອາດເຮັດໃຫ້ຜູ້ອ່ານທໍ້ໃຈ, ຈຶ່ງເປັນເຫດຜົນທີ່ເຮັດໃຫ້ງ່າຍດາຍໄວ້ກ່ອນ (ນອກຈາກນັ້ນ, ສໍາລັບການຕີຄວາມຕາມວັດຖຸປະສົງຂອງກົດໝາຍທີ່ຈະຂຽນຕໍ່ໄປນີ້ ແມ່ນຈະຂຽນໃຫ້ໃກ້ຄຽງກັບການຕີຄວາມຕາມເຈດຈໍານົງຂອງຜູ້ສ້າງກົດໝາຍ ເພື່ອໃຫ້ເປັນທີ່ເຂົ້າໃຈໄດ້ງ່າຍໃນສັງຄົມລາວ)[15,16]. ນອກຈາກນີ້, ຍັງມີວິທີຕີຄວາມກົດໝາຍ ແລະ ແນວຄວາມຄິດແບບອື່ນອີກ. ພ້ອມກັນນັ້ນ, ໃນຮູບແບບຂອງການຕີຄວາມກົດໝາຍກໍຍັງມີຫຼາກຫຼາຍ[17,18]. ແຕ່ໃນປື້ມນີ້ຈະບໍ່ໄດ້ກ່າວເຖິງ (ອີກທັງການຕີຄວາມກົດໝາຍນີ້ ແມ່ນບໍ່ສະເພາະແຕ່ປະມວນກົດໝາຍແພ່ງ ແຕ່ປະມວນກົດໝາຍອາຍາ ກໍຍັງມີການຕີຄວາມ ແລະ ກົດໝາຍອື່ນ[19]ກໍເຮັດຄືກັນ).

ເພີ່ມຕື່ມກໍຄື, ຢູ່ໃນລັດຖະທໍາມະນູນແຫ່ງ ສປປ ລາວ ແມ່ນໄດ້ກໍານົດໄວ້ວ່າ ຄະນະປະຈໍາຂອງສະພາແຫ່ງຊາດ ແມ່ນມີສິດອໍານາດໃນການຕີຄວາມກົດໝາຍ (ລັດຖະທໍາມະນູນ ມ.56) ແລະ ຢູ່ ສປປ ລາວ ແມ່ນບໍ່ສາມາດຕີຄວາມເນື້ອໃນທີ່ຈະເປັນລະເມີດຕໍ່ສິດອໍານາດການຕີຄວາມກົດໝາຍຂອງສະພາແຫ່ງຊາດ. ສິ່ງເຫຼົ່ານີ້ຜູ້ຂຽນແມ່ນຖືເປັນສິ່ງສໍາຄັນ.

ບົນພື້ນຖານທີ່ກ່າວມາຂ້າງເທິງ, ຕໍ່ໄປຈະອະທິບາຍທັກສະການຕີຄວາມກົດໝາຍ ໂດຍຄົ້ນຄ້ວາເປັນແຕ່ລະກໍລະນີເພື່ອນໍາໄປສູ່ຂໍ້ສະຫຼຸບ ລວມທັງອະທິບາຍເຫດຜົນໃນທາງເຕັກນິກ. ພາຍຫຼັງທີ່ມີພື້ນຖານທີ່ກ່າວມານີ້ຕິດຕົວແລ້ວ, ຂໍໃຫ້ບັນດາທ່ານກ້າວຂຶ້ນໄປຫາທິດສະດີການຕີຄວາມກົດໝາຍລະດັບສູງກວ່າ.

---

[15] Helmut Coing (ແປໂດຍ ສາດສະດາຈານ ຮິໂຣຊິ ມັດສຶໂອະ) 『ສາດແຫ່ງການຕີຄວາມກົດໝາຍ ພາກເລີ່ມຕົ້ນ』 ໜ້າ 46-60 (Keio University Press Inc, ປີ 2016)

[16] ສາດສະດາຈານ ຮິໂຣໂຕະ ໂດກະອຸຈິ 『Prep ກ່ອນຈະສຶກສາສາດແຫ່ງກົດໝາຍ (ພິມຄັ້ງທີ 2)』 ໜ້າ 41 (KOUBUNDOU Publishers Inc, ປີ 2017)

[17] ສາດສະດາຈານ ຮິໂຣຊິ ມັດສຶໂອະ 『ກົດໝາຍແພ່ງ』 ໜ້າ 6 (Keio University Press Inc, ປີ 2023)

[18] ສາດສະດາຈານ ໂຢຊິຮິສະ ຮາຢາກາວາ 『ສາດແຫ່ງກົດໝາຍພາກເລີ່ມຕົ້ນ』 ໜ້າ 71 (Yuhikaku Publishing Co., Ltd, ປີ 2016)

[19] ສາດສະດາຈານ ມາໂກໂຕະ ອິດະ 『ບັນຍາສາດແຫ່ງກົດໝາຍອາຍາ-ພາກທົ່ວໄປ (ພິມຄັ້ງທີ 2)』 ໜ້າ 57 (Yuhikaku Publishing Co., Ltd, ປີ 2018).

(2) ລຳດັບການຕີຄວາມກົດໝາຍເປັນອັນລະອຽດ

## ວິທີການຕີຄວາມກົດໝາຍ (ແນວຄິດພື້ນຖານ)

**01** ຂັ້ນຕອນທີ 1
ກວດເບິ່ງຄວາມໝາຍ ທາງດ້ານເຫດ ແລະ ຜົນຂອງມາດຕາ

**02** ຂັ້ນຕອນທີ 2
ກວດເບິ່ງຄວາມສຳພັນກັນລະຫວ່າງມາດຕາ

**03** ຂັ້ນຕອນທີ 3
ກວດເບິ່ງຈຸດປະສົງຂອງມາດຕາ ທີ່ຖືກກາດໄວ້
(ເປັນຫຍັງລັດຖະບານຈິ່ງສ້າງມາດຕາດັ່ງກ່າວຂຶ້ນມາ?)

ຂ້າພະເຈົ້າເອງຄິດວ່າ **ການຕີຄວາມກົດໝາຍ ໝາຍເຖິງ, ການຊອກຫາຄວາມໝາຍແທ້ຈິງ ທີ່ກົດໝາຍ - ມາດຕາ (ລວມທັງສັນຍາ) ຢາກບອກກ່າວ, ການນຳໄປສູ່ການແກ້ໄຂທີ່ຖືກຕ້ອງ ແລະເປັນການອະທິບາຍບັນຫາດັ່ງກ່າວມາຢ່າງສົມເຫດສົມຜົນ.**

ຊຶ່ງໃນການຕີຄວາມກົດໝາຍນັ້ນ, ສິ່ງສຳຄັນກໍຄືການດຳເນີນຕາມຂັ້ນຕອນ 3 ບາດກ້າວຕໍ່ໄປນີ້. ສຳລັບ STEP ① ແລະ ② ແມ່ນເປັນອັນທີ່ຕ້ອງເຮັດຢູ່ແລ້ວ, ແຕ່ເນື່ອງຈາກມັນມີຄວາມສຳຄັນເຊັ່ນກັນຈຶ່ງຢາກຂໍອະທິບາຍໄວ້. ສ່ວນພາກສ່ວນທີ່ສຳຄັນເປັນພິເສດຂອງການຕີຄວາມກົດໝາຍນັ້ນແມ່ນ STEP ③.

① ກວດເບິ່ງມາດຕາ (ອ່ານຕາມຕົກກະ ບໍ່ແມ່ນອ່ານແບບກວມລວມ)
② ກວດເບິ່ງມາດຕາທີ່ກ່ຽວຂ້ອງ (ຊອກຫາມາດຕາດັ່ງກ່າວ)
③ ຄົ້ນຄ້ວາ ວັດຖຸປະສົງຂອງມາດຕາ (ຫຼື ເຈດຈຳນົງຂອງຜູ້ສ້າງກົດໝາຍ)

ຕໍ່ໄປນີ້ເຮົາມາເບິ່ງໄປແຕ່ລະອັນຕາມລຳດັບ.

**(3) STEP ①: ກວດເບິ່ງມາດຕາທີ່ເປັນເປົ້າໝາຍ (ອ່ານຕາມຕົວອັກສອນ ບໍ່ແມ່ນອ່ານແບບກວມລວມ)**

ທີ່ຈິງບາດກ້າວນີ້ມັນເປັນອັນຕາຍຕົວຢູ່ແລ້ວ, ແຕ່ເວລາຖາມນັກຮຽນນັກສຶກສາ ໜ້າແປກໃຈທີ່ສ່ວນຫຼາຍແມ່ນຕອບບໍ່ໄດ້. ມາດຕາຂອງກົດໝາຍແມ່ນຖືກສ້າງຂຶ້ນໂດຍສະພາແຫ່ງຊາດ ໂດຍມີວັດຖຸປະສົງທີ່ແນ່ນອນ. ເພາະຖ້າເປັນສິ່ງບໍ່ຈຳເປັນເພິ່ນຄືຈະບໍ່ເອົາມາດຕາດັ່ງກ່າວເຂົ້າໃສ່. ໃນມາດຕາທີ່ຂຽນສັ້ນໆນັ້ນ, ແມ່ນປະກອບມີຂໍ້ຄວາມທີ່ມີເຈດຈຳນົງຂອງຜູ້ຂຽນຮ້ອຍຮຽງຢູ່ ຈຶ່ງບໍ່ຄວນອ່ານແບບກວມລວມ. ນອກຈາກນັ້ນ, ບໍ່ຄວນອ່ານແບບເໝົາເອົາຕາມຄວາມຄິດຕົນຜູ້ດຽວ.

**ຄຳແຕ່ລະຄຳ ກໍຄືແຕ່ລະປະໂຫຍກ ລ້ວນແຕ່ປະກອບມີເຈດຈຳນົງຂອງຜູ້ຂຽນ ທີ່ເປັນຜູ້ສ້າງກົດໝາຍຮ້ອຍຮຽງຢູ່ໃນນັ້ນ. ສະນັ້ນ, ໃຫ້ກວດກາເບິ່ງຄັກໆໃຫ້ເຫັນເນື້ອໃນຢ່າງສົມເຫດສົມຜົນ.**

ເພື່ອເປັນການທົດສອບ, ຂໍໃຫ້ຜູ້ອ່ານລອງຄົ້ນຄວ້າເບິ່ງກໍລະນີຕົວຢ່າງກ່ຽວກັບສັນຍາຊື້-ຂາຍ ເພື່ອນຳໃຊ້ວິທີການ ທີ່ໄດ້ອະທິບາຍມາກ່ອນໜ້າ.

**(ກໍລະນີຕົວຢ່າງ)**

ໃນວັນທີ 1 ພະຈິກ , X (ຜູ້ຊື້) ໄດ້ຊື້ເຂົ້າໜຽວຈຳນວນ 100 kg ຈາກ Y (ຜູ້ຂາຍ) ແລະ ໄດ້ຊຳລະ ໂດຍໄດ້ສັນຍາກັນວ່າໃຫ້ສົ່ງມາເຮືອນ X ໃນວັນທີ 2 ພະຈິກ. ແຕ່ຈົນຮອດວັນທີ 3 ພະຈິກແລ້ວ, ເຂົ້າ ໜຽວກໍຍັງບໍ່ທັນສົ່ງມາຮອດເທື່ອ. ສະນັ້ນ, X ຈຶ່ງຄິດຢາກຂໍຍົກເລີກສັນຍາກັບ Y ແລ້ວໃຫ້ສົ່ງຄືນເງິນທີ່ໄດ້ຈ່າຍໄປ.

ໃນກໍລະນີນີ້, X ຈະສາມາດຍົກເລີກສັນຍາຊື້-ຂາຍ ເຂົ້າໜຽວກັບ Y ໄດ້ ຫຼື ບໍ່. ລອງເບິ່ງມາດຕາທີ່ເປັນເປົ້າໝາຍ.

(ປະມວນກົດໝາຍແພ່ງ ມ.395 ວັກ 1)

ໃນກໍລະນີມີການລະເມີດເນື້ອໃນສຳຄັນຂອງສັນຍາ, ຄູ່ສັນຍາຝ່າຍທີ່ໄດ້ຮັບຄວາມອັບປະໂຫຍດຈະຍົກເລີກສັນຍາແຕ່ຝ່າຍດຽວກໍໄດ້... (ຂໍຕັດເນື້ອໃນສ່ວນທີ່ເຫຼືອ).

ເມື່ອເຮົາໄຈ້ແຍກມາດຕານີ້ ກໍຈະເຫັນໄດ້ວ່າ ມາດຕາດັ່ງກ່າວໄດ້ກຳນົດໄວ້ຄື,

**ເງື່ອນໄຂ (ໝາຍວ່າຈະຖືກຍອມຮັບໄດ້ ຕ້ອງມີອັນໃດ):** ເມື່ອມີ「ການລະເມີດ」「ເນື້ອໃນສຳຄັນຂອງສັນຍາ」

**ເຈົ້າກຳ:** 「ຄູ່ສັນຍາ」「ຝ່າຍທີ່ໄດ້ຮັບຄວາມອັບປະໂຫຍດ」ຈະໄດ້ຮັບ ～

**ຜົນສະທ້ອນ (ຈະເກີດຫຍັງຂຶ້ນ, ອັນໃດຈະຖືກຍອມຮັບ):** 「ສາມາດຍົກເລີກ」ສັນຍາ「ແຕ່ຝ່າຍດຽວ」ໄດ້.

ຊຶ່ງສາມາດໄຈ້ແຍກອອກເປັນ ເຈົ້າກຳ, ເງື່ອນໄຂ ແລະ ຜົນສະທ້ອນ. ເມື່ອໄດ້ອັນນີ້ແລ້ວ ກໍສາມາດໄຈ້ແຍກມາດຕາໄດ້ຕາມຕັກກະຄືດັ່ງຕໍ່ໄປນີ້.

- **ປະທານປະໂຫຍກ:** ຈາກຂໍ້ຄວາມທີ່ວ່າ「ຄູ່ສັນຍາ」「ຝ່າຍທີ່ໄດ້ຮັບຄວາມອັບປະໂຫຍດ」ອີງຕາມຕັກກະແລ້ວ ສິ່ງທີ່ຈະຄິດໄດ້ກໍຄື.......
  1. ຄູ່ສັນຍາທີ່ບໍ່「ອັບປະໂຫຍດ」ຈະບໍ່ສາມາດຍົກເລີກສັນຍາໄດ້.
  2. ພາກສ່ວນອື່ນທີ່ນອກເໜືອຈາກ「ຄູ່ສັນຍາ」ເຖິງຈະທວງກໍຕາມ ແຕ່ກໍບໍ່ສາມາດຍົກເລີກໄດ້.
  3. 「ອັບປະໂຫຍດ」ໝາຍເຖິງ, ຄວາມອັບປະໂຫຍດຄືແນວໃດນັ້ນ ໃນທີ່ນີ້ແມ່ນຍັງບໍ່ຈະແຈ້ງແລະ ອາດຕ້ອງໄດ້ຕີຄວາມຕື່ມ (ວ່າເປັນຄວາມອັບປະໂຫຍດທາງເສດຖະກິດ, ຄວາມອັບປະໂຫຍດທາງຈິດໃຈ, ຄວາມອັບປະໂຫຍດທາງຂັ້ນຕອນ ຫຼື ເປັນຄວາມອັບປະໂຫຍດທາງສັງຄົມ ແລະ ອື່ນໆ, ຊຶ່ງສາມາດຄິດໄດ້ຕ່າງໆນາໆ).
- **ເງື່ອນໄຂ** (ໝາຍວ່າຈະຖືກຍອມຮັບໄດ້ ຕ້ອງມີອັນໃດ): ຈາກຂໍ້ຄວາມທີ່ວ່າ「ການລະເມີດ」「ເນື້ອໃນສຳຄັນຂອງສັນຍາ」ອີງຕາມຕັກກະແລ້ວ ສິ່ງທີ່ຈະຄິດໄດ້ກໍຄື...

  「ສຳຄັນ」ໝາຍເຖິງ, ຕ້ອງສຳຄັນໃນລະດັບໃດ, ສຳຄັນສຳລັບໃຜ ສະເພາະເທົ່ານີ້ຖືວ່າຍັງບໍ່ທັນຈະແຈ້ງເທື່ອ ອາດຈະຕ້ອງໄດ້ຕີຄວາມຕື່ມ (ຕາມທີ່ໄດ້ອະທິບາຍມາໃນຂໍ້ 2 (2)③ ຂ້າງເທິງ).

  「ເນື້ອໃນສຳຄັນ」ໝາຍເຖິງ, ເນື້ອໃນຄືແນວໃດ ສະເພາະເທົ່ານີ້ແມ່ນຖືວ່າຍັງບໍ່ຈະແຈ້ງ ອາດຈະຕ້ອງໄດ້ຕີຄວາມຕື່ມ (ຕາມທີ່ໄດ້ອະທິບາຍມາໃນຂໍ້ 2 (2)③ ຂ້າງເທິງ) ເນື່ອງຈາກຂຽນໄວ້ວ່າ「ການລະເມີດ」「ສັນຍາ」ສະນັ້ນ, ຢ່າງໜ້ອຍຕ້ອງມີການລະເມີດສັນຍາ (ເມື່ອເປັນແນວນັ້ນຖ້າບໍ່ເປັນການລະເມີດສັນຍາກໍຈະບໍ່ສາມາດທວງໄດ້).
- **ຜົນສະທ້ອນ** (ຈະເກີດຫຍັງຂຶ້ນ, ອັນໃດຈະຖືກຍອມຮັບ): ຈາກຂໍ້ຄວາມທີ່ວ່າ「ສາມາດຍົກເລີກ」ສັນຍາ「ແຕ່ຝ່າຍດຽວ」ໄດ້ນັ້ນ, ອີງຕາມຕັກກະແລ້ວ ສິ່ງທີ່ຈະຄິດໄດ້ກໍຄື...

ສາມາດຍົກເລີກ「ແຕ່ຝ່າຍດຽວ」ໄດ້, ຈຶ່ງບໍ່ຈຳເປັນຕ້ອງມີການເຫັນດີຈາກຝ່າຍກົງກັນຂ້າມ.

ເມື່ອເປັນແນວນັ້ນ, ເນື່ອງຈາກຂຽນວ່າ「ແຕ່ຝ່າຍດຽວ」ສະນັ້ນ, ກໍເກີດຂໍ້ສົງໄສຂຶ້ນວ່າ ຢ່າງໜ້ອຍຕ້ອງໄດ້ແຈ້ງໃຫ້ຝ່າຍກົງກັນຂ້າມຮູ້ ຫຼື ບໍ່ (ແຕ່ຄຳຕອບໃນບັນຫານີ້ ຜູ້ສ້າງກົດໝາຍກໍໄດ້ຄິດໄວ້ແລ້ວດັ່ງທີ່ກຳນົດໄວ້ໃນປະມວນກົດໝາຍແພ່ງ ມ.395 ວັກ 2).

ທ່ານຈະເຫັນໄດ້ວ່າ ສະເພາະມາດຕານີ້ມາດຕາດຽວ ເມື່ອອີງຕາມຕົວອັກສອນແລ້ວ ກໍຍັງສາມາດອ່ານແລ້ວຖອດເອົາໃຈຄວາມໄດ້ຫຼາຍອັນ ດັ່ງທີ່ອະທິບາຍໄວ້ຂ້າງເທິງ. ສະນັ້ນ, ອາດມີບາງທ່ານທີ່ຜ່ານມາບໍ່ໄດ້ອ່ານມາດຕາກົດໝາຍຄືແບບວິທີຂ້າງເທິງ, ໂດຍມີແຕ່ອ່ານແບບຜ່ານໆ ຫຼື ແບບກວມລວມ ແລະເຂົ້າໃຈຄວາມໝາຍແບບຕາມຕົວ ຄືຕອນອ່ານນິຍາຍ, ອ່ານຂໍ້ຄວາມໃນ Facebook ຫຼື WhatsApp.

ແຕ່ທີ່ຈິງແລ້ວ ໃນຂໍ້ກຳນົດມາດຕາ ແມ່ນມີແນວຄວາມຄິດຂອງຜູ້ສ້າງກົດໝາຍຮ້ອຍຮຽງຢູ່. ສະນັ້ນ, ສຳລັບບັນຫາໃດທີ່ສາມາດແກ້ໄຂໄດ້ ໂດຍການອ່ານຂໍ້ຄວາມຕາມຕົວອັກສອນນັ້ນ ກໍຄວນແກ້ໄຂໃນຂັ້ນຂອງ STEP ① ເລີຍ. **ແລ້ວການສະຫຼຸບຄວາມທີ່ເປັນການຂັດກັບຕົວອັກສອນຂອງມາດຕານັ້ນ ກໍຄົງຈະບໍ່ຖືກຍອມຮັບ.**

ສິ່ງສຳຄັນຄື ຖ້າບໍ່ລະມັດລະວັງໃນຈຸດນີ້ ມັນອາດພາໄປເຖິງຂໍ້ສະຫຼຸບ ທີ່ເປັນຄົນລະເລື່ອງກັນເລີຍ ຂຶ້ນກັບຕົວຄົນອ່ານມາດຕາ.

**(4) STEP ②: (ຊອກຫາ) ມາດຕາທີ່ກ່ຽວຂ້ອງ**

ເມື່ອຜ່ານ STEP ① ແລ້ວ, ຖ້າສາມາດແກ້ໄຂບັນຫາໃນມາດຕາດັ່ງກ່າວໄດ້ເລີຍ ກໍຖືວ່າເສັດສິ້ນ. ແລ້ວກໍມີແຕ່ອະທິບາຍຄວາມໝາຍຂອງມາດຕາດັ່ງກ່າວຕາມຕົວອັກສອນຂອງມັນ ຄືດັ່ງທີ່ຂຽນໄວ້ຂ້າງເທິງກໍພໍແລ້ວ.

ກົງກັນຂ້າມ, ຖ້າສະເພາະມາດຕາດັ່ງກ່າວບໍ່ສາມາດເປັນຄຳຕອບໄດ້ນັ້ນ, ການຊອກເບິ່ງມາດຕາອື່ນຄືໃນ STEP ② ນີ້ ກໍອາດພົບຄຳຕອບ ຫຼື ໄດ້ແນວທາງກໍເປັນໄດ້. ທັງນີ້ກໍເພາະວ່າ, **ກົດໝາຍ ແມ່ນກົດກະຕິກາທີ່ສະແດງອອກເຖິງເຈດຈຳນົງຂອງຜູ້ສ້າງກົດໝາຍ. ສະນັ້ນ, ຢູ່ມາດຕາອື່ນອາດມີແນວທາງແກ້ໄຂທີ່ຂຽນໄວ້ສຳລັບກໍລະນີທີ່ຄ້າຍກັນ.** ອີກອັນໜຶ່ງ, ຄິດວ່າໃນເມື່ອເພິ່ນສ້າງກົດໝາຍທີ່ເປັນເອກະພາບກັນຂຶ້ນມາແລ້ວ. ສະນັ້ນ, ຕໍ່ກັບມາດຕາໃດໜຶ່ງນັ້ນ, ຄົງຈະບໍ່ສ້າງກົດກະຕິກາໃນການແກ້ໄຂບັນຫາດັ່ງກ່າວ ທີ່ແຕກຕ່າງກັນຢ່າງຂາດຂັ້ນເລີຍຢູ່ມາດຕາອື່ນອີກ.

ຕົວຢ່າງທີ່ງ່າຍທີ່ສຸດຄືງຈະເປັນກໍລະນີ ທີ່ຂຽນໄວ້ໃນມາດຕາ 395 ວັກ 1 ຂ້າງເທິງຄື: ໃນກໍລະນີຍົກເລີກໄດ້「ແຕ່ຝ່າຍດຽວ」ນັ້ນ, ຕາມຕົວກະແລ້ວອາດມີຂໍ້ສົງໄສເກີດຂຶ້ນວ່າ ຈຳເປັນຕ້ອງໄດ້ແຈ້ງໃຫ້ອີກຝ່າຍໜຶ່ງຮູ້ ຫຼື ບໍ່. ບັນຫານີ້ໃນປະມວນກົດໝາຍແພ່ງຂອງລາວແມ່ນ ກຳນົດໄວ້ໃນວັກ 2 ຂອງມາດຕາດັ່ງກ່າວເລີຍ (ມັນເປັນການຊອກມາດຕາຫຼາຍກ່ວາເປັນການຕີ ຄວາມ). ເນື່ອງຈາກຍົກເລີກແຕ່ຝ່າຍດຽວໄດ້ ຢ່າງໜ້ອຍຖ້າບໍ່ມີການແຈ້ງໄປຍັງຝ່າຍກົງກັນຂ້າມ ເຂົາກໍອາດຄິດໄປໄດ້ວ່າ ສັນຍາຖືກຍົກເລີກແລ້ວ ຫຼື ສັນຍາຍັງສືບຕໍ່ຢູ່ກໍໄດ້. ຊຶ່ງຜູ້ສ້າງກົດໝາຍ ອາດຄຳນຶງເຖິງບັນຫານີ້ຈຶ່ງສ້າງວັກນີ້ຂຶ້ນມາແກ້ໄຂ. ຍ້ອນມີຄຳຕອບຂຽນໄວ້ໃນມາດຕາຢູ່ແລ້ວ ຈຶ່ງບໍ່ແມ່ນການຕີຄວາມ. ໂດຍທົ່ວໄປແລ້ວກົດໝາຍຖືກສ້າງໃຫ້ມີຄວາມສອດຄ່ອງກັນ ໂດຍລວມໃນຕົວຂອງມັນເອງ.

ນອກຈາກນີ້, ເຖິງວ່າບໍ່ພົບຄຳຕອບທີ່ຊັດເຈນຄືທີ່ອະທິບາຍມາກໍຕາມ, ການຊອກຄົ້ນ ເບິ່ງມາດຕາອື່ນ ກໍອາດພົບແນວທາງໃນການແກ້ໄຂບັນຫາເຊັ່ນກັນ (ບັນຫານີ້ແມ່ນຂ້ອນຂ້າງ ຍາວ ສະນັ້ນ, ຢາກໃຫ້ທ່ານເບິ່ງໃນກໍລະນີສຶກສາກົລາບານເຕະ ທີ່ຈະອະທິບາຍພາຍຫຼັງ).

### (5) STEP ③: ວັດຖຸປະສົງ (ຂອງມາດຕາ) ຄົ້ນຄ້ວາ (ເຈດຈຳນົງຂອງຜູ້ສ້າງກົດໝາຍ)

ຖ້າສາມາດໄດ້ຄຳຕອບໃນ STEP ② ແລ້ວກໍຖືວ່າເສັດສິ້ນ. ແຕ່ກໍມັກມີກໍລະນີທີ່ຍັງບໍ່ໄດ້ຄຳ ຕອບເທື່ອ. ຖ້າເປັນແນວນັ້ນ ແມ່ນຕ້ອງໄດ້**ຄົ້ນຄິດກ່ຽວກັບ「ວັດຖຸປະສົງຂອງກົດໝາຍ」 ຊຶ່ງເປັນອັນທີ່ ສຳຄັນທີ່ສຸດ ແລະຈະອະທິບາຍໃນບາດກ້າວຕໍ່ຈາກນີ້.**

ດັ່ງທີ່ເຫັນຜ່ານມາ ກົດໝາຍແພ່ງຖືກສ້າງຂຶ້ນເພື່ອວັດຖຸປະສົງຂອງຜູ້ສ້າງກົດໝາຍ ໃນການບັນລຸ ເຖິງຜົນປະໂຫຍດໃດໜຶ່ງ ຫຼື ເພື່ອປົກປ້ອງຄຸນຄ່າໃດໜຶ່ງ. ຂໍ້ກຳນົດຂອງມາດຕາ ຖືກສ້າງຕາມຕົວກະໂດຍ ສອດຄ່ອງກັບມາດຕາອື່ນ, ມັນຈຶ່ງມີແນວທາງນອນຢູ່ໃນມາດຕານັ້ນ ຫຼື ໃນມາດຕາອື່ນນຳ.

ເຊັ່ນດຽວກັນ, ເຖິງວ່າໃນມາດຕາດັ່ງກ່າວຈະກຳກວມ ແລະໃນມາດຕາອື່ນກໍບໍ່ເຫັນແນວທາງກໍ ຕາມ. ແຕ່ຖ້າເຮົາລອງຄິດເບິ່ງວ່າ ເປັນຫຍັງຜູ້ສ້າງກົດໝາຍຈຶ່ງສ້າງມາດຕານີ້ ຫຼື ວ່າ ເປັນຫຍັງຈຶ່ງໃຊ້ຄຳເວົ້າ ແນວນີ້ ກໍອາດເຮັດໃຫ້ເຂົ້າໃຈໄດ້ໃນລະດັບໜຶ່ງ. ແນ່ນອນວ່າຖ້າມີເອກະສານທີ່ບົ່ງບອກເຖິງທັດສະນະ ຂອງຜູ້ສ້າງກົດໝາຍ ຫຼື ທັດສະນະຂອງລັດຂຽນໄວ້ ໃນນັ້ນກໍອາດມີເຈດຈຳນົງຂອງຜູ້ສ້າງກົດໝາຍຫຼືວິທີ ແກ້ໄຂບັນຫາຂຽນໄວ້ກໍເປັນໄດ້. **ແຕ່ເຖິງວ່າບໍ່ມີເອກະສານຄືດັ່ງກ່າວກໍຕາມ ເຮົາກໍຕ້ອງໄດ້ຄົ້ນຄິດດ້ວຍ ຕົນເອງເຖິງວັດຖຸປະສົງຂອງກົດໝາຍ ແລະ ເຈດຈຳນົງຂອງຜູ້ສ້າງກົດໝາຍ.**

ກົດໝາຍແຕ່ລະອັນ ຈະມີເຫດຜົນການມີຢູ່ທີ່ແຕກຕ່າງກັນໄປ. ແນ່ນອນວ່າມັນຕ້ອງມີເປົ້າໝາຍທີ່ຢາກໃຫ້ບັນລຸນອນຢູ່ໃນນັ້ນນໍາ. ສະນັ້ນ, ຕ້ອງໄດ້ຄົ້ນຄິດຫຼາຍຫຼືບຫຼາຍຕ່າວວ່າ 「ວັດຖຸປະສົງຂອງກົດໝາຍ ແມ່ນອັນໃດ」 ເຊັ່ນ ຖ້າມີຂໍ້ກໍານົດມາດຕາດັ່ງກ່າວ ຄຸນຄ່າໃດຈະໄດ້ຮັບການບັນລຸ ຫຼື ກົດໝາຍຕ້ອງການຈັດຕັ້ງປະຕິບັດໃຫ້ມີຄວາມເປັນທໍາຄືແນວໃດ, ຖ້າວ່າເຮົາເອງເປັນຜູ້ສ້າງກົດໝາຍດັ່ງກ່າວ ເປັນຫຍັງເຮົາຈຶ່ງຕ້ອງສ້າງມາດຕານັ້ນ.

**ຕົວຢ່າງ, ລອງຄິດຫາວັດຖຸປະສົງຂອງມາດຕາ 395 ວັກ 1 ຂ້າງເທິງທີ່ວ່າ ຖ້າແມ່ນ 「ເນື້ອໃນສໍາຄັນຂອງສັນຍາ」 ແມ່ນສາມາດຍົກເລີກໄດ້, ເນື່ອງຈາກສັນຍາເປັນສິ່ງທີ່ເຮັດຂຶ້ນເພື່ອທຸລະກໍາລະຫ່ວາງຄູ່ສັນຍາດ້ວຍກັນ. ສະນັ້ນ, ກໍສໍານຶກພາບໄດ້ວ່າມາດຕານີ້ ແມ່ນຍົກສູງເຈດຈໍານົງ ກໍຄືຜົນປະໂຫຍດຂອງຄູ່ສັນຍາ.**

**ຖ້າບໍ່ກ່ຽວກັບເຈດຈໍານົງຂອງຄູ່ສັນຍາແລ້ວ ຜູ້ສ້າງກົດໝາຍອາດກໍານົດໄວ້ຢ່າງຈະແຈ້ງເລີຍວ່າ 「ເມື່ອມີການລະເມີດສັນຍາ ແມ່ນສາມາດຍົກເລີກໄດ້ທັງໝົດ」 「ເມື່ອມີການລະເມີດກໍານົດການປະຕິບັດ ຫຼື ລະເມີດກ່ຽວກັບຄຸນນະພາບ ແມ່ນສາມາດຍົກເລີກໄດ້」. ແຕ່ໃນທີ່ນີ້, ມາດຕາດັ່ງກ່າວ ແມ່ນມີເນື້ອໃນທີ່ຄໍານຶງເຖິງບັນຫາທີ່ວ່າ ເປັນກໍລະນີທີ່ສໍາຄັນພຽງພໍໃຫ້ຈະຍົກເລີກໄດ້ ຫຼື ບໍ່ ຕິດພັນກັບ 「ເນື້ອໃນສໍາຄັນ」 ຂອງ 「ສັນຍາ」 ແຕ່ລະປະເພດ. ສະຫຼຸບຄື, ເນື່ອງຈາກມາດຕານີ້ ພະຍາຍາມທີ່ຈະຄໍານຶງເຖິງຄວາມສໍາຄັນຕາມແຕ່ລະສັນຍາທີ່ຄູ່ສັນຍາເຮັດຂຶ້ນ. ສະນັ້ນ, ຂ້າພະເຈົ້າຄິດວ່າວັດຖຸປະສົງຂອງມາດຕານີ້ ແມ່ນເພື່ອຍົກສູງເຈດຈໍານົງຂອງຄູ່ສັນຍາ. ເມື່ອເປັນແນວນັ້ນ, ໃນກໍລະນີຕົວຈິງກໍຄິດໄດ້ວ່າ ສິ່ງສໍາຄັນສໍາລັບສັນຍາແຕ່ລະອັນນັ້ນ ມັນແຕກຕ່າງກັນໄປຕາມແຕ່ລະປະເພດສັນຍາ ຫຼື ຂຶ້ນກັບແຕ່ລະຄູ່ສັນຍາ.**

**ໝາຍວ່າ, ຈະຕ້ອງໄດ້ຄິດເບິ່ງວ່າໃນສັນຍາດັ່ງກ່າວ ຄູ່ຄວາມຄິດວ່າ ເນື້ອໃນດັ່ງກ່າວເປັນບັນຫາສໍາຄັນ ຫຼື ບໍ່. ຕົວຢ່າງ ເຮົາລອງຄິດເບິ່ງກໍລະນີທີ່ປະຕິບັດລ່າຊ້າ 1 ວັນທີ່ກ່າວມາກ່ອນໜ້ານີ້. ໃນສັນຍາຊື້-ຂາຍ ໂດຍທົ່ວໄປແລ້ວກໍານົດການປະຕິບັດບໍ່ຖືວ່າເປັນບູລິມະສິດສູງສຸດ. ສໍາລັບຄູ່ສັນຍາແລ້ວການລ່າຊ້າພຽງ 1 ວັນອາດບໍ່ຖືວ່າເປັນບັນຫາ 「ສໍາຄັນ」. ແຕ່ສໍາລັບໃນກໍລະນີຊຸດແຕ່ງງານ ຫຼື ເຄັກແຕ່ງງານ ມັນມີໂອກາດທີ່ຈະຖືວ່າ ກໍານົດການປະຕິບັດເປັນເນື້ອໃນສໍາຄັນ ຊຶ່ງຈະຊ້າແຕ່ 1 ວັນ ກໍບໍ່ໄດ້. 20**

---

[20] ອ້າງອີງຈາກເນື້ອໃນທີ່ ສາດສະດາຈານ ຣິໂຣຊິ ມັດສືໂອະ ໄດ້ອະທິບາຍໄວ້ໃນການບັນຍາຍຫົວຂໍ້ 「ການນໍາໃຊ້ ແລະ ການຕີຄວາມກົດໝາຍ」 ໃນກອງປະຊຸມສໍາມະນາທີ່ຈັດຂຶ້ນຢູ່ນະຄອນຫຼວງວຽງຈັນ, ວັນທີ 6 ກຸມພາ ປີ 2024.

**ອັນນີ້ເປັນພຽງຄວາມຄິດສ່ວນຕົວ, ຊຶ່ງທ່ານອື່ນອາດມີວິທີເບິ່ງບັນຫາເປັນແບບອື່ນໄດ້ເຊັ່ນກັນ. ແຕ່ສິ່ງສຳຄັນແມ່ນການທີ່ແຕ່ລະຄົນລອງຄົ້ນຄ້ວາເບິ່ງວັດຖຸປະສົງຂອງກົດໝາຍ ກໍຄື ການສຳນຶກເບິ່ງວ່າ ເຈດຈຳນົງຂອງຜູ້ສ້າງກົດໝາຍນັ້ນແມ່ນຫຍັງ.**

- **ສັງລວມບາດກ້າວຂອງການຕີຄວາມກົດໝາຍ (ແຕ່ STEP ① ～ ③)**

① ຕີຄວາມຕາມປະໂຫຍກທີ່ຂຽນ

ກວດເບິ່ງມາດຕາ (ອ່ານຕາມຕົວກະ ບໍ່ແມ່ນອ່ານແບບກວມລວມ)

② ຕີຄວາມຕາມລະບົບ

ກວດເບິ່ງມາດຕາທີ່ກ່ຽວຂ້ອງ (ຊອກຫາມາດຕາດັ່ງກ່າວ)

③ ຕີຄວາມຕາມວັດຖຸປະສົງ

ຄົ້ນຄ້ວາວັດຖຸປະສົງຂອງມາດຕາ (ຫຼື ເຈດຈຳນົງຂອງຜູ້ສ້າງກົດໝາຍ)

## 5. ຕົວຢ່າງຂອງການຕີຄວາມກົດໝາຍ (ຕົວຢ່າງ ງ່າຍດາຍທີ່ນອກເໜືອຈາກປະມວນກົດໝາຍແພ່ງ)

ການຕີຄວາມກົດໝາຍມາດຕາ 395 ວັກ 1 ຢູ່ຂ້າງເທິງ ອາດເປັນເລື່ອງທີ່ຂ້ອນຂ້າງຍາກ ເນື່ອງຈາກເນື້ອໃນແມ່ນເຂົ້າໄປໃນບັນຫາທາງທິດສະດີກ່ຽວກັບມາດຕາຂອງປະມວນກົດໝາຍແພ່ງເລີຍ. ຊຶ່ງບາງທ່ານອາດຍັງບໍ່ທັນເຂົ້າໃຈເນື້ອໃນນັ້ນໄດ້ເທື່ອ.

ດັ່ງນັ້ນ, ຈາກນີ້ຈະຂໍອະທິບາຍໂດຍນໍາໃຊ້ກໍລະນີຕົວຢ່າງ ທີ່ບໍ່ແມ່ນປະມວນກົດໝາຍແພ່ງ ເພື່ອຊີ້ໃຫ້ເຫັນການຕີຄວາມກົດໝາຍທີ່ເບິ່ງງ່າຍກ່ວາ. ກ່ອນໜ້ານີ້ແມ່ນໄດ້ອະທິບາຍການຕີຄວາມກົດໝາຍແຕ່ STEP ①～③ ແລະໄດ້ຄົ້ນຄ້ວາໄປແຕ່ລະອັນແລ້ວ. ສໍາລັບມາດຕາ 395 ວັກ 1 ແມ່ນຢາກແນະນໍາໃຫ້ອ່ານຄືນອີກເທື່ອໜຶ່ງ ພາຍຫຼັງທີ່ເຂົ້າໃຈເນື້ອໃນຂ້າງລຸ່ມນີ້ແລ້ວ.

### (1) ກະຕິກາຂອງກິລາບານເຕະ (ການຕີຄວາມກົດໝາຍ: STEP ① ແລະ ②, ຄົ້ນຄ້ວາມາດຕາເຄົ້າ ແລະ ມາດຕາທີ່ກ່ຽວຂ້ອງ)

ຈາກນີ້ແມ່ນຈະໃຫ້ຜູ້ອ່ານ ເບິ່ງຜ່ານຮູບແບບການສົນທະນາໂຕ້ຕອບລະຫ່ວາງອາຈານກັບນັກຮຽນ ຊຶ່ງເປັນວິທີທີ່ມັກດໍາເນີນໃນຫ້ອງບັນຍາຍຕົວຈິງ.

**【ກໍລະນີສຶກສາ ກິລາບານເຕະ】**

ໃນການແຂ່ງຂັນເຕະບານໂລກ ທີມຍີ່ປຸ່ນໄດ້ຍິງປະຕູເຂົ້າ. ແຕ່ກ່ອນຈະເປັນປະຕູບໍ່ດົນ, ປະກົດວ່າໝາກບານໄດ້ຂ້າມເສັ້ນຫຼັງໄປແລ້ວຈຶ່ງມີການຖົກຖຽງກັນວ່າ ບານອາດອອກໄປແລ້ວ (ການຫຼິ້ນຄວນຈະຢຸດນະຕອນນັ້ນ).ຖ້າວ່າບານຂ້າມເສັ້ນໄປແລ້ວ ກໍຈະບໍ່ໄດ້ 1 ລູກດັ່ງກ່າວ. ກໍາມະການຄວນຈະຕັດສິນຄືແນວໃດ.




- **<u>ຂັ້ນຕອນທີ 1</u>**

ອາຈານ: ນີ້ແມ່ນກໍລະນີຕົວຢ່າງທີ່ເຄີຍເກີດຂຶ້ນຈິງໃນການແຂ່ງຂັນເຕະບານໂລກປີ 2022. ແຂ່ງວັນທີ 1 ທັນວາ ລະຫວ່າງທີມຊາດຍີ່ປຸ່ນ ກັບ ທີມຊາດສະເປນ. ກ່ອນທີ່ຍີ່ປຸ່ນຈະຍິງປະຕູເຂົ້າບໍ່ດົນ ປະກົດວ່າເຫັນຄື ວ່າບານໄດ້ອອກນອກເສັ້ນ, ເປັນບັນຫາວ່າ 1 ລູກທີ່ຍິງເຂົ້າໄປນັ້ນຈະຖືວ່າເປັນປະຕູ ຫຼື ບໍ່. ໃນຕົວຈິງ, ກຳມະການຕັດສິນວ່າບານບໍ່ທັນຂ້າມເສັ້ນ ແລະ ບໍ່ອອກນອກສະໜາມ (ເກມຍັງບໍ່ຢຸດ) ແລະຍີ່ປຸ່ນກໍໄດ້ 1 ປະຕູ. ຜົນການແຂ່ງຂັນແມ່ນສາມາດເອົາຊະນະທີມແຂງຢ່າງສະເປນໄປໄດ້ 2 ຕໍ່ 1. [21]

ບັນຫາໃນທີ່ນີ້ ແມ່ນວ່າບານໄດ້ຂ້າມເສັ້ນແລ້ວອອກນອກສະໜາມໄປແລ້ວ ຫຼື ບໍ່ (ຈະຕັດສິນວ່າ ບານຂ້າມເສັ້ນໄປຕອນໃດ). ກຳມະການໃນກິລາບານເຕະກໍຄືກັນກັບຜູ້ພິພາກສາ. ວ່າຈະຕັດສິນບັນຫາບົນ ພື້ນຖານອັນໃດ.

ນັກຮຽນ A: ຄິດວ່າຄົງມີກະຕິກາທາງການຂອງກິລາບານເຕະຢູ່ແລ້ວ. ສະນັ້ນ, ຄົງຈະນຳໃຊ້ກະຕິກາ ດັ່ງກ່າວ.

---

[21] 「ປາຕິຫານ 1 mm ລູກຍິງຂອງມິໂຕມະໃນບານໂລກ」 The Nikkan Sports News, ວັນທີ 2 ທັນວາ ປີ 2022. (https://www.nikkansports.com/soccer/qatar2022/news/202212020000568.html , ອັບເດດເທື່ອສຸດທ້າຍ ວັນທີ 13 ທັນວາ ປີ 2024)

ອາຈານ: ແມ່ນແລ້ວ. ເນື່ອງຈາກອາຈານກໍເປັນນັກກົດໝາຍ ຈຶ່ງໄດ້ເປີດເບິ່ງຂໍ້ກຳນົດຂອງມາດຕາແລ້ວກໍພົບວ່າກະຕິກາດັ່ງລຸ່ມນີ້ຖືກກຳນົດໄວ້ໂດຍ FIFA. ກະຕິກາຂອງກິລາບານເຕະກໍເປັນຄືກັບກົດໝາຍ.

**Laws of the Game 22/23(FIFA) / Law 9.1 Ball out of play**

The ball is out of play when:

・it has wholly passed over the goal line or touchline on the ground or in the air

ນັກຮຽນ A: ໝາຍຄວາມວ່າ, ຖ້າໝາກບານຂ້າມເສັ້ນໝົດໝ່ອຍ ແມ່ນຕ້ອງຢຸດເກມແມ່ນບໍ່ອາຈານ.

ອາຈານ: ໃນກະຕິກາດັ່ງກ່າວພວກນ້ອງຄິດວ່າ **ຂໍ້ຄວາມທີ່ສຳຄັນເພື່ອແກ້ໄຂບັນຫາດັ່ງກ່າວ** ແມ່ນອັນໃດ.

ນັກຮຽນ B: ອາດແມ່ນຄຳວ່າ **ເມື່ອໝາກບານຂ້າມເສັ້ນ「Wholly(ໝົດໝ່ອຍ)」**. ເພາະເປັນປະໂຫຍກທີ່ເປັນການຕັດສິນວ່າ ໝາກບານໄດ້ອອກນອກເສັ້ນ ຫຼື ບໍ່ ?

ອາຈານ: ຄັນຊັ້ນ, ໃນນັດນີ້ໝາກບານໄດ້ຂ້າມເສັ້ນ 「Wholly(ໝົດໝ່ອຍ)」ແລ້ວ ຫຼື ບໍ່ ?

ນັກຮຽນ B: ອືມ...ທີ່ຈິງບານອອກເປັນສ່ວນຫຼາຍແລ້ວ.

ນັກຮຽນ A: ນ້ອງກໍເບິ່ງການແຂ່ງນັດນັ້ນເລີຍຍັງຈື່ໄດ້ດີ. ທີ່ຈິງໃນການແຂ່ງຂັນແທ້ເບິ່ງຄືວ່າບານຂ້າມເສັ້ນອອກໄປແລ້ວ, ແຕ່ໃນຄວາມຈິງທີ່ຕັດສິນຈາກກ້ອງບັນທຶກພາບເຫັນວ່າ ຍັງຢູ່ໃນເສັ້ນໜ້ອຍໜຶ່ງປະມານ 1 mm ນີ້ລະ. ຈື່ໄດ້ວ່າ ເພິ່ນຕັດສິນວ່າ ຍັງບໍ່ທັນຂ້າມເສັ້ນອອກໄປ「ໝົດໝ່ອຍ」ເທື່ອ.

ອາຈານ: ສະແດງວ່າໃນກໍລະນີນີ້ ຄຳວ່າ「ໝົດໝ່ອຍ」ແມ່ນອັນຕັດສິນບັນຫາເນາະ. ເມື່ອອີງຕາມ **ການຕີຄວາມກົດໝາຍ STEP ①【ກວດເບິ່ງມາດຕາ: ອ່ານຕາມຕົວອັກສອນ ບໍ່ແມ່ນອ່ານແບບກວມລວມ】** ເຫັນວ່າ ການອ່ານໃຫ້ກຳໄດ້ຄວາມໝາຍຂອງຄຳວ່າ「ໝົດໝ່ອຍ」ນີ້ ເປັນສິ່ງສຳຄັນ. ເພື່ອຈະເວົ້າໄດ້ວ່າບານຂ້າມເສັ້ນ「ໝົດໝ່ອຍ」ໄປແລ້ວນັ້ນ, ບານຕ້ອງໄດ້ຂ້າມເສັ້ນໄປ ເວລາເບິ່ງຈາກມູມສູງ ບໍ່ເຫັນບານຄາໃນເສັ້ນຈັກໜ້ອຍ ບໍ່ວ່າຈະເປັນພຽງ 1 mm ກໍຕາມ. ຍ້ອນແນວນັ້ນ, ກຳມະການເຫັນວ່າໃນເກມນີ້ ບານຍັງຄາໃນເສັ້ນເລັກນ້ອຍຈຶ່ງຍັງບໍ່ເປັນບານຕາຍ (ບໍ່ທັນອອກນອກເສັ້ນ) ເລີຍຮັບຮູ້ 1 ລູກທີ່ທີມຍີ່ປຸ່ນຍິງໄດ້.

ນັກຮຽນ B: ແມ່ນແລ້ວ, ເຖິງຈະເບິ່ງຄືວ່າ ບານຂ້າມເສັ້ນໄປແລ້ວກໍຕາມ, ແຕ່ຖ້າຍັງຄາໃນເສັ້ນພຽງແຕ່ 1 mm, ກໍຈະບໍ່ສາມາດເວົ້າໄດ້ວ່າ ບານອອກ「ໝົດໝ່ອຍ」ເຖິງວ່າບານໄດ້ອອກເປັນສ່ວນຫຼາຍແລ້ວກໍຕາມ.

ອາຈານ: **ກຳມະການ ຫຼື ຜູ້ພິພາກສາ ແມ່ນຕ້ອງອະທິບາຍຂໍ້ຄວາມທີ່ມີລາຍລະອຽດຢູ່ໃນມາດຕາ ຕາມຕົວກະ ແລະ ຈຳເປັນຕ້ອງອະທິບາຍວ່າ ສາເຫດທີ່ທີມສະເປນເສຍປະຕູ ແມ່ນຍ້ອນຫຍັງ? (ແລະ ເປັນຫຍັງ ສະເປນ ຈຶ່ງເສຍການແຂ່ງຂັນ)**. ຄັນຊັ້ນ, ຖ້າວ່າກຳມະການໃຫ້ຍີ່ປຸ່ນໄດ້ປະຕູໂດຍທີ່ບໍ່ມີການອະທິບາຍເດ ຈະເປັນແນວໃດ.

ນັກຮຽນ B: ຄິດວ່າ ທັງຄູຝຶກ ແລະ ແຟນບານຂອງທີມສະເປນຄົງຈະບໍ່ພໍໃຈ ເພາະຖ້າບໍ່ຮູ້ເຫດຜົນຂອງການເສຍປະຕູຄົງຈະບໍ່ລຸລ່ວງໃຈ.

ອາຈານ: **ການຕັດສິນກໍລະນີຫຍຸ້ງຍາກ ອາດມີແຕ່ກຳມະການ ຫຼື ຜູ້ພິພາກສາ ຊຶ່ງເປັນມືອາຊີບຈຶ່ງຈະເຂົ້າໃຈ. ໃນເວລາດັ່ງກ່າວ, ເຖິງຈະເປັນບັນຫາຕາຍຕົວກໍຕາມ ມັນຈະເປັນການດີຖ້າມີການອະທິບາຍຢ່າງລະອຽດ ກ່ຽວກັບເນື້ອໃນທີ່ຕີຄວາມ.**

- **<u>ຂັ້ນຕອນທີ 2</u>**

ອາຈານ: ບາດນີ້ຈະລອງປັບໃຫ້ໂຈດຍາກຂຶ້ນ, ໂດຍນຳໃຊ້ເນື້ອເລື່ອງເກົ່າ ແຕ່ໃຫ້ເບິ່ງວ່າຖ້າໃນກໍລະນີທີ່ບໍ່ມີຄຳວ່າ 「ໝົດໝ່ອຍ」 ຂຽນຢູ່ໃນກະຕິການີ້ເດ ກຳມະການຈະຕັດສິນແນວໃດ. ສົມມຸດວ່າ ຜູ້ສ້າງກະຕິກາລືມໃສ່ຂໍ້ຄວາມນີ້ລົງໄປໃນກະຕິກາດັ່ງກ່າວ.

**Laws of the Game 22/23(FIFA) / Law 9.1 Ball out of play (仮定の条文)**

The ball is out of play when:

・it has ~~wholly~~ passed over the goal line or touchline on the ground or in the air

ນັກຮຽນ A: ເມື່ອແປຕາມຕົວກໍຈະໄດ້ວ່າ「ເມື່ອໝາກບານຫາກຂ້າມເສັ້ນ ເກມກໍຈະຢຸດ」.

ອາຈານ: ຄັນຊັ້ນມັນໝາຍຄວາມວ່າແນວໃດ. ຕອນໃດຈຶ່ງເອີ້ນວ່າບານຂ້າມເສັ້ນ.

ນັກຮຽນ A: ຍ້ອນວ່າໃນກະຕິການີ້ບໍ່ໄດ້ຂຽນຄຳວ່າ「ໝົດໝ່ອຍ」, ສະນັ້ນ, ຂໍ້ສະຫຼຸບຂອງມັນກໍຈະແຕກຕ່າງຈາກກໍລະ ນີກ່ອນນີ້. ການທີ່ຈະເວົ້າໄດ້ວ່າບານຂ້າມເສັ້ນນັ້ນ, ຢ່າງໜ້ອຍບານຕ້ອງຂ້າມເສັ້ນໄປເຄິ່ງໜຶ່ງ.

ນັກຮຽນ B: ຍ້ອນຂຽນວ່າ ອອກນອກເສັ້ນ, ຄັນຊັ້ນ ບານຂ້າມພຽງແຕ່ 1 mm ກໍຈະເວົ້າໄດ້ວ່າ 「ຂ້າມເສັ້ນ」 ໄດ້ບໍ່ແມ່ນບໍ? ພຽງແຕ່ບານອອກນອກເສັ້ນໜ້ອຍດຽວ ກໍຄວນຕັດສິນວ່າ「ຂ້າມເສັ້ນ」ໄປແລ້ວ.

ນັກຮຽນ C: ບໍ່ແມ່ນຄືກັນກັບກໍລະນີຫ່ວາງກໍ່ນີ້ບໍ ນັບເອົາຕອນທີ່ບານຂ້າມເສັ້ນໄປໝົດແລ້ວ.

ອາຈານ: ບໍ່ວ່າກໍລະນີໃດກໍແມ່ນການຕີຄວາມກົດໝາຍໃນ STEP ① ຊຶ່ງວ່າຄຳຕອບໃດກໍເປັນໄປໄດ້ໃນທາງການຕີຄວາມຂໍ້ກຳນົດມາດຕາ. ຖ້າເວົ້າໃນມຸມມອງນັ້ນ ກໍຖືວ່າຖືກຕ້ອງທັງໝົດ.

ແຕ່ວ່າ ພຽງແຕ່ເທົ່ານັ້ນ ມັນຈະບໍ່ມີປະໂຫຍດສຳລັບການແກ້ໄຂຂໍ້ຂັດແຍ່ງນີ້. ການທີ່ຖືກໝົດທຸກອັນນັ້ນມັນໝາຍຄວາມວ່າຈະເລືອກອັນໃດກໍໄດ້ຢ່າງເສລີ. ທ້າຍທີ່ສຸດກຳມະການ ກໍຈະເລືອກຂໍ້ສະຫຼຸບທີ່ຕົນມັກເທົ່ານັ້ນ.

ນັກຮຽນ A: ຄັນເປັນແນວນັ້ນ ມັນຕ້ອງມາເຖິງການຕີຄວາມກົດໝາຍໃນ STEP ② ແມ່ນບໍອາຈານ?

ອາຈານ: ຖືວ່າພວກນ້ອງເລີ່ມເຂົ້າໃຈຂຶ້ນມາແລ້ວໃດ໋. ສະນັ້ນ, ໃຫ້ລອງຊອກແນວທາງຕາມ **ການຕີຄວາມກົດໝາຍ STEP ② 【ກວດເບິ່ງມາດຕາທີ່ກ່ຽວຂ້ອງ】** ເບິ່ງ. ບາດນີ້ຈາກກະຕິກາຂອງກິລາບານເຕະນີ້ ລອງຊອກຫາອັນທີ່ຄ້າຍກັບກໍລະນີມີການຢຸດເກມແຂ່ງຂັນ ຍ້ອນບານອອກນອກເສັ້ນມາເບິ່ງ. ແລ້ວຊອກຫາມາດຕາທີ່ພໍເປັນບ່ອນອີງມາພ້ອມ.

ນັກຮຽນ C: ນ້ອງຊອກເຫັນແລ້ວອາຈານ. ມັນເປັນມາດຕາທີ່ເວົ້າເຖິງວ່າຕອນໃດຈຶ່ງຖືວ່າບານຂ້າມເສັ້ນເພື່ອຈະນັບເປັນປະຕູ. ໂຕນີ້ພໍກ່ຽວກັນຢູ່ບໍອາຈານ. ໝາຍຄວາມວ່າ, ເພິ່ນຂຽນວ່າເມື່ອບານຂ້າມເສັ້ນປະຕູໄປ ທັງໝົດຈຶ່ງຈະນັບເປັນ 1 ປະຕູ.

**Laws of the Game 22/23(FIFA) / Law 10.1 Goal scored**

A goal is scored when the whole of the ball passes over the goal line (以下略).




**(ຂໍ້ມູນຈາກ: IFAB, Laws of the Game 22/23, ໜ້າ 88)**

ອາຈານ: ດີຫຼາຍ ເຫັນໄດ້ວ່າລະຫ່ວາງມາດຕາດ້ວຍກັນ ມັນຈະມີຄວາມຄ້າຍຄືກັນຂອງສະຖານະການ ທີ່ແຕ່ລະອັນຄາດຄະເນໄວ້. ໃນມາດຕານີ້ ກໍຄືກັນກັບມາດຕາ Law 9.1 ກ່ອນໜ້ານີ້, ທີ່ວ່າ ເພື່ອຈະນັບວ່າເຂົ້າປະຕູ ແມ່ນບານຕ້ອງໄດ້ຂ້າມເສັ້ນ「ໝົດໝ່ອຍ」. ບາດນີ້ສົມມຸດວ່າ, ການຈະນັບເປັນປະຕູແມ່ນບານຕ້ອງຂ້າມເສັ້ນ「ໝົດໝ່ອຍ」ແຕ່ເວລາຈະນັບວ່າ ບານອອກເພື່ອຢຸດເກມຜັດວ່າ ບໍ່ຕ້ອງຂ້າມ「ໝົດໝ່ອຍ」ກໍໄດ້, ຖ້າຂຽນແບບນີ້ຈະສັບສົນບໍ່?

ນັກຮຽນ C: ແມ່ນໃດເນາະ, ຖ້າຂຽນຄົນລະແບບ ກະຕິກາຄົງຈະສັບສົນ ແລະກຳມະການກໍຄົງຈະເຮັດວຽກຍາກ.

ອາຈານ: ແມ່ນແລ້ວ, ໃນເມື່ອເປັນມາດຕາທີ່ກຳນົດສາຍພົວພັນລະຫ່ວາງ「ເສັ້ນ」ກັບ「ບານ」ຄືກັນ, ຄົງຈະບໍ່ມີຄວາມຈຳເປັນຕ້ອງສ້າງກະຕິກາທີ່ສັບໄປສັບມາ. **ສະນັ້ນ, ເຖິງວ່າໃນມາດຕາ Law 9.1 ຈະຂາດຄຳວ່າ「ໝົດໝ່ອຍ」ໄປ, ແຕ່ຖ້າຄິດຄືຮູບການຂອງມາດຕາ Law 10.1 ແລ້ວ, ໃນກະຕິກາດັ່ງກ່າວບັນຫາຄຳວ່າ「ໝົດໝ່ອຍ」ແມ່ນສາມາດແກ້ໄຂໄດ້ດ້ວຍຮູບການຕີຄວາມກົດໝາຍ ຊຶ່ງກໍຖືວ່າສົມເຫດສົມຜົນ.**

ໃນຈຸດນີ້ ຖ້າເບິ່ງໃນມູມມອງຂອງ **ການຕີຄວາມໝາຍ STEP ③ 【ຄົ້ນຄ້ວາ ວັດຖຸປະສົງຂອງມາດຕາ ຫຼື ເຈດຈໍານົງຂອງຜູ້ສ້າງກົດໝາຍ)】** ເດ ມີໃຜສາມາດອະທິບາຍໄດ້ບໍ່.

ນັກຮຽນ A: ຫວ່າງກີ້ນີ້ ຄືໄດ້ຍິນອາຈານອະທິບາຍໄວ້ຢູ່ວ່າ ສໍາລັບຜູ້ສ້າງກະຕິກາແລ້ວ ຄົງຈະຢາກສ້າງກະຕິກາໃຫ້ມີຄວາມລຽບງ່າຍ ແລະ ເປັນເອກະພາບກັນ.

ອາຈານ: ອັນນັ້ນກະມີສ່ວນ, ຜູ້ສ້າງກົດຈະຍຶດຖືເອົາມຸມມອງດຽວກັນໃນການສ້າງຫຼາຍມາດຕາ. ສະນັ້ນ, ການກວດເບິ່ງມາດຕາອື່ນໆນໍາ ຈະເປັນປະໂຫຍດໃນການເຮັດໃຫ້ມີຄວາມເປັນເອກະພາບໃນການຕີຄວາມ.

ນອກນັ້ນ, ຈາກນີ້ໄປໃຫ້ລອງຈິນຕະນາການເບິ່ງກະໄດ້ ສົມມຸດວ່າ ໂຕເອງເປັນຜູ້ສ້າງກະຕິກາ ຄິດວ່າຄວນຈະເອົາໃຈໃສ່ອັນໃດແດ່.

ນັກຮຽນ B: ຄິດວ່າ ຄັນສ້າງວ່າ ໃຫ້ມີບັນທັດຖານໃຫ້ສາມາດໃຊ້ພາບວີດີໂອຕັດສິນໄດ້ວ່າ ໝາກບານອອກນອກເສັ້ນ ຫຼື ບໍ່ ຄົງຈະດີ.

ນັກຮຽນ C: ແມ່ນ, ການຕັດສິນດ້ວຍພາບວີດີໂອ ຕອນທີ່ວ່າບານອອກຈາກເສັ້ນ「ໝົດໝ່ອຍ」ແລ້ວ ຫຼື ບໍ່ນັ້ນ ຄົງຈະເຮັດໄດ້ງ່າຍ. ກົງກັນຂ້າມ, ຖ້າໃຊ້ແນວຄວາມຄິດທີ່ຖືເອົາຕອນທີ່ໃຈກາງຂອງໝາກບານຂ້າມໃຈກາງຂອງເສັ້ນນັ້ນ, ເນື່ອງຈາກຕົວເສັ້ນເອງກໍມີຄວາມໜາຫຼາຍ ຊັງຕີແມັດ. ສະນັ້ນ, ເຖິງຈະເປັນການຕັດສິນດ້ວຍພາບວີດີໂອ ກໍຍັງເບິ່ງຍາກວ່າຕອນໃດທີ່ຂ້າມເສັ້ນໄປແລ້ວ.

ອາຈານ: ທີ່ຈິງຕອນນີ້ແມ່ນຢູ່ໃນບາດກ້າວໄລຍະກາງຂອງການແລກປ່ຽນຂອງພວກເຮົາ, **ວັດຖຸປະສົງຂອງມາດຕານີ້ ອາດຕ້ອງການເຮັດໃຫ້ສາມາດຕັດສິນໄດ້ຢ່າງຍຸຕິທໍາ, ຕັດສິນງ່າຍ ແລະ ຮັບປະກັນຄວາມຊັດເຈນ.** ເມື່ອຄິດຕາມວັດຖຸປະສົງຂອງມາດຕາແລ້ວ Law 10.1 ທີ່ກໍານົດວ່າ ເມື່ອບານຂ້າມເສັ້ນ「ໝົດໝ່ອຍ」ນັ້ນຖືວ່າເປັນອັນທີ່ຊັດເຈນ ແລະການທີ່ເອົາແນວຄວາມຄິດທີ່ຊັດເຈນນີ້ ໄປທຽບໃສ່ Law 9.1 ແບບດຽວກັນນັ້ນ, ກໍຖືວ່າສົມເຫດສົມຜົນ ແລະສອດຄ່ອງກັບວັດຖຸປະສົງຂອງກະຕິການີ້.

ນັກຮຽນ B: ເຮົາຕ້ອງໄດ້ອະທິບາຍທັງໝົດນີ້ບໍ ອາຈານ ?

ອາຈານ: ເນື່ອງຈາກກົດໝາຍ ຫຼື ກະຕິກາຕ່າງໆມັກມີກໍລະນີທີ່ຄວາມໝາຍກໍາກວມ ແລະ ບໍ່ຊັດເຈນ. ສະນັ້ນ, ຖ້າບໍ່ມີການອະທິບາຍແລ້ວ ທັງຄູ່ຄວາມທີ່ຂັດແຍ່ງ ຫຼື ຕົວຜູ້ຫຼິ້ນ ກໍຈະບໍ່ລຸລ່ວງໃຈວ່າ ຕົນເອງເສຍຍ້ອນຫຍັງ. ຊຶ່ງອັນນີ້, ໃນການພິຈາລະນາຄະດີ ກັບໃນເກມກິລາບານເຕະ ກໍບໍ່ຕ່າງຫຍັງກັນ.

ນັກຮຽນ C: ແມ່ນແລ້ວ, ເພາະຖ້າກໍາມະການຕັດສິນຕາມໃຈມັກ ກະຕິກາກໍຄົງບໍ່ມີຄວາມໝາຍ.

ອາຈານ: **ແນວທີ່ເຂົ້າໃຈຍາກ, ຍິ່ງຕ້ອງອະທິບາຍຢ່າງເປັນມືອາຊີບ. ໃນຕອນນັ້ນ, ຖ້າສາມາດໃຊ້ການຕີຄວາມກົດໝາຍໄດ້ກໍໃຫ້ຄິດຕາມຕັກກະ ເພື່ອສາມາດອະທິບາຍໄດ້ຢ່າງຊັດເຈນ.**

- **ສັງລວມບາດກ້າວຂອງການຕີຄວາມກົດໝາຍ**

ກວດເບິ່ງແຕ່ STEP ①〜③ ຕາມລຳດັບ.

ກົດໝາຍ (ກະຕິກາ) ແມ່ນຖືກສ້າງໂດຍຜູ້ສ້າງກົດໝາຍ (ຜູ້ສ້າງກະຕິກາ) ຢ່າງມີຕັກກະ ແລະ ມີຄວາມເປັນເອກະພາບກັນ. ສະນັ້ນ, ການກວດເບິ່ງຂໍ້ກຳນົດຂອງມາດຕານັ້ນເປັນສິ່ງສຳຄັນ (STEP①②).

ກົດໝາຍ (ກະຕິກາ) ແມ່ນຖືກສ້າງຂຶ້ນເພື່ອໃຫ້ບັນລຸຕາມວັດຖຸປະສົງທີ່ແນ່ນອນໃດໜຶ່ງ. ສະນັ້ນ, ການຄົ້ນຄິດເຖິງວັດຖຸປະສົງຂອງກົດໝາຍ ຈຶ່ງເປັນສິ່ງສຳຄັນ (STEP③).

ກົດໝາຍ (ກະຕິກາ) ຍິ່ງກຳກວມ ແລະ ບໍ່ຊັດເຈນເທົ່າໃດ, ນັກກົດໝາຍຍິ່ງຕ້ອງອະທິບາຍດ້ວຍການຕີຄວາມ ຫຼາຍເທົ່ານັ້ນ.

**(2) ກໍລະນີສຶກສາ: ປ້າຍຫ້າມ (ການຕີຄວາມກົດໝາຍ: STEP ③, ຄົ້ນຄ້ວາວັດຖຸປະສົງຂອງມາດຕາ)**

ຕໍ່ໄປນີ້, ເຮົາຈະຄັດເອົາແຕ່ຂັ້ນຕອນການຕີຄວາມກົດໝາຍ STEP ③, ຊຶ່ງເປັນກໍລະນີທີ່ງ່າຍເພື່ອຄົ້ນຄິດໄປນຳກັນ.

**【ກໍລະນີສຶກສາ ປ້າຍຫ້າມບໍ່ໃຫ້ພາໝາເຂົ້າມານຳ】**

ຢູ່ໜ້າຂອງໂຮງແຮມແຫ່ງໜຶ່ງ ມີປ້າຍທີ່ຕັ້ງຢູ່ ແລະ ຂຽນວ່າ「ບໍ່ໃຫ້ພາໝາເຂົ້າມາໃນນີ້」. ໝາຍຄວາມວ່າ ຖ້າພາໝາເຂົ້າມາ ແມ່ນເປັນການລະເມີດ. ບາດນີ້, ຖ້າມີແຂກ A ພະຍາຍາມພາແມວເຂົ້າໄປນຳເດ ຈະເປັນແນວໃດ. ຖ້າເປັນແຂ້ຈະເປັນແນວໃດ ຫຼື ຖ້າເປັນແມງກະເບື້ອເດ ?[22]

[22] ອ້າງອີງຈາກເນື້ອໃນການບັນຍາຍໃນຫົວຂໍ້「ການຕີຄວາມກົດໝາຍອາຍາ」ຂອງ ສາດສະດາຈານ ມາໂກໂຕະ ອິດະ ທີ່ກອງປະຊຸມສຳມະນາຊຶ່ງຈັດຂຶ້ນທີ່ນະຄອນຫຼວງວຽງຈັນ. ສປປ ລາວ ໃນວັນທີ 6 ກຸມພາ ປີ 2024. ນອກນັ້ນ, ກໍອ້າງອີງມາຈາກກໍລະນີສຶກສາ ທີ່ຂຽນໃນປຶ້ມ『ບັນຍາຍສາດແຫ່ງກົດໝາຍອາຍາ, ພາກທົ່ວໄປ (ພິມຄັ້ງທີ 2)』ໜ້າ 56 (Yuhikaku Publishing Co., Ltd, ປີ2018)




# ແລ້ວຖ້າເປັນ ໂຕແຂ້ ເດ ?

ນັກຮຽນ (ຊາຍ): ຍ້ອນຂຽນຫ້າມແຕ່ໝາ, ຄັນພາແຂ້ເຂົ້າມານຳ ກະຄືສິບໍ່ເປັນຫຍັງ.

ອາຈານ: ອັນນີ້ກໍແມ່ນວິທີອ່ານກົດກະຕິກາທີ່ສົມເຫດສົມຜົນຢູ່. ແຕ່ຄັນເຮັດຈັ່ງຊັ້ນແທ້ກະສິໄດ້ຢູ່ບໍ ? ບໍ່ແມ່ນນ້ອງເບິ່ງຂ້າມຫຍັງໄປບໍ ?

ນັກຮຽນ (ຊາຍ): ທີ່ຈິງໂຕເອງເວົ້າເອງ ແຕ່ຫາກໍຄິດພໍ້ວ່າ ຖ້າເປັນແນວນັ້ນແທ້ ຄືງຈະວຸ້ນວາຍຫຼາຍ.

ນັກຮຽນ (ຍິງ): ຄັນວ່າແມ່ນແມວກະສິພໍໃຊແດ່, ແຕ່ຄັນພາແຂ້ມານຳນິ ຄືສິບໍ່ໄດ້ແທ້ໆ. ເພາະມັນອັນຕະລາຍ. ອືມ..ຄັນວ່າແມງກະເບື້ອຄືສິໄດ້ຢູ່.

ອາຈານ: ຄັນຄິດຕາມຄວາມສຳນຶກທົ່ວໄປກໍອາດຈະປະມານນັ້ນ. ແຕ່ຄັນເປັນແບບນັ້ນກໍຄືງຈະບໍ່ແມ່ນການຕີຄວາມກົດໝາຍ, ແຕ່ເປັນພຽງຄຳເຫັນຕາມທີ່ຮູ້ສຶກ ຫຼື ທີ່ເອີ້ນກັນວ່າ ຄຳເຫັນສ່ວນບຸກຄົນ. ເປັນນັກກົດໝາຍ ຕ້ອງພະຍາຍາມໃຫ້ເຫດຜົນທີ່ເໝາະສົມຈາກມຸມມອງທາງກົດໝາຍໂດຍການຕີຄວາມ.  ວັດຖຸປະສົງໃນການຕັ້ງປ້າຍ (ກົດກະຕິກາ) ນີ້ແມ່ນຫຍັງ ?

ນັກຮຽນ (ຍິງ): ອາຈານ ຄັນບໍ່ຖາມທາງໂຮງແຮມເອງ ກໍຄືງຈະບໍ່ຮູ້ຕິເບາະອາຈານ.

ອາຈານ: ຄັນເວົ້າແບບນັ້ນ, ຄັນແມ່ນກົດໝາຍເດ ເຖິງຈະເປັນເນື້ອໃນງ່າຍກໍຕາມ ຄັນບໍ່ໄປຖາມຜູ້ສ້າງທຸກເທື່ອ ກໍຈະບໍ່ຮູ້ວິທີອ່ານກົດໝາຍຊັ້ນບໍ ? ຄັນເປັນແນວນັ້ນ ມັນກໍຈະກາຍເປັນວ່າ ໃຊ້ກົດໝາຍບໍ່ເປັນໃດ. ເຮົາຕ້ອງລອງສຳນຶກພາບດ້ວຍຕົນເອງເບິ່ງວ່າ ວັດຖຸປະສົງຂອງປ້າຍຫ້າມ (ກົດກະຕິກາ), ເຈດຈຳນົງຂອງຜູ້ສ້າງກົດກະຕິກາ ນັ້ນແມ່ນຫຍັງ.

ນັກຮຽນ (ຊາຍ): ແມ່ນເພື່ອຄຸ້ມຄອງຂອບເຂດແວດລ້ອມ ເພື່ອໃຫ້ແຂກປອດໄພ ແລະ ໄດ້ພັກຜ່ອນແມ່ນບໍອາຈານ, ເພາະຄັນໝາມັນດຸ ກໍຄົງຈະອັນຕະລາຍ.

ອາຈານ: ອັນນັ້ນກໍເປັນໄປໄດ້ ແລ້ວມີອັນອື່ນອີກບໍ່

ນັກຮຽນ (ຍິງ): ຊັ້ນແມ່ນວັດຖຸປະສົງເພື່ອຮັກສາສະຖານທີ່ຂອງທາງໂຮງແຮມບໍອາຈານ. ເພາະໝາອາດໄປເຮັດໃຫ້ເຄື່ອງເຟີນິເຈີ້ ຫຼື ພົມເປື້ອນເປິະ ຫຼື ເສຍຫາຍໄດ້.

ອາຈານ: ຖືວ່າທັງສອງນ້ອງເຫັນໃນຈຸດທີ່ສຳຄັນເນາະ. ຖ້າເປັນເຈົ້າຂອງໂຮງແຮມ ສິ່ງທີ່ຕ້ອງເຮັດແນ່ນອນກໍຄືການປົກປ້ອງແຂກ ແລະ ສະຖານອາຄານ. ການທີ່ຕັ້ງປ້າຍຄືແນວນັ້ນ ຄັນເຮົາລອງຄິດນຳໜ້ອຍໜຶ່ງ ກໍເປັນສິ່ງທີ່ພໍຄິດໄດ້. ເມື່ອຄິດຈາກວັດຖຸປະສົງຂອງການຕິດຕັ້ງປ້າຍ (ກົດກະຕິກາ) ໄດ້ຄືແນວນີ້, ແລ້ວສັດອື່ນເດເປັນແນວໃດ.

ນັກຮຽນ (ຍິງ): ເນື່ອງຈາກວັດຖຸປະສົງຂອງການຕັ້ງປ້າຍ (ກົດກະຕິກາ) ແມ່ນເພື່ອປົກປ້ອງແຂກ ກັບສະຖານທີ່. ສະນັ້ນ, ສັດອື່ນທີ່ນອກຈາກໝາ ທີ່ຈະສ້າງບາດແຜໃຫ້ຄົນ ຫຼື ສະຖານທີ່ ກໍຄົງຈະຖືກຫ້າມເຊັ່ນກັນ.

ອາຈານ: ແມ່ນແລ້ວ, ແນ່ນອນວ່າໃນພາຍໜ້າ ອາດຕ້ອງມີການປັບປຸງວິທີຂຽນໃສ່ປ້າຍໃຫ້ຖືກຕ້ອງຕາມນັ້ນຈຶ່ງເປັນການດີ (ຖ້າເປັນກົດໝາຍ ກໍແມ່ນການປັບກົດໝາຍ), ແຕ່ສຳລັບບັນຫາສະເພາະໜ້າ ອາດຕ້ອງໄດ້ແກ້ໄປກ່ອນຕາມຕົວຈິງ. ໃນກໍລະນີນີ້, ການທີ່ເວົ້າວ່າ ຄັນຂຽນວ່າຫ້າມ「ໝາ」ຊັ້ນສຳລັບ「ແຂ້」ຄືສິບໍ່ມີປັນຫາຫຍັງແບບນີ້ ຄົງຈະບໍ່ຖືກຢ່າງແນ່ນອນ. ສຳລັບເຈົ້າຂອງໂຮງແຮມ (ຜູ້ສ້າງກົດໝາຍ) ເອງ ກໍຄົງບໍ່ມີທາງຄິດວ່າ ຖ້າເປັນແຂ້ແລ້ວຈະອະນຸຍາດ.

ສະນັ້ນ, **ນັກກົດໝາຍ ຈຳເປັນຕ້ອງອະທິບາຍໃຫ້ລະອຽດວ່າ ເປັນຫຍັງຂໍ້ສະຫຼຸບຈຶ່ງເປັນແນວນັ້ນຈາກມຸມມອງຂອງການຕີຄວາມກົດໝາຍ (ວັດຖຸປະສົງຂອງກົດໝາຍ). ສິ່ງສຳຄັນໃນທີ່ນີ້ກໍຄື ຄວາມເຂົ້າໃຈໃນວິທີການຄິດ ບໍ່ເຈາະຈົງແຕ່ສະເພາະຂໍ້ສະຫຼຸບ.**

ນັກຮຽນ (ຊາຍ): ນ້ອງຢາກຈົດໄວ້ ອາຈານຊ່ວຍສັງລວມໃຫ້ໄດ້ບໍ່ວ່າ ຖ້າເປັນນັກກົດໝາຍ ຄວນອະທິບາຍກ່ຽວກັບການຕີຄວາມກົດໝາຍ ຄືແນວໃດ.

ອາຈານ: ດີຫຼາຍ. **ເພື່ອຈະອະທິບາຍໃຫ້ມີຕັກກະນັ້ນ ສຳຄັນແມ່ນລຳດັບບາດກ້າວ.** ສະນັ້ນ, ໃຫ້ອະທິບາຍໄປແຕ່ລະຫົວຂໍ້.

## ➢ ຕົວຢ່າງວິທີການອະທິບາຍ

### 1. ການຕັ້ງບັນຫາ

ປ້າຍທີ່ຕັ້ງຢູ່ໜ້າໂຮງແຮມຂຽນໄວ້ວ່າ 「ຫ້າມພາໝາເຂົ້າມາ」, ແຕ່ ແຂກ A ພະຍາຍາມຈະເອົາສັດອື່ນທີ່ນອກ ເໜືອຈາກ「ໝາ」(ແຂ້, ແມວ, ແມງກະເບື້ອ) ເຂົ້າມານຳ. ທ່ານຄິດວ່າແບບນີ້ໄດ້ ຫຼື ບໍ່? ອັນນີ້ມັນເປັນບັນຫາການຕີຄວາມຂໍ້ຄວາມທີ່ຂຽນວ່າ「ໝາ」.

### 2. ການຕີຄວາມກົດໝາຍ: ຄົ້ນຄ້ວາວັດຖຸປະສົງຂອງກົດໝາຍ

ໃນປະເດັນນີ້, ສາມາດຄິດໄດ້ວ່າວັດຖຸປະສົງຂອງປ້າຍຫ້າມ ແມ່ນເພື່ອປົກປ້ອງແຂກ ແລະ ສະຖານທີ່.

ເມື່ອເປັນແນວນັ້ນ, ຄຳວ່າ「ໝາ」ທີ່ຂຽນໄວ້ໃນທີ່ນີ້ ແມ່ນໝາຍເຖິງສັດທົ່ວໄປ ທີ່ມີຄວາມສ່ຽງທີ່ຈະສ້າງຄວາມເສຍຫາຍໃຫ້ແຂກ ແລະ ສະຖານທີ່. ການຄິດແບບນີ້ຈຶ່ງມີຄວາມສົມເຫດສົມຜົນ.

### 3. ຄົ້ນຄ້ວາກ່ຽວກັບກໍລະນີສຶກສາ ເປັນອັນລະອຽດ

ໃນກໍລະນີນີ້, ແຂ້ທີ່ ແຂກ A ພະຍາຍາມຈະນຳເຂົ້າມານັ້ນ, ເປັນສິ່ງທີ່ພາໃຫ້ເກີດຄວາມສ່ຽງທີ່ຈະກະທົບຕໍ່ຄວາມປອດໄພຂອງແຂກອື່ນໆ. ນອກນັ້ນ, ສຳລັບແມວ ແມ່ນຢູ່ວ່າມີຄວາມອັນຕະລາຍໜ້ອຍກ່ວາແຂ້. ແຕ່ກໍມີໂອກາດທີ່ຈະໄປຂູດແຂກຄົນ ຫຼື ສະຖານທີ່ ຊຶ່ງຈັດໃນລະດັບທີ່ບໍ່ຕ່າງຫຍັງກັບໝາ. ກົງກັນຂ້າມ, ຄັນເປັນແມງກະເບື້ອ ເຖິງວ່າຈະໜີອອກຈາກກ່ອງໃສ່ໄດ້ ແຕ່ກໍເປັນການຍາກທີ່ຈະສ້າງຄວາມເສຍຫາຍໃຫ້ຄົນ ເມື່ອທຽບກັບໝາເຫັນວ່າມີຄວາມສ່ຽງຕ່ຳກ່ວາຫຼາຍ.

ເມື່ອຄິດໄດ້ຄືແນວນີ້, ແຂ້ກັບແມວ ຖືເປັນສັດທີ່ມີຄວາມສ່ຽງ ທີ່ຈະສ້າງຄວາມເສຍຫາຍໃຫ້ແຂກຄົນ ແລະ ສະຖານທີ່. ຈຶ່ງຖືວ່ານອນໃນຄຳວ່າ「ໝາ」ທີ່ກຳນົດໃນປ້າຍ (ກົດກະຕິກາ) ນີ້ ແລະ ການຈັດຢູ່ໃນໝວດເກືອດຫ້າມແມ່ນຖືວ່າເໝາະສົມ. ສ່ວນສຳລັບ ແມງກະເບື້ອ ແມ່ນມີຄວາມສ່ຽງໃນລັກສະນະນີ້ຕ່ຳກ່ວາ ຈຶ່ງບໍ່ນອນໃນຄຳວ່າ「「ໝາ」ທີ່ຂຽນກຳນົດຢູ່ໃນປ້າຍ (ກົດກະຕິກາ)ນີ້」.

## 4. ສະຫຼຸບ

ດັ່ງທີ່ໄດ້ອະທິບາຍມາຂ້າງເທິງ, ແຂກ A ບໍ່ສາມາດພາແຂ້ ແລະ ແມວ ເຂົ້າມາໂຮງແຮມນີ້. ສ່ວນສຳລັບແມງກະເບື້ອ ແມ່ນສາມາດນຳເຂົ້າມາໄດ້.

ນັກຮຽນ (ຍິງ): ກໍລະນີນີ້, ແມ່ນເຮົາຄິດໂດຍຖືເອົາຄວາມໝາຍຂອງຄຳວ່າ「ໝາ」ໃນປ້າຍ ມາເປັນວັດຖຸປະສົງໃນການຕັ້ງກົດໝາຍ (ປ້າຍຫ້າມ) ແມ່ນບໍ່.

ນັກຮຽນ (ຊາຍ): ຜ່ານມາ ນ້ອງກໍຍັງບໍ່ເຄີຍຄົ້ນຄິດໄປຮອດ「ວັດຖຸປະສົງຂອງກົດໝາຍ」ຈັກເທື່ອ.

ອາຈານ: ຍ້ອນກົດໝາຍມີວັດຖຸປະສົງໃນຕົວ. ສະນັ້ນ, ມັນຈຶ່ງຖືກສ້າງຂຶ້ນມາ. ຍ້ອນແນວນັ້ນ, ຄັນເວົ້າໄດ້ຕາມລຳດັບຄືທີ່ກ່າວມານີ້, ມັນຈະເຮັດໃຫ້ເຂົ້າໃຈໄດ້ກ່ວາການເວົ້າວ່າ「ຍ້ອນມັນອັນຕະລາຍ」ຢ່າງດຽວ. **ຈຸດສຳຄັນແມ່ນການອະທິບາຍຈາກ「ວັດຖຸປະສົງຂອງກົດໝາຍ」ຢ່າງເໝາະສົມ ບໍ່ແມ່ນການເວົ້າຄຳເຫັນຕາມແຕ່ໃຈມັກ. ສະນັ້ນ, ໃຫ້ພວກເຮົາສ້າງນິໄສໃນການຄົ້ນຄິດເຖິງວັດຖຸປະສົງຂອງກົດໝາຍຢູ່ສະເໝີ.**

ນັກຮຽນ (ຍິງ): ໂດຍ「ວັດຖຸປະສົງຂອງກົດໝາຍ」ນີ້ເນາະອາຈານ.

ອາຈານ: ບາດນີ້ມີຄຳຖາມໃໝ່, ໃນກໍລະນີທີ່ບັນຫາດັ່ງກ່າວຫາກບໍ່ໄດ້ເກີດຂຶ້ນຢູ່ໂຮງແຮມ ແຕ່ເກີດຂຶ້ນຢູ່ສູນຄົ້ນຄ້ວາເຊື້ອແບັກທີເຣຍ ຊຶ່ງຢູ່ບ່ອນນັ້ນມີປ້າຍຫ້າມແບບນີ້ຕັ້ງຢູ່ເດ ຈະສາມາດເອົາແມງກະເບື້ອເຂົ້າໄປນຳໄດ້ບໍ່? ວັດຖຸປະສົງຂອງປ້າຍ (ກົດໝາຍ) ຈະປ່ຽນໄປຫຼືບໍ່?

**【ກໍລະນີສຶກສາ ປ້າຍຫ້າມບໍ່ໃຫ້ພາໝາເຂົ້າມານຳ (ດັດປັບເນື້ອໃນ)】**

ຢູ່ໜ້າຂອງສູນຄົ້ນຄ້ວາເຊື້ອແບັກທີເຣຍແຫ່ງໜຶ່ງ ມີປ້າຍທີ່ຕັ້ງຢູ່ ແລະ ຂຽນວ່າ「ບໍ່ໃຫ້ພາໝາເຂົ້າມາໃນນີ້」. ຖ້າມີ B ພະຍາຍາມພາແມວເຂົ້າໄປນຳເດ ຈະເປັນແນວໃດ. ຖ້າເປັນແຂ້ຈະເປັນແນວໃດ ຫຼື ຖ້າເປັນແມງກະເບື້ອເດ?

ໃນກໍລະນີຕົວຢ່າງຂ້າງເທິງ, ຄຳຖາມໂຕສຸດທ້າຍແມ່ນເປັນຕົວຢ່າງທີ່ດີ ເພື່ອຄົ້ນຄິດກ່ຽວກັບວັດຖຸປະສົງຂອງກົດໝາຍ ແລະ ເຈດຈຳນົງຂອງຜູ້ສ້າງກົດໝາຍ. ໂດຍສົມທຽບກັບກໍລະນີໂຮງແຮມຈະເຫັນໄດ້ວ່າລະຫວ່າງໂຮງແຮມ ກັບ ສູນຄົ້ນຄ້ວາເຊື້ອແບັກທີເຣຍ ແມ່ນມີສິ່ງທີ່ຢາກປົກປ້ອງແຕກຕ່າງກັນຢ່າງຊັດເຈນ.

ສຳລັບໂຮງແຮມ ວັດຖຸປະສົງແມ່ນປົກປ້ອງແຂກ ແລະ ສະຖານທີ່. ສ່ວນສູນຄົ້ນຄ້ວາແບັກທີເຣຍ ເດ ແມ່ນອັນໃດ. ແນ່ນອນວ່າຕ້ອງມີຄົນ ຊຶ່ງອາດເປັນນັກຄົ້ນຄ້ວາ ຫຼື ຜູ້ມາຢ້ຽມຢາມ ແລະ ລວມທັງປົກປ້ອງສະຖານທີ່ ຊຶ່ງອັນນີ້ກໍຄືກັນກັບມຸມມອງຂອງໂຮງແຮມ. ແຕ່ນອກເໜືອຈາກນັ້ນ, ອາດຍັງຢາກປ້ອງກັນຜົນກະທົບຕໍ່ສູນຄົ້ນຄ້ວາຈາກການນຳເອົາເຊື້ອແບັກທີເຣຍ ກໍຄືວັດຖຸຕ່າງໆຈາກຂ້າງນອກເຂົ້າມາ ແລະ ບາງເທື່ອຖ້າໂຊກບໍ່ດີກໍອາດເຮັດໃຫ້ເຊື້ອແບັກທີເຣຍພາຍໃນສູນ ໄປຕິດນຳສັດແລ້ວຮົ່ວໄຫຼອອກໄປຂ້າງນອກ ຈົນເຮັດໃຫ້ເກີດມີການຕິດແປດຢູ່ຂ້າງນອກ. ຊຶ່ງອາດກໍໃຫ້ເກີດໄພພິບັດໃຫຍ່ຂຶ້ນໃນສັງຄົມ.

ເມື່ອລອງຄົ້ນຄິດວັດຖຸປະສົງຂອງປ້າຍ (ກົດກະຕິກາ) ຈະເຫັນວ່າ ກໍລະນີຢູ່ສູນຄົ້ນຄ້ວາເຊື້ອແບັກທີເຣຍ ແລ້ວແມງກະເບື້ອໜີອອກມາແລ້ວບິນໄປທົ່ວອາຄານ, ເຖິງເປັນພຽງແມງກະເບື້ອ ແຕ່ກໍສາມາດເຮັດໃຫ້ເກີດຄວາມເສຍຫາຍທີ່ໃຫຍ່ຫຼວງໄດ້ເຊັ່ນກັນ. ສະນັ້ນ, ການທີ່ຈະຫ້າມບໍ່ໃຫ້ນຳເຂົ້າມາກໍເປັນສິ່ງທີ່ພໍຄິດໄດ້.

ແຕ່ດັ່ງທີ່ໄດ້ກ່າວມາຫຼາຍຄັ້ງແລ້ວຄື ສິ່ງສຳຄັນໃນທີ່ນີ້ບໍ່ແມ່ນຂໍ້ສະຫຼຸບ, ແຕ່ກະທູ້ໃນການແລກປ່ຽນ ເຮົາຈະສຸມໃສ່ປະເດັນທີ່ວ່າ「ກົງກັບວັດຖຸປະສົງຂອງກົດໝາຍ ຫຼື ບໍ່」ໂດຍການວິເຄາະວັດຖຸປະສົງຂອງກົດໝາຍຢ່າງລະອຽດໃນນາມເປັນການຕີຄວາມກົດໝາຍ. ເຖິງຈະມີອັນຜິດດ່ຽງເລັກໜ້ອຍກໍຕາມ, ແຕ່ມັນກໍສາມາດນຳໄປສູ່ຂໍ້ສະຫຼຸບທີ່ເປັນແລວທາງອັນດຽວກັນໄດ້. ກົງກັນຂ້າມຖ້າບໍ່ຄຳນຶງເຖິງວັດຖຸປະສົງຂອງກົດໝາຍ ແລ້ວແລກປ່ຽນກັນຢ່າງເສລີນັ້ນ, ແມ່ນໃຜກໍສາມາດເວົ້າຄຳເຫັນຂອງຕົນອອກມາຕາມແຕ່ໃຈຄິດໄດ້ ແຕ່ສຸດທ້າຍຄຳເຫັນຂອງຜູ້ທີ່ເວົ້າສຽງແຮງກ່ວາໝູ່ ກໍອາດໄດ້ຮັບການຮັບຮອງກໍເປັນໄດ້.

- **ສັງລວມຄຳຕອບຕົວຢ່າງກ່ຽວກັບການຕີຄວາມກົດໝາຍ**

1. ຍົກໃຫ້ເຫັນປະເດັນບັນຫາ.
2. ຕີຄວາມກົດໝາຍ ໂດຍຄົ້ນຄິດຕາມວັດຖຸປະສົງຂອງກົດໝາຍ (ມາດຕາ) ດັ່ງກ່າວ.
3. ຄົ້ນຄິດກ່ຽວກັບບັນຫາຕົວຈິງ ຈາກວັດຖຸປະສົງ.
4. ໃຫ້ຂໍ້ສະຫຼຸບ.

**(3) ອະທິບາຍຕາມວັດຖຸປະສົງຂອງກົດໝາຍ**

ຜ່ານມາເຮົາໄດ້ອະທິບາຍວິທີການພື້ນຖານຂອງທັກສະການຕີຄວາມກົດໝາຍ ໂດຍອີງໃສ່ກໍລະນີສຶກສາກີລາບານເຕະ ແລະ ປ້າຍຫ້າມ. ບາດນີ້ຄັນປ່ຽນມາເປັນມາດຕາຂອງກົດໝາຍ ສ່ວນຫຼາຍຄົນມັກຄິດວ່າ ມັນຈະຍາກ, ແຕ່ທີ່ຈິງແລ້ວວິທີຄິດພື້ນຖານແມ່ນບໍ່ແຕກຕ່າງກັນ. ທຳອິດຕ້ອງກວດເບິ່ງມາດຕາ

ຢ່າງລະອຽດ, ແລ້ວຄົ້ນຄິດເບິ່ງວັດຖຸປະສົງຂອງກົດໝາຍ (ມາດຕາ), ແລ້ວອີງໃສ່ສິ່ງນັ້ນໃນການອະທິບາຍ ເພາະຄຳເຫັນໃດທີ່ອອກນອກເໜືອຈາກວັດຖຸປະສົງຂອງມາດຕາ ແລະ ກົດໝາຍ ມັນຍ່ອມບໍ່ມີຄວາມສາມາດໃນການອະທິບາຍບັນຫາໄດ້ຢ່າງຄົບຖ້ວນ.

ຍ້ອນແນວນັ້ນ, **ກ່ອນທີ່ຈະຍົກຄຳເຫັນຂອງຕົນຂຶ້ນມາ, ບໍ່ວ່າເປັນທາງປາກເປົ່າ ຫຼື ເປັນລາຍລັກອັກສອນນັ້ນ, ທຳອິດຕ້ອງອະທິບາຍບັນຫາໃນທາງກົດໝາຍໃຫ້ໄດ້ສາກ່ອນ ໂດຍເລີ່ມຕົ້ນຈາກການບອກເລົ່າ「ຄວາມໝາຍຂອງຂໍ້ຄວາມໃນມາດຕານີ້ແມ່ນ...」ໂດຍ「ວັດຖຸປະສົງຂອງມາດຕານີ້ແມ່ນ ...」** ເພາະຖ້າເຮັດໄດ້ແບບນີ້, ກໍຈະເຮັດໃຫ້ສາມາດຍາດໄດ້ທັກສະທີ່ສຳຄັນທາງກົດໝາຍ ທີ່ເອີ້ນວ່າ ການຕີຄວາມກົດໝາຍໄດ້. ການທີ່ສາມາດຄົ້ນຄິດບົນພື້ນຖານທາງກົດໝາຍໄດ້ນັ້ນ ມັນເປັນຈຸດແຂງຂອງນັກກົດໝາຍ ແລະທັງເປັນເງື່ອນໄຂຈຳເປັນທີ່ຂາດບໍ່ໄດ້ສຳລັບນັກກົດໝາຍ.

- **ສັງລວມເນື້ອໃນກ່ຽວກັບວັດຖຸປະສົງຂອງກົດໝາຍ**

ກົດໝາຍຖືກສ້າງຂຶ້ນ ເພື່ອບັນລຸຕາມວັດຖຸປະສົງທີ່ແນ່ນອນໃດໜຶ່ງ

ໃຫ້ເຮົາຄົ້ນຄິດດ້ວຍຕົນເອງເຖິງວັດຖຸປະສົງຂອງກົດໝາຍຢູ່ສະເໝີ

ຕອນທີ່ເວົ້າຄຳເຫັນຂອງຕົນອອກມານັ້ນ, ຕ້ອງຝຶກຝົນການອະທິບາຍ「ວັດຖຸປະສົງຂອງກົດໝາຍນີ້ແມ່ນ....」ຊຶ່ງເປັນການແລກປ່ຽນບັນຫາບົນພື້ນຖານຂອງກົດໝາຍ.

## 6. ຕົວຢ່າງຂອງການຕີຄວາມກົດໝາຍ (ກໍລະນີຕົວຢ່າງປະມວນກົດໝາຍແພ່ງ)

ສຳລັບການຕີຄວາມກົດໝາຍ ໂດຍນຳໃຊ້ກໍລະນີຕົວຢ່າງຂອງປະມວນກົດໝາຍແພ່ງ ແມ່ນນອນຢູ່ໃນການອະທິບາຍການຕີຄວາມມາດຕາ 395 ວັກ 1 ຂ້າງເທິງແລ້ວ ແລະ ກໍໄດ້ອະທິບາຍຢູ່ໃນຂໍ້「**2. ບາດກ້າວການປະຕິບັດປະມວນກົດໝາຍແພ່ງ ແລະ ການຕີຄວາມກົດໝາຍ**」ແລະ「**4. ບາດກ້າວການຕີຄວາມກົດໝາຍ (ຂັ້ນພື້ນຖານ)**」ຂ້າງເທິງໄປແລ້ວ. ສະນັ້ນ, ທ່ານທີ່ອ່ານມາຮອດນີ້ ໃຫ້ລອງກັບໄປອ່ານຫົວຂໍ້ທີ່ກ່າວມານີ້ ຈະເຮັດໃຫ້ທ່ານເຂົ້າໃຈເນື້ອໃນທີ່ຂຽນໄດ້ດີຂຶ້ນກ່ວາເກົ່າ.

ນອກນັ້ນ, ສຳລັບມາດຕາຂອງກົດໝາຍ ມັນຍັງມີຫຼາຍມາດຕາທີ່ເບິ່ງຄືເປັນບັນຫາຕາຍຕົວ ແຕ່ຖ້າບໍ່ຕີຄວາມກໍຈະບໍ່ສາມາດເຂົ້າໃຈໄດ້ຢ່າງຖືກຕ້ອງ. ໃນສ່ວນນີ້ຈະຂໍຍົກເນື້ອຫາເພື່ອເປັນການຄົ້ນຄ້ວາຈາກບາງມາດຕາຂອງປະມວນກົດໝາຍແພ່ງ. ສຳລັບມາດຕາກົດໝາຍ ບໍ່ແມ່ນວ່າຈະຂຽນນິຍາມທາງກົດໝາຍໃສ່ ໝົດທຸກອັນແລ້ວຈະໄດ້ເລີຍ. ເພາະຖ້າເປັນແນວນັ້ນ ໃນທຸກກົດໝາຍກໍຈະເຕັມແຕ່ຄຳນິຍາມ. ມັນຈຳເປັນຕ້ອງໄດ້ຄິດຫາຂໍ້ສະຫຼຸບດ້ວຍຕົນເອງ ແລ້ວໃຊ້ການຕີຄວາມນຳເຮົາໄປສູ່ຂໍ້ສະຫຼຸບ.

ດັ່ງນັ້ນ, ໃຫ້ທ່ານຄົ້ນຄິດກ່ຽວກັບບັນຫາຂ້າງລຸ່ມນີ້ ໂດຍການນຳໃຊ້ທັກສະຂອງການຕີຄວາມກົດໝາຍທີ່ໄດ້ຮຽນຮູ້ມາກ່ອນໜ້າ. ໂດຍເຮົາຈະໝາຍ ※ ໃສ່ຈຸດທີ່ເປັນແນວທາງໃນຕອນຄົ້ນຄ້ວາ.

### (1) ປະມວນກົດໝາຍແພ່ງ ມ.63 ວັກ 1: 「ມື້ທີ່ເກີດ」ຂອງຄົນ ແມ່ນນັບແຕ່ຕອນໃດ.

ແນວຄວາມຄິດ A: ຕອນທີ່ແມ່ເລີ່ມເຈັບທ້ອງອອກລູກ

ແນວຄວາມຄິດ B: ຕອນທີ່ເດັກ ອອກມາຈາກຮ່າງກາຍຂອງແມ່ ສ່ວນໃດສ່ວນໜຶ່ງ

ແນວຄວາມຄິດ C: ຕອນທີ່ເດັກ ອອກມາຈາກຮ່າງກາຍແມ່ ໝົດທຸກສ່ວນ

※ວັດຖຸປະສົງຂອງ ມ.63 ທີ່ກຳນົດກ່ຽວກັບມື້ເລີ່ມຕົ້ນ ແລະ ມື້ສິ້ນສຸດຄວາມສາມາດທາງດ້ານກົດໝາຍ ແມ່ນຫຍັງ?

### (2) ປະມວນກົດໝາຍແພ່ງ ມ.52: ໄລຍະ 3 ປີ ຂອງອາຍຸຄວາມເສຍສິດ ແມ່ນເລີ່ມຄິດໄລ່ຈາກຕອນໃດ ?

※ກວດເບິ່ງມາດຕາທີ່ກ່ຽວຂ້ອງທີ່ຢູ່ອ້ອມຂ້າງ, ວັດຖຸປະສົງຂອງກົນໄກການມີອາຍຸຄວາມເສຍສິດແມ່ນຫຍັງ?

**(3) ປະມວນກົດໝາຍແພ່ງ ມ.52 , ມ.53: ໄລຍະ 3 ປີ ຂອງອາຍຸຄວາມເສຍສິດ ຄິບຕອນໃດ?**

ແນວຄວາມຄິດ A: ຕອນທີ່ກາຍ 3 ປີໄປແລ້ວ

ແນວຄວາມຄິດ B: ຕອນທີ່ ຄູ່ຄວາມໄດ້ກ່າວອ້າງເຖິງອາຍຸຄວາມ

**(4) ປະມວນກົດໝາຍແພ່ງ ມ.24 ວັກ 1 ຂໍ້ 1 ນິຕິກຳເປັນໂມຄະຍ້ອນ「ການຫຼົງຜິດ」: ຖ້າມີການຫຼົງຜິດແລ້ວ ບໍ່ວ່າກໍລະນີໃດກໍເປັນໂມຄະບໍ ?**

※ວັດຖຸປະສົງຂອງ ມ.24 ທີ່ກຳນົດການເປັນໂມຄະຍ້ອນການຫຼົງຜິດ ແມ່ນຫຍັງ? ໃນກໍລະນີທີ່ຜູ້ຫຼົງຜິດ ບໍ່ລະມັດລະວັງຂັ້ນຮຸນແຮງ ກໍຄວນປົກປ້ອງບໍ ?

**(5) ປະມວນກົດໝາຍແພ່ງ ມ.24 ວັກ 1 ຂໍ້ 1 「ການຮັບຮອງເອົາ」ນິຕິກຳເປັນໂມຄະ: ແມ່ນໃຜເປັນຜູ້ສາມາດຮັບຮອງເອົາ**

※「ຜູ້ທີ່ເສຍສິດ ແລະ ຜົນປະໂຫຍດ」ແມ່ນໃຜ. ວັດຖຸປະສົງການມີກົນໄກໃນການຮັບຮອງເອົາແມ່ນຫຍັງ. ຜູ້ທີ່ຖືກຕົວະຍົວະຫຼອກລວງເອງ ສາມາດຮັບຮອງເອົາໄດ້ບໍ່ ? ກໍລະນີຜູ້ຖືກຕົວະຍົວະຫຼອກລວງແມ່ນຜູ້ຕາງໜ້າ ແລ້ວຜູ້ຕາງໜ້າດັ່ງກ່າວສາມາດຮັບຮອງເອົາໄດ້ບໍ ? ຜົວຂອງຜູ້ຖືກຕົວະຍົວະຫຼອກລວງ ສາມາດຮັບຮອງເອົາໄດ້ບໍ ?

**(6) ປະມວນກົດໝາຍແພ່ງ ມ.395 ວັກ 1: 「ເນື້ອໃນສຳຄັນຂອງສັນຍາ」ທີ່ເຮັດໃຫ້ສາມາດຍົກເລີກສັນຍາໄດ້ນັ້ນແມ່ນອັນໃດ?**

※ວັດຖຸປະສົງຂອງມາດຕານີ້ ແມ່ນຫຍັງ ?

※ໃນສັນຍາເຊົ່ານັ້ນ ຄ່າເຊົ່າ「ສຳຄັນ」ບໍ ? (ຖ້າສຳຄັນແມ່ນສາມາດເຮັດໃຫ້ຍົກເລີກສັນຍາໄດ້). ພຽງແຕ່ຄ້າງຈ່າຍຄ່າເຊົ່າເດືອນດຽວ ແມ່ນສາມາດເຮັດໃຫ້ຍົກເລີກສັນຍາໄດ້ບໍ່ ? ຖ້າຄ້າງຈ່າຍ 3 ເດືອນເດ ຈະເປັນແນວໃດ ? ຄ້າງຈ່າຍ 1 ປີເດ ຈະເປັນແນວໃດ ?

※ໃນສັນຍາຊື້-ຂາຍ ກຳນົດການປະຕິບັດສັນຍາ「ສຳຄັນ」ບໍ? (ຖ້າສຳຄັນແມ່ນສາມາດເຮັດໃຫ້ຍົກເລີກສັນຍາໄດ້). ຖ້າຫຼ້າຊ້າແຕ່ 1 ມື້ ຈະເປັນແນວໃດ ? ຫຼ້າຊ້າ 1 ອາທິດເດ ເປັນແນວໃດ ? ຖ້າຫຼ້າຊ້າ 1 ປີເດ ຈະເປັນແນວໃດ ? ນອກນັ້ນ, ຄັນເປັນກໍລະນີການຊື້-ຂາຍທີ່ມີຊັບ

ທີ່ເປັນເປົ້າໝາຍເປັນເຂົ້າໜຽວເດ ຈະເປັນແນວໃດ ? ກໍລະນີເປັນໂມງລາຄາສູງເດ? ແລະ ຖ້າເປັນຊຸດແຕ່ງງານ ແລະ ເຄັກ ສຳລັບງານແຕ່ງງານເດ ຈະເປັນແນວໃດ ?

※ໃນຂໍ້ 4 ຂ້າງເທິງ ໃຫ້ເບິ່ງຕົວຢ່າງການອະທິບາຍຢູ່ຫົວຂໍ້ 「ບາດກ້າວຂອງການຕີຄວາມກົດໝາຍ (ຂັ້ນພື້ນຖານ)」

ສຳລັບຄຳຖາມຂ້າງເທິງນັ້ນ, ສ່ວນໜຶ່ງໂຄງການສົ່ງເສີມການພັດທະນາ ແລະ ສ້າງຄວາມເຂັ້ມແຂງລັດທີ່ປົກຄອງດ້ວຍກົດໝາຍໃນຂົງເຂດຍຸຕິທຳ ຂອງອົງການໄຈກາ ກໍກຳລັງເຄື່ອນໄຫວຄົ້ນຄ້ວາ ແລະ ຢູ່ໃນຂັ້ນຕອນການຂຽນປື້ມຄູ່ມືຢູ່. ໃນອະນາຄົດອາດຖືກຕີພິມອອກມາ ຊຶ່ງໃນຕອນນັ້ນທາງໂຄງການຈະເຜີຍແຜ່ສະບັບເອເລັກໂຕນິກຂອງເອກະສານດັ່ງກ່າວລົງໃນເວບໄຊ. ນອກນັ້ນ, ພວກເຮົາຈະແປະ Link ເຂົ້າອ່ານເອກະສານໄວ້ຂ້າງລຸ່ມ ຊຶ່ງຢູ່ໃນນັ້ນຍັງລວມມີບັນດາຕຳລາທາງກົດໝາຍທີ່ສຳຄັນອື່ນໆອີກ. ທ່ານສາມາດເຂົ້າຊົມໃຊ້ໄດ້ຕາມອັດທະຍາໄສ.

## 7. ມ້ວນທ້າຍ

ຜ່ານມາປື້ມຫົວນີ້ ແມ່ນໄດ້ອະທິບາຍແລວທາງຂອງວິທີຄິດ ເພື່ອໃຫ້ເຂົ້າໃຈງ່າຍທີ່ສຸດເທົ່າທີ່ຈະເປັນໄປໄດ້ ໂດຍຄັດຈ້ອນເອົາແຕ່ເລື່ອງທັກສະການຕີຄວາມກົດໝາຍ. ຕອນທໍາອິດອາດຈະເບິ່ງຄືຍາກແດ່ແຕ່ເມື່ອສາມາດຄົ້ນຄິດກ່ຽວກັບວັດຖຸປະສົງຂອງກົດໝາຍໄດ້ແລ້ວ ທ່ານກໍຈະເຫັນໄດ້ວ່າກົດໝາຍບໍ່ແມ່ນອະນິງຄະທາດ (ສິ່ງບໍ່ມີຊີວິດ). ຫາກແຕ່ແມ່ນສິ່ງມີຊີວິດ ທີ່ມີວັດຖຸປະສົງໃນຕົວຂອງມັນເອງ. ເມື່ອເປັນແນວນັ້ນ, ກໍຈະເລີ່ມຮູ້ສຶກໄດ້ວ່າກົດໝາຍບໍ່ແມ່ນບົດທ່ອງຂຶ້ນໃຈ ແຕ່ມີລັກສະນະເປັນປັດສະຍາ, ເປັນຕັກກະສາດ ແລະ ເປັນສິ່ງທີ່ໜ້າຮຽນຮູ້. ນອກນັ້ນ, ການທີ່ສາມາດເຂົ້າໃຈເຖິງວັດຖຸປະສົງຂອງມາດຕາກົດໝາຍ ແລະ ທີ່ມາຂອງມັນໄດ້ແລ້ວ ຈະເຮັດໃຫ້ການເຂົ້າໃຈມາດຕາຫຼືການນໍາໃຊ້ນັ້ນເປັນໄປໄດ້ງ່າຍກ່ວາເກົ່າ ພ້ອມທັງເຮັດໃຫ້ສາມາດແລກປ່ຽນທາງທິດສະດີໄດ້ຢ່າງເລິກຊຶ້ງອີກດ້ວຍ.

ຂໍໃຫ້ທ່ານຄິດເຫັນວິທີຄິດຂອງການຕີຄວາມກົດໝາຍ ບໍ່ວ່າໃນການຮໍ່າຮຽນ ຫຼື ການເຮັດວຽກງານປະຕິບັດຕົວຈິງໃນຕໍ່ໜ້າ, ໃຫ້ມັນຄ່ອຍຄ່ອຍຕິດຕົວທ່ານໄປ. ເພື່ອເຮັດໄດ້ແນວນັ້ນ, **ຈຶ່ງຢາກຂໍໃຫ້ທ່ານ ສືບຕໍ່ສ້າງໃຫ້ເປັນນິໄສທີ່ຄົ້ນຄິດກ່ຽວກັບ「ວັດຖຸປະສົງຂອງກົດໝາຍ」 ທີ່ນໍາສະເໜີໃນປື້ມຫົວນີ້ຢູ່ສະເໝີ ບໍ່ວ່າຈະໃນຕອນສຶກສາຄົ້ນຄ້ວາ ຫຼື ໃນວຽກງານພາກປະຕິບັດໃນຕໍ່ໜ້າຂອງທ່ານດ້ວຍ.**

ອີກອັນໜຶ່ງ, ນອກຈາກທັກສະການຕີຄວາມກົດໝາຍທີ່ໄດ້ອະທິບາຍໃນປື້ມຫົວນີ້ແລ້ວ, ຍັງມີທັກສະອື່ນໆອີກເຊັ່ນ ທັກສະພື້ນຖານໃນການຮ້ອງຟ້ອງ (ແນວຄວາມຄິດກ່ຽວກັບສິດທວງ, ເງື່ອນໄຂທີ່ພາໃຫ້ເກີດສິດທວງ ແລະ ປະເດັນຂັດແຍ່ງ ໃນກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ), ທັກສະການຄົ້ນຄິດບັນຫາຢ່າງມີຕັກກະສາດ (ຫຼັກການການໃຫ້ເຫດຜົນທາງກົດໝາຍເປັນສາມບາດກ້າວ), ທັກສະການກໍານົດຂໍ້ເທັດຈິງຂອງຄະດີ. ທັກສະທາງກົດໝາຍທີ່ເປັນພື້ນຖານ ແລະ ສໍາຄັນທີ່ທາງເຮົາຢາກນໍາສະເໜີຍັງມີອີກຫຼາຍ. ສໍາລັບບັນດາເນື້ອໃນເຫຼົ່ານີ້ ຖ້າມີໂອກາດ ແມ່ນບໍ່ສະເພາະແຕ່ຂ້າພະເຈົ້າ ແຕ່ຍັງຈະມີຜົນງານຈາກທາງໂຄງການສົ່ງເສີມການພັດທະນາ ແລະ ສ້າງຄວາມເຂັ້ມແຂງລັດທີ່ປົກຄອງດ້ວຍກົດໝາຍໃນຂົງເຂດຍຸຕິທໍາ ຂອງ JICA ກໍຄືຈາກຊ່ຽວຊານປະຈໍາການທ່ານອື່ນອີກທີ່ຈະນໍາມາແບ່ງປັນ. ຂໍໃຫ້ທ່ານຕິດຕາມການເຄື່ອນໄຫວວຽກງານຂອງພວກເຮົາດ້ວຍ.

ຫວັງເປັນຢ່າງຍິ່ງວ່າປື້ມຫົວນີ້, ຈະຊ່ວຍໃນການເປັນແຮງຊຸກຍູ້ການຮຽນຮູ້ເອົາທັກສະທາງກົດໝາຍຂອງນັກກົດໝາຍ ກໍຄືນັກຮຽນນັກສຶກສາຂອງ ສປປ ລາວ ນໍາບົດຮຽນນີ້ໄປໝູນໃຊ້ປະຕິບັດຈະເຮັດໃຫ້ລະບົບກົດໝາຍ ແລະ ການຄຸ້ມຄອງລັດດ້ວຍກົດໝາຍຂອງ ສປປ ລາວ ສືບຕໍ່ພັດທະນາຂຶ້ນເທື່ອລະກ້າວ.

- **ສັງລວມເນື້ອໃນຂອງປຶ້ມ**

ຈາກນີ້ ບໍ່ວ່າໃນຫ້ອງບັນຍາຍ ຫຼື ໃນວຽກງານພາກປະຕິບັດຕົວຈິງ ຂໍໃຫ້ທ່ານອ່ານຂໍ້ຄວາມທີ່ຂຽນໃນມາດຕາຢ່າງເລິກຊຶ່ງ.

ເວລາຄົ້ນຄ້ວາ ແມ່ນໃຫ້ຄົ້ນຄິດເຖິງວັດຖຸປະສົງຂອງກົດໝາຍຢູ່ສະເໝີ.

ເວລາອອກຄຳເຫັນ ກໍໃຫ້ອະທິບາຍຈາກວັດຖຸປະສົງຂອງກົດໝາຍ.

ໃຫ້ຮຽນຮູ້ຊຶມຊັບເອົາເນື້ອໃນທີ່ກ່າວມານີ້ ແລ້ວໃຫ້ກ້າວໄປຫາການຮຽນຮູ້ເອົາທັກສະທາງກົດໝາຍອື່ນໆອີກ.

# ເອກະສານ

# ການຂຶ້ນບັນຍາຍຢູ່ ສຍຊ

# ຂອງ ຊ່ຽວຊານ ອາກິທາກະ ອາຊຳໂບ


ພື້ນຖານ
ຂອງການຕີຄວາມກົດໝາຍ
ໃນປະເທດຍີ່ປຸ່ນ
ວັນທີ 11 & 25 ພະຈິກ 2024
ທ່ານ ອາກິທາກະ ອາຊຳໂບ້
ຊ່ຽວຊານ ໂຄງການກົດໝາຍ JICA


ສາລະບານ
ຈຸດປະສົງ:
ວິທີການ ທີ່ຜູ້ພິພາກສາ ແລະ ທະນາຍຄວາມຂອງຍີ່ປຸ່ນ ສຶກສາ ແລະ ຕີຄວາມກົດໝາຍ
①ອາດບໍ່ມີຄຳຕອບທີ່ຊັດເຈນໃນແຕ່ລະກໍລະນີ
②ແລະທ່ານອາດມີຄວາມສັບສົນແດ່
ແຕ່
③ທ່ານຈະໄດ້ຮັບທັກສະທີ່ສຳຄັນທາງກົດໝາຍ
ບົດທີ 1
ຈະເຮັດແນວໃດຖ້າເກີດບັນຫາໃນຄະດີແພ່ງ?
ບົດທີ 2
ວິທີການຕີຄວາມກົດໝາຍ (ກໍລະນີຂອງ FIFA)
ບົດທີ 3
ວິທີການຕີຄວາມຕາມວັດຖຸປະສົງຂອງກົດໝາຍ
ບົດທີ 4
ສະຫຼຸບ: ສະຫຼຸບການຕີຄວາມກົດໝາຍ


ບົດທີ 1
ຈະເຮັດແນວໃດຖ້າເກີດປັນຫາໃນຄະດີແພ່ງ?
ພື້ນຖານຂອງການຕີຄວາມກົດໝາຍ


ຈະເຮັດແນວໃດຖ້າເກີດປັນຫາໃນຄະດີແພ່ງ?
• 1: ກວດເບິ່ງສັນຍາ
• ⇨ ກວດເບິ່ງວ່າມີການຕົກລົງກັນກ່ຽວກັບບັນຫານັ້ນ ຫຼືບໍ່.
• 2: ກວດເບິ່ງປະມວນກົດໝາຍແພ່ງ ຫຼືກົດໝາຍ ແລະ ດຳລັດທີ່ກ່ຽວຂ້ອງ
• ⇨ ກວດເບິ່ງວ່າມີລະບຽບການທົ່ວໄປ ຫຼືບໍ່.
• 3: ຈະເຮັດແນວໃດຖ້າບໍ່ມີມາດຕາກ່ຽວຂ້ອງໃນກົດໝາຍ (ຫຼືມີແຕ່ບໍ່ຊັດເຈນ)?
• ⇨ ປ່ອຍເລີຍ ບໍ່ສົນໃຈຕໍ່ປັນຫາ?

## ຈະເຮັດແນວໃດຖ້າເກີດບັນຫາໃນຄະດີແພ່ງ?

- **"ພວກເຮົາບໍ່ສາມາດເປັນນັກກົດໝາຍໄດ້ ດ້ວຍການທີ່ມີແຕ່ຈື່ກົດໝາຍທັງໝົດພຽງຢ່າງດຽວ"**

(ອ້າງອີງ: ເຄອິໂຊະ ຢາມາໂມໂຕະ "ບົດບັນຍາຍ ປະມວນກົດໝາຍແພ່ງ" (ພິມຄັ້ງທີ 2) ໜ້າ 2 (2005.4))

ພວກເຮົາຈໍາເປັນຕ້ອງພິຈາລະນາເບິ່ງວ່າ ກົດໝາຍຕ້ອງການສື່ຄວາມໝາຍຄືແນວໃດ.

ເພາະວ່າ:

- ⇨ ກົດໝາຍຈະກໍານົດແບບກວມລວມ.
- ⇨ ໃນກົດໝາຍອາດມີບາງບັນຫາທີ່ບໍ່ໄດ້ຂຽນໄວ້.
- ⇨ ກົດໝາຍ ບໍ່ໄດ້ຄາດຄະເນເຖິງທຸກການປ່ຽນແປງທາງສັງຄົມທີ່ເກີດຂຶ້ນໃໝ່.

**ກໍລະນີສຶກສາ: ເມື່ອໃດແທ້ ທີ່ເປັນຄວາມໝາຍຂອງ ""ເກີດອອກມາມີຊີວິດ"? (ປະມວນກົດໝາຍແພ່ງ ມາດຕາ 63: ການເລີ່ມມີຄວາມສາມາດທາງດ້ານກົດໝາຍຂອງບຸກຄົນ)**



1. ຕອນທີ່ແມ່ ເລີ່ມເຈັບທ້ອງ? (ເດັກກຽມໂຕຈະເກີດ)
2. ຕອນທີ່ເດັກອອກມາຈາກຮ່າງກາຍແມ່ ໄດ້ສ່ວນໜຶ່ງ?
3. ຕອນທີ່ເດັກອອກມາຈາກຮ່າງກາຍແມ່ ໄດ້ຢ່າງສົມບູນແລ້ວ?

## ຈະເຮັດແນວໃດຖ້າເກີດບັນຫາໃນຄະດີແພ່ງ?

- ເນື່ອງຈາກພວກເຮົາຕ້ອງຈັດການກັບທຸກເຫດການດ້ວຍກົດໝາຍ / ເຖິງວ່າມັນຈະເກີນຄວາມຄາດໝາຍຂອງເຮົາກໍ່ຕາມ
  - ⇨ ຈຳເປັນຕ້ອງຕີຄວາມກົດໝາຍ
- **ກົດໝາຍ:** ເປັນລະບຽບການລວມຂອງສັງຄົມ
  - ບາງຄັ້ງກົດໝາຍກໍບໍ່ໄດ້ອະທິບາຍໄວ້ຈະແຈ້ງສຳລັບກໍລະນີສະເພາະໃດໜຶ່ງ
  - ບາງຄັ້ງຕ້ອງມີ ການຕີຄວາມເພີ່ມເຕີມ ຈາກຜູ້ຊ່ຽວຊານ/ນັກວິຊາການກົດໝາຍ

ລັດຖະທຳມະນູນຂອງ ສປປ ລາວ ສະບັບປັບປຸງປີ 2015 ມາດຕາ 56 ຂໍ້ 2:
"ຄະນະປະຈຳສະພາແຫ່ງຊາດ ມີສິດໃນການຕີຄວາມໝາຍຂອງກົດໝາຍ" >ສະນັ້ນ, ພວກເຮົາຕ້ອງຄົ້ນຄ້ວາພາຍໃຕ້ຂອບເຂດດັ່ງກ່າວ.

## ຈະເຮັດແນວໃດຖ້າເກີດບັນຫາໃນຄະດີແພ່ງ?

- ການຕີຄວາມກົດໝາຍ

ຂັ້ນຕອນທີ 1:
ກວດເບິ່ງຄວາມໝາຍ ທາງດ້ານເຫດ ແລະ ຜົນຂອງມາດຕາ

ຂັ້ນຕອນທີ 2:
ກວດເບິ່ງຄວາມສຳພັນກັນລະຫວ່າງມາດຕາ

ຂັ້ນຕອນທີ 3: ກວດເບິ່ງວັດຖຸປະສົງຂອງມາດຕາ ທີ່ຖືກຄາດໄວ້
(ເປັນຫຍັງລັດຖະບານຈຶ່ງສ້າງມາດຕາດັ່ງກ່າວຂຶ້ນມາ?)

ແຕ່ລະມາດຕາຂອງກົດໝາຍໄດ້ຮັບການຮ່າງຂຶ້ນໂດຍລັດຖະບານ:

① ຢ່າງມີເຫດ ແລະ ຜົນ,

② ມີຄວາມສອດຄ່ອງກັນ,

③ ໂດຍມີວັດຖຸປະສົງສະເພາະ ທີ່ຜູ້ຮ່າງກົດໝາຍກຳນົດໄວ້



# ບົດທີ 2

ວິທີການ**ຕີຄວາມ**ກົດໝາຍ
(ກໍລະນີສຶກສາຂອງ FIFA)

ພື້ນຖານຂອງການຕີຄວາມກົດໝາຍ

## ວິທີການຕີຄວາມກົດໝາຍ
## (ຕົວຢ່າງຈາກ ການແຂ່ງຂັນບານເຕະຂອງ FIFA)

- ບານໂລກ (1 ທັນວາ 2022)
  - ຍີ່ປຸ່ນ vs ສະເປນ (2-1)





- Link for video

(Reference: Premier Soccer CH/YouTube)



# ວິທີການຕີຄວາມກົດໝາຍ

- ບານໂລກ (1 ທັນວາ 2022)
  - ຍີ່ປຸ່ນ vs ສະເປນ (2-1)
  - ຫຼັງຈາກເຫດການນີ້, ຍີ່ປຸ່ນ ເຕະເຂົ້າ 1 ໜ່ວຍ
- ສິ່ງທີ່ເປັນປະເດັນບັນຫາ:

ໃນຕອນນີ້, ໝາກບານໄດ້ຂ້າມເສັ້ນໄປແລ້ວ ຫຼື ບໍ່?



Reference : Nikkan Sports
(https://www.nikkansports.com/soccer/qatar2022/photonews/photonews_nsInc_202212020001236-0.html)

# ວິທີການຕີຄວາມກົດໝາຍ

- **ກະຕິກາການແຂ່ງຂັນບານເຕະ 22/23 (FIFA)**

ກົດຂໍ້ທີ 9, 1. ໝາກບານນອກການຫຼິ້ນ

- "ໝາກບານໄດ້ຜ່ານເສັ້ນປະຕູ ຫຼື ເສັ້ນຂອບສະໜາມໝົດໜ່ວຍ, ບໍ່ວ່າຈະຢູ່ພື້ນ ຫຼື ເທິງອາກາດ"

(ອ້າງອີງ : FIFA
https://www.ksi.is/library/Skrar/Domaramal/Laws%20of%20the%20Game%202022_23.pdf)




ອ້າງອີງ : NHK News Web
(https://www3.nhk.or.jp/news/html/20221202/k10013910591000.html)

## ວິທີການຕີຄວາມກົດໝາຍ



- ຂັ້ນຕອນທີ 1: ກວດເບິ່ງຄວາມໝາຍ ທາງດ້ານເຫດ ແລະ ຜົນ
  - "ໝາກບານໄດ້ຜ່ານເສັ້ນປະຕູ ຫຼື ເສັ້ນຂອບສະໜາມໝົດໝ່ອຍ, ບໍ່ວ່າຈະຢູ່ພື້ນ ຫຼື ເທິງອາກາດ"
- ໃນກໍລະນີນີ້:
  - ຍັງບໍ່ໄດ້ຜ່ານໝົດໝ່ອຍ

    = ຍັງບໍ່ທັນອອກ

Reference : Nikkan Sports (https://www.nikkansports.com/soccer/qatar2022/photonews/photonews_nsInc_202212020001236-0.html)

## ວິທີການຕີຄວາມກົດໝາຍ



- ກົດຂໍ້ທີ 9, 1. ໝາກບານນອກການຫຼິ້ນ
- **(ກໍລະນີສົມມຸດ)**
  - "ໝາກບານໄດ້ຜ່ານເສັ້ນປະຕູ ຫຼື ເສັ້ນຂອບສະໜາມ ~~ໝົດໝ່ອຍ~~, ບໍ່ວ່າຈະຢູ່ພື້ນ ຫຼື ເທິງອາກາດ"
- ໃນກໍລະນີນີ້: ຂໍ້ໃດທີ່ຖືວ່າບານອອກ?
  - 1. ຖືກເສັ້ນເຄິ່ງໝ່ອຍ
  - 2. ຜ່ານເສັ້ນໄປເຄິ່ງໝ່ອຍ
  - 3. ຜ່ານເສັ້ນໄປໝົດໝ່ອຍ ແລະ ອື່ນໆ

Reference : Nikkan Sports (https://www.nikkansports.com/soccer/qatar2022/photonews/photonews_nsInc_202212020001236-0.html)

## ວິທີການຕີຄວາມກົດໝາຍ

- ໃນກໍລະນີນີ້: ຂໍ້ໃດທີ່ຖືວ່າ ບານອອກ?
  - 1. ຖືກເສັ້ນເຄິ່ງໜ່ວຍ
  - 2. ຜ່ານເສັ້ນໄປເຄິ່ງໜ່ວຍ
  - 3. ຜ່ານເສັ້ນໄປໝົດໜ່ວຍ ແລະ ອື່ນໆ
- ທ່ານຄິດວ່າແນວໃດ? ກຳມະການຈຳເປັນຕ້ອງຕັດສິນທັນທີ
- ການຕັດສິນນີ້ອາດຈະເຮັດໃຫ້ຝ່າຍໃດຝ່າຍໜຶ່ງແພ້ ຫຼື ຊະນະ (ບົດບາດສຳຄັນ)



ອ້າງອີງ : Nikkan Sports (https://www.nikkansports.com/soccer/qatar2022/photonews/photonews_nsInc_202212020001236-0.html)

## ວິທີການຕີຄວາມກົດໝາຍ (ແນວຄິດພື້ນຖານ)

- ການຕີຄວາມກົດໝາຍ

ຂັ້ນຕອນທີ 1:
ກວດເບິ່ງຄວາມໝາຍດ້ານເຫດ ແລະ ຜົນ ຂອງມາດຕາ

ຂັ້ນຕອນທີ 2:
ກວດເບິ່ງຄວາມສຳພັນລະຫວ່າງມາດຕາ

ຂັ້ນຕອນທີ 3: ກວດເບິ່ງວັດຖຸປະສົງຂອງມາດຕາ ທີ່ຖືກຄາດໄວ້
(ເປັນຫຍັງລັດຖະບານຈຶ່ງສ້າງມາດຕາດັ່ງກ່າວຂຶ້ນມາ?)

# ວິທີການຕີຄວາມກົດໝາຍ

- ຂັ້ນຕອນທີ 2:  ກວດເບິ່ງຄວາມສຳພັນລະຫວ່າງ ມາດຕາ
- <u>ກົດຂໍ້ທີ 10  1. ການຍິງປະຕູ</u>

"ການຍິງປະຕູ ຈະເກີດຂຶ້ນເມື່ອໝາກບານໝົດໜ່ວຍໄດ້ຜ່ານ ເສັ້ນປະຕູເຂົ້າໄປ ລະຫວ່າງເສົາປະຕູທັງສອງຂ້າງ ແລະ ກ້ອງ ຄານ, ໂດຍທີ່ທີມຍິງປະຕູ ບໍ່ໄດ້ມີການລະເມີດກົດລະບຽບ"

- <u>ກົດຂໍ້ທີ 9  1. ໝາກບານ ອອກນອກການຫຼິ້ນ</u>

“ໝາກບານໄດ້ຜ່ານເສັ້ນປະຕູ ຫຼື ເສັ້ນຂອບສະໜາມ~~ໝົດໜ່ວຍ~~ > ໝົດໜ່ວຍ, ບໍ່ວ່າຈະຢູ່ພື້ນ ຫຼື ເທິງອາກາດ”

- ~~ໝົດໜ່ວຍ~~ > ໝົດໜ່ວຍ
- ການຕີຄວາມກົດໝາຍສາມາດເຮັດໄດ້ເມື່ອມີ:
  - ມີຄວາມຈຳເປັນ
    - ຈຳເປັນຕ້ອງຕັດສິນໃຈ ເພື່ອຊ່ວຍໃນການຫຼິ້ນຂອງເຂົາເຈົ້າດຳເນີນຕໍ່ ໃນຂະນະນັ້ນ.
  - ເປັນທີ່ຍອມຮັບໄດ້
    - ການຕີຄວາມໝາຍ ຈະເປັນໄປຕາມກົດໝາຍ ເນື່ອງຈາກກົດໝາຍມີເຈດຕະນາ ໃຫ້ເປັນແຕ່ເບື້ອງຕົ້ນ ເພື່ອໃຫ້ໄດ້<u>ຂໍ້ສະຫຼຸບ</u>ແບບນັ້ນ ຫຼື ຂໍ້ສະຫຼຸບນັ້ນຢູ່ໃນຂອບເຂດສິມມຸດຖານຂອງກົດໝາຍ.



# ບົດທີ 3

## ວິທີການຕີຄວາມຕາມວັດຖຸປະສົງຂອງກົດໝາຍ

ພື້ນຖານການໃຫ້ຄຳອະທິບາຍທາງກົດໝາຍ


ວິທີການຕີຄວາມກົດໝາຍ
• ເປັນຫຍັງຜູ້ພິພາກສາ, ໄອຍະການ ແລະ ທະນາຍຄວາມ ຈຶ່ງມີບົດບາດສຳຄັນ?
• ບໍ່ແມ່ນຍ້ອນມີແຕ່ຄວາມຮູ້ເທົ່ານັ້ນ
• ແຕ່ເຂົາເຈົ້າຍັງສາມາດ:
• ນຳໃຊ້ກົດໝາຍເພື່ອຜົນປະໂຫຍດຂອງສັງຄົມ
• ນຳໃຊ້ກົດໝາຍເພື່ອຄວາມຍຸຕິທຳ
• (ປະມວນກົດໝາຍແພ່ງ ມາດຕາ 8)
• ຊ່ວຍໃຫ້ໄດ້ຂໍ້ສະຫຼຸບທີ່ເໝາະສົມ / ເຖິງວ່າກົດໝາຍຈະບໍ່ໄດ້ກ່າວເຖິງໂດຍກົງກໍ່ຕາມ.
• ທັກສະສຳລັບຜູ້ປະກອບວິຊາຊີບກົດໝາຍ
• ຄວາມຮູ້ທາງດ້ານກົດໝາຍ = ອາວຸດ
• ການໃຫ້ຄຳອະທິບາຍທາງກົດໝາຍ = ເຕັກນິກໃນການນຳໃຊ້ອາວຸດ
• ທ່ານສາມາດນຳໃຊ້ອາວຸດ (ກົດໝາຍ) ໃດກໍ່ໄດ້ ເຖິງວ່າທ່ານຈະບໍ່ຮູ້ທຸກອາວຸດ (ກົດໝາຍ) ກໍ່ຕາມ


ກໍລະນີສຶກສາ: ຖ້າຫາກມີປ້າຍຕິດຢູ່ໜ້າຫ້ອງວ່າ:
"ຫ້າມນຳເອົາ ໝາ ເຂົ້າມາ"
ພວກເຮົາສາມາດນຳເອົາສັດຕ່າງໆເຫຼົ່ານີ້ເຂົ້າໄປໃນຫ້ອງໄດ້ ຫຼືບໍ່?
ແມວເຂົ້າໄດ້ບໍ່?
ແມງກະເບື້ອເຂົ້າໄດ້ບໍ່?
ໜີ ຫຼື ແຂ້ ເດເຂົ້າໄດ້ບໍ່?
ວິເຄາະວັດຖຸປະສົງຂອງປ້າຍ (ມາດຕາ) !!
20


"ຫ້າມນຳເອົາ ໝາ ເຂົ້າມາ"
ສຳລັບໂຮງແຮມ, ຈຸດປະສົງ ເພື່ອປົກປ້ອງໂຮງແຮມ ແລະ ແຂກຂອງໂຮງແຮມ, ສະນັ້ນ, ຄຳວ່າ "ໝາ" ຈຶ່ງອາດກວມທັງ
ສຳລັບສະຖາບັນຄົ້ນຄວ້າ, ຈຸດປະສົງ ເພື່ອປົກປ້ອງການຄົ້ນຄວ້າ ແລະ ໂລກພາຍນອກ ຈາກການຮົ່ວໄຫຼຂອງເຊື້ອແບັກທີເຣຍ.
ສະນັ້ນ, ສຳລັບສະຖາບັນຄົ້ນຄວ້າ ຄຳວ່າ " ໝາ " ອາດກວມເອົາທັງ
21


ກໍລະນີສຶກສາ: ເມື່ອໃດແທ້ທີ່ແມ່ນ
"ຕອນທີ່ເກີດອອກມາມີຊີວິດ"?
(ປະມວນກົດໝາຍແພ່ງ ມາດຕາ 63:
ການເລີ່ມມີຄວາມສາມາດທາງດ້ານກົດໝາຍຂອງ
ບຸກຄົນ)
1
2
3
1. ຕອນທີ່ແມ່ ເລີ່ມເຈັບທ້ອງ?
(ເດັກກຽມໂຕຈະເກີດ)
2. ຕອນທີ່ເດັກອອກມາຈາກ
ຮ່າງກາຍຂອງແມ່ໄດ້ເຄິ່ງໜຶ່ງ?
3. ຕອນທີ່ເດັກອອກມາຈາກ
ຮ່າງກາຍຂອງແມ່ຢ່າງສົມບູນ
ແລ້ວ?
22


ກໍລະນີ②
ປະມວນກົດໝາຍແພ່ງມາດຕາ 395 ການຍົກເລີກສັນຍາ
"ການລະເມີດເນື້ອໃນສຳຄັນຂອງສັນຍາ" ແມ່ນຫຍັງ?
ຜູ້ຂາຍສົ່ງສິນຄ້າຊ້າເປັນເວລາ 3 ວັນ ຕາມສັນຍາການຊື້-ຂາຍ.
ຖ້າສິນຄ້າດັ່ງກ່າວແມ່ນໂມງລາຄາແພງ ຈະເປັນແນວໃດ?
ຖ້າຫາກການສົ່ງສິນຄ້າບໍ່ແມ່ນຊ້າ 3 ວັນ ແຕ່ຊ້າເປັນ 1 ປີ ຈະເປັນແນວໃດ?
ຖ້າຫາກສິນຄ້າດັ່ງກ່າວ ແມ່ນເຄັກງານແຕ່ງງານ ຈະເປັນແນວໃດ?
• ຖ້າງານແຕ່ງງານມີກຳນົດຈະຈັດຂຶ້ນໃນວັນທີ 1 ສິງຫາ 2023?
ວິເຄາະວັດຖຸປະສົງຂອງມາດຕາ ແລະ ສັນຍາ!!


ບົດທີ 4
ສະຫຼຸບ: ສະຫຼຸບການຕີຄວາມກົດໝາຍ
ພື້ນຖານການໃຫ້ຄຳອະທິບາຍທາງກົດໝາຍ


ສະຫຼຸບການຕີຄວາມກົດໝາຍ
• ການຕີຄວາມກົດໝາຍ
ຂັ້ນຕອນທີ 1:
ກວດເບິ່ງຄວາມໝາຍດ້ານເຫດ ແລະ ຜົນ ຂອງມາດຕາ
ຂັ້ນຕອນທີ 2:
ກວດເບິ່ງຄວາມສໍາພັນລະຫວ່າງມາດຕາ
ຂັ້ນຕອນທີ 3: ກວດເບິ່ງວັດຖຸປະສົງຂອງມາດຕາ ທີ່ຖືກຄາດໄວ້
(ເປັນຫຍັງລັດຖະບານຈຶ່ງສ້າງມາດຕາດັ່ງກ່າວຂຶ້ນມາ?)
• ຄວນມີການອະທິບາຍກົດໝາຍເມື່ອ:
• ມີຄວາມຈໍາເປັນ
• ຈໍາເປັນຕ້ອງຕັດສິນໃຈ ເພື່ອພິຈາລະນາເຖິງຂໍ້ສະຫຼຸບທີ່ເໝາະສົມ
• ເປັນທີ່ຍອມຮັບໄດ້
• ການຕີຄວາມໝາຍ ຈະເປັນໄປຕາມກົດໝາຍ ເນື່ອງຈາກກົດໝາຍມີເຈດຕະນາ ໃຫ້ເປັນແຕ່ເບື້ອງຕົ້ນ ເພື່ອໃຫ້ໄດ້ຂໍ້ສະຫຼຸບແບບນັ້ນ ຫຼື ຂໍ້ສະຫຼຸບນັ້ນຢູ່ໃນຂອບເຂດສົມມຸດຖານຂອງກົດໝາຍ.


• ກົດໝາຍຕ້ອງການຈະສື່ເຖິງຫຍັງຈາກຂໍ້ຄວາມນີ້?
(ມາດຕາເຄົ້າ ແລະ ມາດຕາອື່ນທີ່ກ່ຽວຂ້ອງ)
• ວັດຖຸປະສົງຂອງມາດຕາ (ຫຼື ສັນຍາ) ແມ່ນຫຍັງ?
26


ຂອບເຂດຂອງການຕີຄວາມ
ຄວາມຄິດເຫັນແບບເສລີ
ໂດຍບໍ່ມີວັດຖຸປະສົງທາງກົດໝາຍ
ກົດໝາຍ
ວັດຖຸປະສົງຂອງກົດໝາຍ
(ເຈດຕະນາຂອງຜູ້ສ້າງກົດໝາຍ)
ບໍ່ອະນຸຍາດໃຫ້
ມີການຕີຄວາມໝາຍ
ຂອບເຂດຂອງການຕີຄວາມ
(ຢູ່ໃນນີ້ເທົ່ານັ້ນ)
ຜົນໄດ້ຮັບ
27


ສະຫຼຸບການຕີຄວາມກົດໝາຍ
• ການຕີຄວາມກົດໝາຍ
ຂັ້ນຕອນທີ 1:
ກວດເບິ່ງຄວາມໝາຍດ້ານເຫດ ແລະ ຜົນ ຂອງມາດຕາ
• ອ່ານເນື້ອໃນຂອງມາດຕາໃຫ້ລະອຽດທີ່ສຸດ!
• ຜູ້ສ້າງກົດໝາຍໄດ້ກຳນົດມາດຕານັ້ນ ດ້ວຍເຈດຕະນາ ຫຼື ວັດຖຸປະສົງສະເພາະ

## ສະຫຼຸບການຕີຄວາມກົດໝາຍ

- ການຕີຄວາມກົດໝາຍ

ຂັ້ນຕອນທີ 2:

ກວດເບິ່ງຄວາມສຳພັນລະຫວ່າງມາດຕາ

- ມາດຕາອື່ນທີ່ກ່ຽວຂ້ອງອາດຊ່ວຍໃຫ້ທ່ານເຂົ້າໃຈມາດຕານັ້ນໄດ້.
- ຜູ້ສ້າງກົດໝາຍໄດ້ສ້າງກົດໝາຍໃຫ້ສອດຄ່ອງກັນເທົ່າທີ່ຈະເປັນໄປໄດ້.
- ຖ້າມາດຕານັ້ນບໍ່ຊັດເຈນ ຫຼື ບໍ່ມີຄຳອະທິບາຍ, ມາດຕາອື່ນໆອາດຈະໃຫ້ແນວທາງໃນການເຂົ້າໃຈກົດໝາຍນັ້ນໄດ້ຫຼາຍຂຶ້ນ.

## ສະຫຼຸບການຕີຄວາມກົດໝາຍ

ຂັ້ນຕອນທີ 3: ກວດເບິ່ງວັດຖຸປະສົງຂອງມາດຕາ ທີ່ຖືກຄາດໄວ້

(ເປັນຫຍັງລັດຖະບານຈຶ່ງສ້າງມາດຕາດັ່ງກ່າວຂຶ້ນມາ?)

- ຜູ້ສ້າງກົດໝາຍມີຈຸດປະສົງສະເພາະສຳລັບມາດຕານັ້ນ
  - ທ່ານສາມາດສຳນຶກໄດ້ວ່າ: ຖ້າບໍ່ມີວັດຖຸປະສົງທີ່ແນ່ນອນໃດໜຶ່ງ ພວກເຂົາກໍ່ບໍ່ຈຳເປັນຕ້ອງສ້າງກົດໝາຍ ຫຼື ສ້າງແຕ່ລະມາດຕາຂຶ້ນມາ.
  - ຕົວຢ່າງ: ເພື່ອປົກປ້ອງປະຊາຊົນ, ພະນັກງານຂອງລັດ, ຜົນປະໂຫຍດຂອງການຄ້າຂາຍສິນຄ້າ, ສິດທິຂອງແມ່ຍິງ ແລະ ອື່ນໆ.
- ທ່ານຕ້ອງຊອກຫາ ວັດຖຸປະສົງທີ່ຜູ້ສ້າງກົດໝາຍໄດ້ກຳນົດໄວ້ ເພື່ອໃຫ້ໄດ້ຂໍ້ສະຫຼຸບທີ່ເໝາະສົມສຳລັບແຕ່ລະກໍລະນີ.
  - ຈາກກົດໝາຍ, ດຳລັດ, ເອກະສານທາງການຂອງສະພາແຫ່ງຊາດ ຫຼື ສານ ແລະ ອື່ນໆ.
- ຄົ້ນຫາ ແລະ ສຳນຶກວ່າ ເປັນຫຍັງຈຶ່ງຕ້ອງມີມາດຕາດັ່ງກ່າວ.
  - ຜູ້ໃດ ຫຼື ສິ່ງໃດ ທີ່ຄວນຈະໄດ້ຮັບການປົກປ້ອງ?



ພິຈາລະນາເຖິງວັດຖຸປະສົງຂອງ
ມາດຕາດັ່ງກ່າວທຸກຄັ້ງ
ທ່ານສາມາດຕີຄວາມ ວັດຖຸປະສົງ
ຂອງມາດຕາດັ່ງກ່າວ
ທ່ານສາມາດອະທິບາຍໄດ້ຢ່າງມີເຫດມີຜົນວ່າ
ເປັນຫຍັງບຸກຄົນນັ້ນຈຶ່ງຊະນະ
(ໃນແຕ່ລະກໍລະນີ)
ພື້ນຖານຂອງການຕີຄວາມກົດໝາຍ




ຂໍຂອບໃຈ
ສໍາລັບການຮັບຟັງ!
ທ່ານ ອາກິທາກະ ອາຊໍາໂບ້
ຊ່ຽວຊານ ໂຄງການກົດໝາຍຂອງ JICA
ພື້ນຖານຂອງການຕີຄວາມກົດໝາຍ
ໃນປະເທດຍີ່ປຸ່ນ

## 【ຖານຂໍ້ມູນກົດໝາຍຂອງ JICA】

ທ່ານສາມາດເຂົ້າເຖິງຖານຂໍ້ມູນໝາກຜົນຂອງໂຄງການສົ່ງເສີມການພັດທະນາ ແລະ ສ້າງຄວາມເຂັ້ມແຂງລັດທີ່ປົກຄອງດ້ວຍກົດໝາຍໃນຂົງເຂດຍຸຕິທຳ ຂອງອົງການ JICA ລວມທັງປຶ້ມຫົວນີ້ ໄດ້ທີ່ QR Code ຂ້າງລຸ່ມນີ້. ເພື່ອໃຫ້ເປັນປະໂຫຍດໃນການຍົກສູງຄວາມຮູ້ ແລະ ທັກສະທາງກົດໝາຍຂອງບັນດານັກກົດໝາຍປະຕິບັດລວມທັງນັກ ຮຽນນັກສຶກສາທີ່ກຳລັງສຶກສາກົດໝາຍ.

**ການເຜີຍແຜ່ຖານຂໍ້ມູນ ແລະ ເອກະສານທີ່ສ້າງໂດຍໂຄງການ J-ROL**

1

**ເອກະສານ ແລະ ປຶ້ມຄູ່ມືກົດໝາຍຂອງໂຄງການ**

ຂໍ້ມູນເພີ່ມຕື່ມກ່ຽວກັບກິດຈະກຳຂອງໂຄງການ
ທ່ານສາມາດ ຕິດຕາມໂດຍການສະແກນ QR code ດ້ານລຸ່ມ !!

2




ຕິດຕາມເຮົາໄດ້: https://www.facebook.com/jica.legal.laos

ການສຶກສາສາດແຫ່ງກົດໝາຍຂັ້ນພື້ນຖານ - ທັກສະການຕີຄວາມກົດໝາຍ -

---

ວັນທີ 01 ມີນາ ປີ 2025 “ພິມຄັ້ງທີ 1”

**ເຈົ້າຂອງລິຂະສິດ:** ອາກິທາກະ ອາຊຳໂບ

**ຈັດພິມໂດຍ:** JICA J-ROL Project (The Project for Promoting Development and Strengthening of the Role of Law in the Legal Sector・Phase II)

# The Basics of Legal Education

## The Skill of Legal Interpretation

Akitaka ASAMBO (JICA Expert)

**<u>ພິມຄັ້ງທີ 1:</u> ຈຳນວນ 5.000 ຫົວ, ທີ່ ໂຮງພິມ ປານຄຳຈຳປາ.**